*ພະລາດຊະບັນຍັດ*

*ອົງກອນຈັດສັນຄື້ນຄວາມຖີ່ແລະກຳກັບການປະກອບກິດຈະການ*

*ວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ແລະກິດຈະການໂທລະຄົມມະນາຄົມ*

*ປີ ຄ.ສ 2010*

*ພູມມິພົນອາດຸນຍະເດດ ປ.ຣ.*

*ໃຫ້ໄວ້ນະວັນທີ17ທັນວາ ປີ ຄ.ສ 2010*

*ເປັນປີທີ 65ໃນລາດຊະການປະຈຸບັນ*

ພະບາດສົມເດັດພະປໍລະມິນທະລະມະຫາພູມມິພົນອາດຸນຍະເດດ ມີພະບາລົມລາດຊະອົງການໂປດກ້າວໃຫ້ປະກາດວ່າ

ໂດຍທີ່ເປັນການສົມຄວນປັບປຸງກົດຫມາຍວ່າດ້ວຍອົງກອນຈັດສັນຄື້ນຄວາມຖີ່ແລະກຳກັບກິດຈະການກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ

ພະລາດຊະບັນຍັດນີ້ມີບົດບັນຍັດບາງປະການກ່ຽວກັບການຈຳກັດສິດແລະເສລີພາບຂອງບຸກຄົນຊຶ່ງມາດຕາ ປະກອບກັບມາດຕາ29ມາດຕາ35ມາດຕາ46ມາດຕາ41ມາດຕາ43ມາດຕາ45ມາດຕາ46ມາດຕາ46ແລະມາດຕາ47ມາດຕາ 61ແລະມາດຕາ64ຂອງລັດທະທຳມະນູນແຫ່ງລາດຊະອານາຈັກໄທ ບັນຍັດໃຫ້ກະທຳໄດ້ໂດຍອາໄສອຳນາດຕາມບົດບັນຍັດແຫ່ງກົດຫມາຍ

ຈຶ່ງຊົງພະກະລຸນາໂປດເກົ້າ ໃຫ້ກາພະລາດຊະບັນຍັດຂຶ້ນໄວ້ໂດຍຄຳແນະນຳແລະຍິນຍອມຂອງລັດຖະສະພາດັ່ງຕໍ່ໄປນີ້

ມາດຕາ ຢພະລາດຊະບັນຍັດນີ້ເອີ້ນວ່າ"ພະລາດຊະບັນຍັດອົງການຈັດສັນຄື້ນຄວາມຖີ່ແລະກຳກັບກິດຈະການກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສ 2010

ມາດຕາ 2 ພະລາດຊະບັນຍັດນີ້ໃຫ້ໃຊ້ບັງຄັບຕັ້ງແຕ່ມື້ຖັດຈາກມື້ປະກາດໃນລາດຊະກິດຈະນານຸເບກສາເປັນຕົ້ນໄປ

ມາດຕາ 3 ໃຫ້ຍົກເລີກພະລາດຊະບັນຍັດອົງການຈັດສັນຄື້ນຄວາມຖີ່ແລະກຳກັບກິດຈະການກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສ 2000

ມາດຕາ 4 ໃນພະລາດຊະບັນຍັດນີ້

"ຄື້ນຄວາມຖີ່"ຫມາຍຄວາມວ່າ ຄື້ນວິທະຍຸຫລືຄື້ນແຮດຊ່ຽນຊຶ່ງເປັນຄື້ນແມ່ເຫລັກໄຟຟ້າທີ່ມີຄວາມຖີ່ຕ່ຳກວ່າສາມລ້ານເມກກະເຮີດລົງມາທີ່ຖືກແຜ່ກະຈາຍໃນທີ່ວ່າງໂດຍປາດສະຈາກສື່ນຳທີ່ປະດິດຂຶ້ນ

"ໂທລະຄົມມະນາຄົມ"ຫມາຍຄວາມວ່າ ການສົ່ງ ການເຜີຍແຜ່ ຫລືການຮັບເຄື່ອງຫມາຍ ສັນຍານຕົວຫນັງສື ຕົວເລກ ຮູບ ສຽງ ລະຫັດ ຫລືສິ່ງອື່ນໃດຊຶ່ງສາມາດໃຫ້ເຂົ້າໃຈຄວາມຫມາຍໄດ້ໂດຍລະບົບຄື້ນຄວາມຖີ່ ລະບົບສາຍ ລະບົບແສງ ລະບົບແມ່ເຫລັກໄຟຟ້າ ຫລືລະບົບອື່ນ

“ວິທະຍຸຄົມມະນາຄົມ”ຫມາຍຄວາມວ່າ ການສົ່ງ ການເຜີຍແພ່ ຫລືການຮັບເຄື່ອງຫມາຍ ສັນຍານ ຕົວຫນັງສື ຕົວເລກ ຮູບ ສຽງ ລະຫັດ ຫລືສິ່ງອື່ນໃດຊຶ່ງສາມາດໃຫ້ເຂົ້າໃຈຄວາມຫມາຍໄດ້ດ້ວຍຄື່ນຄວາມຖີ່

“ວິທະຍຸກະຈາຍສຽງ”ຫມາຍຄວາມວ່າ ວິທະຍຸຄົມມະນາຄົມທີ່ສົ່ງຫລືເຜີຍແພ່ສຽງເພື່ອໃຫ້ບຸກຄົນທົ່ວໄປຮັບໄດ້ໂດຍຕົງ

“ວິທະຍຸໂທລະທັດ”ຫມາຍຄວາມວ່າ ວິທະຍຸຄົມມະນາຄົມທີ່ເຜີຍແພ່ຮູບແລະສຽງເພື່ອໃຫ້ບຸກຄົນທົ່ວໄປຮັບໄດ້ໂດຍຕົງ

“ກິດຈະການກະຈາຍສຽງ”ຫມາຍຄວາມວ່າ ກິດຈະການວິທະຍຸກະຈາຍສຽງແລະກິດຈະການກະຈາຍສຽງຊຶ່ງໃຫ້ບໍລິການ ການສົ່ງຂ່າວສານສາທາລະນະຫລືລາຍການໄປຍັງເຄື່ອງຮັບທີ່ສາມາດຮັບຟັງການໃຫ້ບໍລິການນັ້ນໆໄດ້ ບໍ່ວ່າຈະສົ່ງໂດຍຜ່ານລະບົບຄື່ນຄວາມຖີ່ ລະບົບສາຍ ລະບົບແສງ ລະບົບແມ່ເຫລັກໄຟຟ້າ ຫລືລະບົບອື່ນ ລະບົບໃດລະບົບຫນຶ່ງ ຫລືຫລາຍລະບົບຮວມກັນ ຫລືກິດຈະການອື່ນທຳນອງດຽວກັນທີ່ ກສທຊ.ກຳຫນົດໃຫ້ເປັນກິດຈະການກະຈາຍສຽງ

“ກິດຈະການໂທລະທັດ”ຫມາຍຖຶງວ່າ ກິດຈະການວິທະຍຸໂທລະທັດແລະກິດຈະການໂທລະທັດຊຶ່ງໃຫ້ບໍລິການການສົ່ງຂ່າວສານສາທາລະນະຫລືລາຍການໄປຍັງເຄື່ອງຮັບທີ່ສາມາດຮັບຊົມແລະຟັງການໃຫ້ບໍລິການນັ້ນໆໄດ້ ບໍ່ວ່າຈະສົ່ງໂດຍຜ່ານລະບົບຄື່ນຄວາມຖີ່ ລະບົບສາຍ ລະບົບແສງ ລະບົບແມ່ເຫລັກໄຟຟ້າ ຫລືລະບົບອື່ນ ລະບົບໃດລະບົບຫນຶ່ງ ຫລືຫລາຍລະບົບຮວມກັນ ຫລືກິດຈະການອື່ນທຳນອງດຽວກັນທີ່ ກສທຊ.ກຳຫນົດໃຫ້ເປັນກິດຈະການໂທລະທັດ

“ກິດຈະການວິທະຍຸຄົມມະນາຄົມ”ຫມາຍຄວາມວ່າ ກິດຈະການຊຶ່ງເປັນການຮັບແລະສົ່ງເຄື່ອງຫມາຍ ສັນຍານ ຕົວຫນັງສື ຕົວເລກ ຮູບ ສຽງ ລະຫັດ ຫລືສິ່ງອື່ນໃດທີ່ສາມາດໃຫ້ເຂົ້າໃຈຄວາມຫມາຍໄດ້ໂດຍລະບົບຄື່ນຄວາມຖີ່ ເພື່ອຄວາມມຸ້ງຫມາຍທາງໂທລະຄົມມະນາຄົມໃນກິດຈະການໃດກິດຈະການຫນຶ່ງໂດຍສະເພາະຫລືເປັນການສະເພາະກິດທີ່ບໍ່ແມ່ນເປັນການປະກອບກິດຈະການໂທລະຄົມມະນາຄົມຕາມກົດຫມາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມຫລືກິດຈະການກະຈາຍສຽງຫລືກິດຈະການໂທລະທັດຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ

“ກິດຈະການໂທລະຄົມມະນາຄົມ”ຫມາຍຄວາມວ່າ ກິດຈະການຊຶ່ງໃຫ້ບໍລິການສົ່ງ ການເຜີຍແຜ່ ຫລືການຮັບເຄື່ອງຫມາຍ ສັນຍານ ຕົວຫນັງສື ຕົວເລກ ຮູບ ສຽງ ລະຫັດ ຫລືສິ່ງອື່ນໃດ ຊຶ່ງສາມາດໃຫ້ເຂົ້າໃຈຄວາມຫມາຍໄດ້ໂດຍລະບົບຄື່ນຄວາມຖີ່ ລະບົບສາຍ ລະບົບແສງ ລະບົບແມ່ເຫລັກໄຟຟ້າ ຫລືລະບົບອື່ນ ລະບົບໃດລະບົບຫນຶ່ງ ຫລືຫລາຍລະບົບຮວມກັນ ແລະຮວມຖຶງກິດຈະການຊຶ່ງໃຫ້ບໍລິການດາວທຽມສື່ສານ ຫລືກິດຈະການອື່ນທີ່ ກສທຊ.ກຳຫນົດໃຫ້ເປັນກິດຈະການໂທລະຄົມມະນາຄົມ ແຕ່ບໍ່ລວມຖຶງກິດຈະການທີ່ເປັນກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການວິທະຍຸຄົມມະນາຄົມ

“ຕາຕະລາງກຳຫນົດຄື່ນຄວາມຖີ່”ຫມາຍຄວາມວ່າ ການກຳຫນົດຍ່ານຄວາມຖີ່ວິທະຍຸຂອງວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ວິທະຍຸຄົມມະນາຄົມ ໂທລະຄົມມະນາຄົມແລະການອື່ນເພື່ອໃຊ້ວຽກພາຍໃຕ້ເງື່ອນໄຂ ກສທຊ.ກຳຫນົດ

“ແຜນຄວາມຖີ່ວິທະຍຸ”ຫມາຍຄວາມວ່າການກຳຫນົດຊ່ວງຄວາມຖີ່ວິທະຍຸສຳຫລັບກິດຈະການວິທະຍຸກະຈາຍສຽງ ກິດຈະການວິທະຍຸໂທລະທັດ ກິດຈະການວິທະຍຸຄົມມະນາຄົມ ແລະກິດຈະການໂທລະຄົມມະນາຄົມ ເພື່ອໃຊ້ວຽກພາຍໃຕ້ເງື່ອນໄຂທີ່ ກສທຊ.ກຳຫນົດ

“ຈັດສັນຄື້ນຄວາມຖີ່”ຫມາຍຄວາມວ່າ ການອານຸຍາດໃຫ້ສະຖານີວິທະຍຸກະຈາຍສຽງ ສະຖານີວິທະຍະໂທລະທັດຫລືສະຖານີວິທະຍຸຄົມມະນາຄົມ ໃຊ້ຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸຕາມຕາຕະລາງກໍາຫນົດຄື້ນຄວາມຖີ່ຫລືແຜນຄວາມຖີ່ວິທະຍຸເພື່ອໃຊ້ວຽກພາຍໃຕ້ເງື່ອນໄຂທີ່ ກສທຊ.ກໍາຫນົດ

“ຊຸມຊົນ”ຫມາຍຄວາມວ່າ ກຸ່ມປະຊາຊົນທີ່ມີພື້ນທີ່ອາໄສໃນແຫລ່ງດຽວກັນບໍ່ວ່າຈະໃນເມືອງຫລືໃນຊົນນະບົດແລະໃຫ້ຫມາຍຄວາມລວມຖືງກຸ່ມປະຊາຊົນທີ່ມີຄວາມສົນໃຈຮ່ວມກັນແລະຢູ່ໃນພື້ນທີ່ໃກ້ຄຽງກັນຫລືສື່ສານຖືງກັນໄດ້ ໂດຍມີຜົນປະໂຫຍດດ້ານສັງຄົມແລະວັດທະນະທໍາກ່ຽວຂ້ອງເຊື່ອມໂຍງກັນ ເຮັດກິດຈະການອັນຊອບດ້ວຍກົດຫມາຍແລະສິນລະທໍາຮ່ວມກັນ ມີການດໍາເນີນການຢ່າງຕໍ່ເນື່ອງ ມີການຈັດການແລະການສະແດງເຈດຕະນາແທນກຸ່ມໄດ້

“ກອງທຶນ”ຫມາຍຄວາມວ່າ ກອງທຶນວິໄຈແລະພັດທະນາກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ເພື່ອປະໂຫຍດສາທາລະນະ

“ກະມະການ”ຫມາຍຄວາມວ່າ ກໍາມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ

“ພະນັກງານເຈົ້າຫນ້າທີ່”ຫມາຍຄວາມວ່າ ຜູ້ຊື່ງຄະນະກໍາມະການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ແຕ່ງຕັ້ງໃຫ້ປະຕິບັດຕາມພະລາດຊະບັນຍັດນີ້

ມາດຕາ 5 ໃຫ້ນາຍຍົກລັດຖະມົນຕີຮັກສາການຕາມພະລາດຊະບັນຍັດນີ້

## *ຫມວດທີ 1*

## *ຄະນະກໍາມະການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ*

-----------------

### *ສ່ວນທີ 1*

### *ອົງປະກອບ ຄຸນສົມບັດແລະລັກສະນະຕ້ອງຫ້າມຂອງກໍາມະການ*

----------------------

ມາດຕາ 6 ໃຫ້ມີຄະນະກໍາມະການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເອີ້ໂດຍຫຍໍ້ວ່າ”ກສທຊ.”ຈໍານວນ 11 ຄົນປະກອບດ້ວຍ

(1) ຜູ້ທີ່ມີຜົນງານຫລືມີຄວາມຮູ້ ແລະມີຄວາມຊ່ຽວຊານຫລືປະສົບການດ້ານກິດຈະການກະຈາຍສຽງຈໍານວນຫນື່ງຄົນແລະກິດຈະການໂທລະທັດ ຈໍານວນຫນື່ງຄົນ

(2) ຜູ້ທີ່ມີຜົນງານຫລືມີຄວາມຮູ້ ແລະມີຄວາມຊ່ຽວຊານຫລືປະສົບການດ້ານກິດຈະການໂທລະຄົມມະນາຄົມຈຳນວນສອງຄົນ

(3) ຜູ້ທີ່ມີຜົນງານຫລືມີຄວາມຮູ້ ແລະມີຄວາມຊ່ຽວຊານຫລືປະສົບການດ້ານກົດຫມາຍດ້ານເສດຖະສາດ ອັນເປັນປະໂຫຍດຕໍ່ການກຳກັບເບິ່ງແຍງກິດຈະການການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ດ້ານລະສອງຄົນ

(4) ຜູ້ທີ່ມີຜົນງານຫລືມີຄວາມຮູ້ ແລະມີຄວາມຊ່ຽວຊານຫລືປະສົບການດ້ານການຄຸ້ມຄອງຜູ້ບໍລິໂພກ ຫລືດ້ານການສົ່ງເສີມສິດແລະເສລີພາບຂອງປະຊາຊົນ ອັນເປັນປະໂຫຍດຕໍ່ການກຳກັບເບິ່ງແຍງກິດຈະການກະຈາຍສຽງແລະກິດຈະການໂທລະທັດ ຈຳນວນຫນຶ່ງຄົນ ແລະການກຳກັບເບິ່ງແຍງກິດຈະການໂທລະຄົມມະນາຄົມຈຳນວນຫນຶ່ງຄົນ

(5) ຜູ້ທີ່ມີຜົນງານຫລືມີຄວາມຮູ້ ແລະມີຄວາມຊ່ຽວຊານຫລືປະສົບການດ້ານການສຶກສາ ວັດທະນະທຳຫລືການ ພັດທະນາສັງຄົມ ອັນເປັນປະໂຫຍດຕໍ່ການກຳກັບເບິ່ງແຍງກິດຈະການກະຈາຍສຽງກິດຈະການໂທລະທັດແລະ ກິດຈະການໂທລະຄົມມະນາຄົມຈຳນວນຫນຶ່ງຄົນ

ໃຫ້ເລຂາທິການ ກສທຊ.ເປັນເລຂານຸການ ກສທຊ.

ມາດຕາ 7 ກຳມະການຕ້ອງມີຄຸນສົມບັດແລະບໍ່ມີລັກສະນະຕ້ອງຫ້າມດັ່ງຕໍ່ໄປນີ້

ກ.ຄຸນສົມບັດທົ່ວໄປ

(1) ມີສັນຊາດໄທໂດຍການເກີດ

(2) ມີອາຍຸບໍ່ຕ່ຳກວ່າສາມສິບຫ້າປີບໍລິບູນ ແຕ່ບໍ່ເກີນເຈັດສິບປີບໍລິບູນ

ຂ.ລັກສະນະຕ້ອງຫ້າມ

(1) ບໍ່ເປັນຜູ້ດຳລົງຕຳແຫນ່ງທາງການເມືອງ

(2) ບໍ່ເປັນຜູ້ດຳລົງຕຳແຫນ່ງໃດໃນພັກການເມືອງ

(3) ບໍ່ເປັນບຸກຄົນວິກົນຈະຫລິດຫລືຈິດຟັ່ນເຟືອນບໍ່ສົມປະກອບ

(4) ບໍ່ຕິດຢາເສບຕິດໃຫ້ໂທດ

(5) ບໍ່ເປັນບຸກຄົນລົ້ມລະລາຍຫລືເຄີຍເປັນບຸກຄົນລົ້ມລະລາຍທຸດຈະຫລິດ

(6) ບໍ່ເປັນບຸກຄົນທີ່ຕ້ອງຄຳພິພາກສາໃຫ້ຕິດຄຸກແລະຖືກຄຸມຂັງຢູ່ໂດຍຫມາຍຂອງສານ

(7) ບໍ່ເປັນບຸກຄົນທີ່ຕ້ອງຄຳພິພາກສາອັນຖືງທີສຸດວ່າກະທຳຄວາມຜິດໃດ ເວັ້ນແຕ່ເປັນຄວາມຜິດອັນໄດ້ກະທຳໂດຍປະຫມາດ ຄວາມຜິດສະຖານເບົາ ຫລືຄວາມຜິດຖານຫມິ່ນປະຫມາດ

(8) ບໍ່ເຄີຍຖືກໄລ່ອອກ ປົດອອກ ຫລືໃຫ້ອອກຈາກລາດຊະການ ຫນ່ວຍງານຂອງລັດຫລືລັດວິສາຫະກິດຫລືຈາກ ຫ ນ່ ວ ຍງານຂອງເອກະຊົນ ເພາະທຸດຈະຫລິດຕໍ່ຫນ້າທີ່ ຫລືປະພຶດຊົ່ວຢ່າງຮ້າຍແຮງ ຫລືຖືວ່າກະທຳການ ທຸດຈະຫລິດແລະປະພຶດບໍ່ຊອບໃນວົງລາດຊະການ

(9) ບໍ່ເຄີຍຕ້ອງຄໍາພິພາກສາຫລືຄໍາສັ່ງຂອງສານໃຫ້ຊັບສິນຕົກເປັນຂອງແຜ່ນດິນເພາະລ້ໍາລວຍຜິດປົກກະຕິຫືມີຊັບສິນເພີ່ມຂື້ນຜິດປົກກະຕິ

(10) ບໍ່ເປັນຕາລາການສານລັດຖະທໍາມະນູນ ກໍາມະການການເລືອກຕັ້ງ ຜູ້ຕວດການແຜ່ນດິນກໍາມະການປ້ອງກັນແລະປາບປາມການທຸດຈະລິດແຫ່ງຊາດ ກໍາມະການກວດເງິນແຜ່ນດິນ ຫລືກໍາມະການສິດທິມະນຸດຊະຍະຊົນແຫ່ງຊາດ

(11) ບໍ່ເຄີຍຖືກວຸດທິສະພາບມີມະຕິໃຫ້ຖອດຖອນອອກຈາກຕໍາແຫນ່ງ

(12) ບໍ່ເປັນຫລືເຄີຍເປັນກໍາມະການ ຜູ້ຈັດການ ຜູ້ບໍລິຫານ ທີປືກສາ ພະນັກງານ ຜູ້ຖືຫຸ້ນຫລືຫຸ້ນສ່ວນໃນບໍລິສັດຫ້າງຫຸ້ນສ່ວນຫລືນິຕິບຸກຄົນອື່ນໃນບັນດາທີ່ປະກອບທຸລະກິດດ້ານກິດຈະການກະຈາຍສຽງ ກິດຈະການໂທລະທັດ ຫລືກິດຈະການໂທລະຄົມມະນາຄົມ ໃນໄລຍະເວລາຫນຶ່ງປີກ່ອນໄດ້ຮັບການສະເຫນີຊື່ຕາມມາດຕາ 10ຫລືກ່ອນໄດ້ຮັບການຄັດເລືອກຕາມມາດຕາ15

(12) ບໍ່ຢູ່ໃນລະຫວ່າງຕ້ອງຫ້າມບໍ່ໃຫ້ດໍາລົງຕໍາແຫນ່ງທາງການເມືອງ

ມາດຕາ 8 ກໍາມະການຕ້ອງ

(1) ບໍ່ເປັນຂ້າລາດຊະການຊຶ່ງມີຕໍາແຫນ່ງຫລືເງິນເດືອນປະຈໍາ

(2) ບໍ່ເປັນພະນັກງານຫລືລູກຈ້າງຂອງຫນ່ວຍງານຂອງລັດ ລັດວິສາຫະກິດຫລືລາດຊະການສ່ວນທ້ອງຖິ່ນແລະບໍ່ເປັນກໍາມະການຫລືທີ່ປືກສາຂອງລັດວິສາຫະກິດຫລືຫນ່ວຍງານຂອງລັດ

(3) ບໍ່ປະກອບອາຊີບຫລືວິຊາຊີບອິສະຫລະອື່ນໃດທີ່ມີສ່ວນໄດ້ເສຍຫລືມີຜົນປະໂຫຍດຂັດແຍ້ງບໍ່ວ່າໂດຍຕົງຫລືໂດຍອ້ອມກັບການປະຕິບັດຫນ້າທີ່ໃນຕໍາແຫນ່ງກໍາມະການ

***ສ່ວນທີ2***

***ການໄດ້ມາຊຶ່ງລາຍຊື່ຜູ້ສົມຄວນ ໄດ້ຮັບເລືອກເປັນກໍາມະການ***

***ໂດຍວິທີການຄັດເລືອກກັນເອງ***

------------------------------

ມາດຕາ 9 ເພື່ອປະໂຫຍດໃນການສະເຫນີຊື່ຜູ້ສົມຄວນ ໄດ້ຮັບເລືອກເປັນກໍາມະການຕາມສ່ວນທີ4ໃຫ້ສະມາຄົມສະຖາບັນ ຫລືອົງກອນທີ່ມີລັກສະນະດັ່ງຕໍ່ໄປນີ້ມີສິດຂໍຂື້ທະບຽນໄວ້ຕໍ່ສໍານັກງານເລຂາທິການວຸດທິສະພາ

(1) ສະມາຄົມວິຊາຊີບດ້ານກິດຈະການກະຈາຍສຽງຫລືກິດຈະການໂທລະທັດແລະໄດ້ຈົດທະບຽນເປັນນິຕິບຸກຄົນມາ ແລ້ວເປັນເວລາບໍ່ຫນ້ອຍກວ່າຫ້າປີ

(2) ສະມາຄົມວິຊາຊີບດ້ານກິດຈະການໂທລະຄົມມະນາຄົມແລະໄດ້ຈົດທະບຽນເປັນນິຕິບຸກຄົນມາແລ້ວເປັນເວລາບໍ່ ຫນ້ອຍກວ່າຫ້າປີ

(3) ສະຖາບັນອຸດົມສຶກສາທີ່ເປັນນິຕິບຸກຄົນແລະມີການສອນໃນລະດັບປະລິນຍາໃນສາຂາວິຊານິເທດສາດ ວາລະ ສາສາດ ຫລືສື່ສານມວນຊົນ ເປັນເວລາບໍ່ຫນ້ອຍກວ່າຫ້າປີ

(4) ສະຖາບັນອຸດົມສຶກສາທີ່ເປັນນິຕິບຸກຄົນແລະມີການສອນໃນລະດັບປະລິນຍາໃນສາຂາວິຊາກ່ຽວກັບໂທລະ ຄົມມະນາຄົມ ເປັນເວລາບໍ່ຫນ້ອຍກວ່າຫ້າປີ

(5) ສະຖາບັນອຸດົມສຶກສາທີ່ເປັນນິຕິບຸກຄົນແລະມີການສອນໃນລະດັບປະລິນຍາໃນສາຂາວິຊານິຕິສາດເປັນເວລາບໍ່ຫນ້ອຍ ກວ່າຫ້າປີ

(6) ສະຖາບັນອຸດົມສຶກສາທີ່ເປັນນິຕິບຸກຄົນແລະມີການສອນໃນລະດັບປະລິນຍາໃນສາຂາວິຊາເສດຖະສາດເປັນ ເວລາບໍ່ ຫນ້ອຍກວ່າຫ້າປີ

(7) ອົງກອນເອກະຊົນທີ່ດຳເນີນການໂດຍບໍ່ແມ່ນການຫາຜົນກຳໄລຫລືລາຍໄດ້ມາແບ່ງປັນກັນ ຊຶ່ງມີວັດຖຸປະສົງຫລັກ ໃນດ້ານການຄຸ້ມຄອງສິດທິຂອງຜູ້ບໍລິໂພກ ຫລືການສົ່ງເສີມສິດແລະເສລີພາບຂອງປະຊາຊົນແລະຈົດທະບຽນເປັນ ນິຕິບຸກຄົນມາແລ້ວເປັນເວລາບໍ່ຫນ້ອຍກວ່າຫ້າປີ

(8) ອົງກອນເອກະຊົນທີ່ດຳເນີນການໂດຍບໍ່ແມ່ນການຫາຜົນກຳໄລຫລືລາຍໄດ້ມາແບ່ງປັນກັນ ຊຶ່ງມີວັດຖຸປະສົງຫລັກ ໃນດ້ານການສຶກສາ ວັດທະນະທຳ ຫລືການພັດທະນາສັງຄົມ ແລະຈົດທະບຽນເປັນນິຕິບຸກຄົນມາແລ້ວເປັນເວລາ ບໍ່ຫນ້ອຍກວ່າຫ້າປີ

ສະມາຄົມວິຊາຊີບຕາມວັກຫນຶ່ງຕ້ອງເປັນສະມາຄົມທີ່ມີວັດຖຸປະສົງຫລັກກ່ຽວຂ້ອງກັບວິຊາຊີບແລະມີສະມາຊິກຂອງ ສະມາຄົມເປັນຜູ້ປະກອບວິຊາຊີບໃນດ້ານກິດຈະການກະຈາຍສຽງ ກິດຈະການໂທລະທັດຫລືກິດຈະການໂທລະຄົມມະນາຄົມ

ສະມາຄົມຫລືອົງກອນທີ່ມີສິດຂໍຂຶ້ນທະບຽນຕາມ (1) (2) (7)ແລະ (8)ຕ້ອງເປັນສະມາຄົມຫລືອົງກອນທີ່ມີການດຳເນີນ ກິດຈະກຳຢ່າງຕໍ່ເນື່ອງແລະມີຜົນງານເປັນທີ່ປະຈັກແລະຖ້າສະມາຄົມຫລືອົງກອນໃດມີວັດຖຸປະສົງຫລັກຫລາຍດ້ານ ໃຫ້ເລືອກ ຂຶ້ນທະບຽນເປັນສະມາຄົມຫລືອົງກອນຕາມ(1) (2) (7)ແລະ (8)ຢ່າງໃດຢ່າງຫນຶ່ງເທົ່ານັ້ນ

ເມື່ອສຳນັກງານເລຂາທິການວຸດທິສະພາໄດ້ຮັບຈົດທະບຽນສະມາຄົມ ສະຖາບັນ ຫລືອົງກອນໃດຕາມວັກຫນຶ່ງແລ້ວໃຫ້ ເປັນອັນໃຊ້ໄດ້ ການວິນິໄສຂອງສານໃນພາຍຫລັງວ່າການຈົດທະບຽນນັ້ນເປັນການບໍ່ຊອບທຳໃຫ້ມີຜົນກະທົບຕໍ່ການທີ່ສຳນັກງານ ເລຂາທິການວຸດທິສະພາໄດ້ດຳເນີນການໄປແລ້ວກ່ອນວັນທີ່ສານມີຄຳວິນິໄສ

ສະມາຄົມ ສະຖາບັນ ຫລືອົງກອນໃດທີ່ຖືກປະຕິເສດການຂໍຂື້ນທະບຽນຕາມວັກຫນື່ງ ໃຫ້ມີສິດຟ້ອງຄະດີຕໍ່ສານປົກຄອງໄດ້ ແຕ່ການຟ້ອງຄະດີດັ່ງກ່າວບໍ່ເປັນເຫດໃຫ້ຕ້ອງລະງັບຫລືຊະລໍການດຳເນີນການສະເຫນີຊື່ຫລືການຄັດເລືອກຕາມພະລາດຊະບັນຍັດນີ້

ການຂື້ນທະບຽນສະມາຄົມ ສະຖາບັນ ແລະອົງກອນຕາມວັກຫນື່ງ ໃຫ້ເປັນໄປຕາມຫລັກເກນ ວິທີການແລະເງື່ອນໄຂທີ່ເລຂາທິການວຸດທິສະພາປະກາດກຳຫນົດ

ໃຫ້ສຳນັກງານເລຂາທິການວຸດທິສະພາປະກາດລາຍຊື່ສະມາຄົມ ສະຖາບັນ ຫລືອົງກອນທີ່ໄດ້ຮັບຈົດທະບຽນໄວ້ໃຫ້ຮູ້ໂດຍທົ່ວກັນແລະໃຫ້ບັນຊີລາຍຊື່ດັ່ງກ່າວໃຊ້ໄດ້ຕະຫລອດໄປຈົນກວ່າຈະມີການປັບປຸງແກ້ໄຂຕາມເງື່ອນໄຂທີ່ເລຂາທິການວຸດທິສະພາປະກາດກຳຫນົດ

ມາດຕາ 10 ເມື່ອມີເຫດທີ່ຕ້ອງມີການເລືອກແລະແຕ່ງຕັ້ງກຳມະການ ໃຫ້ສຳນັກງານເລຂາທິການວຸດທິສະພາປະກາດທາງວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ສື່ສິ່ງພິມ ແລະສື່ອີເລັກໂທນິກຢ່າງຫນ້ອຍເຈັດມື້ຕິດຕໍ່ກັນແລະໃຫ້ສະມາຄົມສະຖາບັນ ຫລືອົງກອນທີ່ໄດ້ຂື້ນທະບຽນແລ້ວຕາມມາດຕາ9 ທີ່ປະສົງຈະສະເຫນີຊື່ຜູ້ສົມຄວນໄດ້ຮັບເລືອກເປັນກຳມະການສະເຫນີຊື່ພ້ອມທັງຫນັງສືຍິນຍອມຂອງບຸກຄົນດັ່ງກ່າວພາຍໃນໄລຍະເວລາທີ່ເລຂາທິການວຸດທິສະພາປະກາດກຳຫນົດ ຕາມຫລັກເກນດັ່ງຕໍ່ໄປນີ້

(1) ສະມາຄົມວິຊາຊີບຕາມມາດຕາ 9(1) ແລະສະຖາບັນອຸດົມສຶກສາຕາມມາດຕາ9(3) ມີສິດສະເຫນີຊື່ບຸກຄົນຕາມມາດຕາ6(1)ໄດ້ສະມາຄົມຫື່ສະຖາບັນລະສອງຄົນ

(2) ສະມາຄົມວິຊາຊີບຕາມມາດຕາ9(2) ແລະສະຖາບັນອຸດົມສຶກສາຕາມມາດຕາ9(4) ມີສິດສະເຫນີຊື່ບຸກຄົນຕາມມາດຕາ6(2)ໄດ້ສະມາຄົມຫລືສະຖາບັນລະສອງຄົນ

(3) ສະຖາບັນອຸດົມສຶກສາມາດຕາ9(5) ມີສິດສະເຫນີຊື່ບຸກຄົນທີ່ມີຜົນງານຫລືມີຄວາມຮູ້ແລະມີຄວາມຊ່ຽວຊານຫລືປະສົບການດ້ານກົດຫມາຍຕາມມາດຕາ6(3) ໄດ້ສະຖາບັນລະສອງຄົນ

(4) ສະຖາບັນອຸດົມສຶກສາຕາມມາດຕາ9(6) ມີສິດສະເຫນີຊື່ບຸກຄົນທີ່ມີຜົນງານຫລືມີຄວາມຮູ້ແລະມີຄວາມຊ່ຽວຊານຫລືປະສົບການດ້ານເສດຖະສາດຕາມມາດຕາ6(3) ໄດ້ສະຖາບັນລະສອງຄົນ

(5) ອົງກອນເອກະສານຕາມມາດຕາ9(7) ມີສິດສະເຫນີຊື່ບຸກຄົນຕາມມາດຕາ6(4) ໄດ້ອົງກອນລະສອງຄົນ

(6) ອົງກອນເອກະຊົນຕາມມາດຕາ9(8) ມີສິດສະເຫນີຊື່ບຸກຄົນຕາມມາດຕາ6(5) ໄດ້ອົງກອນລະສອງຄົນ

ການທີ່ສະມາຄົມ ສະຖາບັນ ຫລືອົງກອນທີ່ຈົດທະບຽນໄວ້ຕາມມາດຕາ9ສະມາຄົມ ສະຖາບັນ ຫລືອົງກອນໃດບໍ່ສະເຫນີຊື່ຕາມວັກຫນື່ງບໍ່ວ່າດ້ວຍເຫດໃດ ບໍ່ເປັນເຫດໃຫ້ການຄັດເລືອກທີ່ດຳເນີນການຕໍ່ໄປຕ້ອງເສຍໄປ

ມາດຕາ 11 ເມື່ອຄົບກຳຫນົດໄລຍະເວລາຕາມມາດຕາ10 ແລ້ວ ໃຫ້ສຳນັກງານເລຂາທິການວຸດທິສະພາກວດສອບຄຸນສົມບັດຂອງຜູ້ໄດ້ຮັບການສະເຫນີຊື່ວ່າຖືກຕ້ອງຕາມທີ່ກຳຫນົດໄວ້ມາດຕາ7ແລະມາດຕາ10 ຫລືບໍ່ ໃນກໍລະນີທີ່ເຫັນວ່າຜູ້ໄດ້ຮັບການສະເຫນີຊື່ຜູ້ໃດມີຄຸນສົມບັດບໍ່ຖືກຕ້ອງຕາມມາດຕາ7ຫລືມາດຕາ10ໃຫ້ແຈ້ງສະມາຄົມສະຖາບັນ ຫລືອົງກອນຊື່ງສະເຫນີຊື່ບຸກຄົນນັ້ນດຳເນີນການສະເຫນີຊື່ໃຫມ່ພາຍໃນເວລາທີ່ເລຂາທິການວຸດທິສະພາກຳຫນົດເມື່ອພົ້ນກຳຫນົດດັ່ງກ່າວແລ້ວ ຫາກສະມາຄົມ ສະຖາບັນ ຫລືອົງກອນດັ່ງກ່າວບໍ່ສະເຫນີຊື່ໃຫ້ຖືວ່າສະຫລະສິດໃນການສະເຫນີຊື່

ເມື່ອພົ້ນກໍາຫນົດໄລຍະເວລາການສະເຫນີຊື່ຕາມວັກຫນຶ່ງຫລືຕາມມາດຕາ10ແລ້ວແຕ່ກໍລະນີແລ້ວຫາກຜູ້ໄດ້ຮັບການສະເຫນີຊື່ຕາຍຫລືຍົກເລີກຫນັງສືຍິນຍອມໃຫ້ສະເຫນີຊື່ ຫລືຂາດຄຸນສົມບັດບໍ່ວ່າດ້ວຍເຫດໃດໃຫ້ສໍານັກງານເລຂາທິການວຸດທິສະພາດໍາເນີນການຕໍ່ໄປ ໂດຍຈະບໍ່ດໍາເນີນການໃຫ້ມີການສະເຫນີຊື່ໃຫມ່ກໍ່ໄດ້

ມາດຕາ 12 ເມື່ອຄົບກໍາຫນົດໄລຍະເວລາການສະເຫນີຊື່ແລ້ວ ຫາກມີຜູ້ໄດ້ຮັບການສະເຫນີຊື່ຫນ້ອຍກວ່າສອງເທົ່າຂອງຈໍານວນຕາມທີ່ລະບຸໄວ້ໃນແຕ່ລະປະເພດຕາມມາດຕາ13(1)(2)(3)(4)ແລະ(5)ໃຫ້ເລາຂາທິການວຸດທິສະພາຂະຫຍາຍໄລຍະເວລາການສະເຫນີຊື່ໄປອີກບໍ່ເກີນສາມສິບມື້ນັບແຕ່ມື້ທີ່ຄົບກໍາຫນົດໄລຍະເວລາຕາມມາດຕາ10

ເມື່ອພົ້ນກໍາຫນົດໄລຍະເວລາທີ່ຂະຫຍາຍຕາມວັກຫນຶ່ງແລ້ວຍັງມີຜູ້ໄດ້ຮັບການສະເຫນີຊື່ຫນ້ອຍກວ່າທີ່ກໍາຫນົດໃນວັກຫນຶ່ງ ໃຫ້ປະທານສໍານັກງານນາຍົກລັດຖະມົນຕີ ປະທານກະຊວງກະລາໂຫມ ແລະປະທານກະຊວງເທັກໂນໂລຊີສາລະສົນເທດແລະການສື່ສານ ຮ່ວມກັນສະເຫນີຊື່ຜູ້ສົມຄວນໄດ້ຮັບເລືອກເປັນກໍາມະການຊຶ່ງມີຄຸນສົມບັດແລະບໍ່ມີລັກສະນະຕ້ອງຫ້າມຕາມມາດຕາ6ແລະມາດຕາ7ໃຫ້ຄົບໃນແຕ່ລະປະເພດຕາມຈໍານວນທີ່ກໍາຫນົດໃນວັກຫນຶ່ງ

ມາດຕາ13 ເມື່ອພົ້ນກໍາຫນົດໄລຍະເວລາການສະເຫນີຊື່ຕາມມາດຕາ 10ມ າ ດ ຕ າ 11ຫ ລື ມ າ ດ ຕ າ 12 ແລ້ວແຕ່ກໍລະນີແລ້ວ ໃຫ້ສໍານັກງານເລາຂາທິການວຸດທິສະພາຈັດໃຫ້ຜູ້ໄດ້ຮັບການສະເຫນີຊື່ທັງຫມົດມາປະຊຸມຮ່ວມກັນເພື່ອຄັດເລືອກກັນເອງຕາມວິທີການດັ່ງຕໍ່ໄປນີ້

(1)ຜູ້ໄດ້ຮັບການສະເຫນີຊື່ຕາມມາດຕາ10(1)ຈາກສະມາຄົມວິຊາຊີບຕາມມາດຕາ9(1)ຄັດເລືອກກັນເອງໃຫ້ເຫລືອຜູ້ທີ່ສົມຄວນເປັນກໍາມະການຕາມມາດຕາ6(1)ຈໍານວນສອງຄົນໂດຍແຍກເປັນດ້ານກິດຈະການກະຈາຍສຽງຈໍານວນຫນຶ່ງຄົນ ແລະດ້ານກິດຈະການໂທລະທັດຈໍານວນຫນຶ່ງຄົນແລະຜູ້ໄດ້ຮັບການສະເຫນີຊື່ຕາມມາດຕາ10(1)ຈາກສະຖາບັນຕາມມາດຕາ9(3)ຄັດເລືອກກັນເອງໃຫ້ເຫລືອຜູ້ທີ່ສົມຄວນເປັນກໍາມະການຕາມມາດຕາ6(1)ຈໍານວນສອງຄົນ ໂດຍແຍກເປັນດ້ານກິດຈະການກະຈາຍສຽງຈໍານວນຫນຶ່ງຄົນແລະດ້ານກິດຈະການໂທລະທັດຈໍານວນຫນຶ່ງຄົນ

(2)ຜູ້ໄດ້ຮັບການສະເຫນີຊື່ຕາມມາດຕາ10(2)ຈາກສະມາຄົມວິຊາຊີບຕາມມາດຕາ9(2)ຄັດເລືອກກັນເອງໃຫ້ເຫລືອຜູ້ທີ່ສົມຄວນເປັນກໍາມະການຕາມມາດຕາ6(2)ຈໍານວນສອງຄົນແລະຜູ້ໄດ້ຮັບການສະເຫນີຊື່ຕາມມາດຕາ10(2)ຈາກສະຖາບັນຕາມມາດຕາ9(4)ຄັດເລືອກກັນເອງໃຫ້ເຫລືອຜູ້ທີ່ສົມຄວນເປັນກໍາມະການຕາມມາດຕາ6(2)ຈໍານວນສອງຄົນ

(3)ຜູ້ໄດ້ຮັບການສະເຫນີຊື່ຕາມມາດຕາ10(3)ແລະມາດຕາ10(4)ໃຫ້ແຍກກັນຄັດເລືອກກັນເອງໃຫ້ເຫລືອຜູ້ທີ່ສົມຄວນເປັນກໍາມະການຕາມມາດຕາ6(3)ຈໍານວນແປດຄົນໂດຍແຍກເປັນດ້ານກົດຫມາຍຈໍານວນສີ່ຄົນແລະດ້ານເສດຖະສາດຈໍານວນສີ່ຄົນ

(4)ຜູ້ໄດ້ຮັບການສະເຫນີຊື່ຕາມມາດຕາ10(5)ຄັດເລືອກກັນເອງໃຫ້ເຫລືອຜູ້ທີ່ສົມຄວນເປັນກໍາມະການຕາມມາດຕາ6(4) ຈໍານວນສີ່ຄົນ ໂດຍແຍກເປັນດ້ານການກໍາກັບເບິ່ງແຍງກິດຈະການກະຈາຍສຽງແລະກິດຈະການໂທລະທັດຈໍານວນສອງຄົນແລະດ້ານກໍາກັບເບິ່ງແຍງກິດຈະການໂທລະຄົມມະນາຄົມ ຈໍານວນສອງຄົນ

(5)ຜູ້ໄດ້ຮັບການສະເຫນີຊື່ຕາມມາດຕາ10(6)ຄັດເລືອກກັນເອງໃຫ້ເຫລືອຜູ້ທີ່ສົມຄວນເປັນກໍາມະການຕາມມາດຕາ6(5) ຈໍານວນສອງຄົນ

ການລົງຄະແນນຄັດເລືອກໃຫ້ເປັນໄປຕາມຫລັກເກນແລະວິທີການທີ່ເລຂາທິການວຸດທິສະພາກໍາຫນົດ ໂດຍໃຫ້ຜູ້ໄດ້ຮັບຄະແນນສູງສຸດຮຽງຕາມລໍາດັບເປັນຜູ້ໄດ້ຮັບການຄັດເລືອກ

ເມື່ອໄດ້ຄັດເລືອກບຸກຄົນຕາມວັກຫນຶ່ງແລະວັກສອງແລ້ວ ໃຫ້ຖືວ່າຜູ້ທີ່ໄດ້ຮັບການຄັດເລືອກຕາມ(1) (2) (3) (4)ແລະ(5)ເປັນຜູ້ທີ່ມີຄຸນສົມບັດຕາມມາດຕາ6 (1) (2) (3) (4) ແລະ(5) ແລະໃຫ້ເປັນທີ່ສຸດທັງນີ້ ການດຳເນີນການຄັດເລືອກດັ່ງກ່າວຕ້ອງດຳເນີນການໃຫ້ສຳເລັດພາຍໃນໄລຍະເວລາບໍ່ເກີນເກົ້າສິບມື້ນັບແຕ່ມື້ທີ່ໄດ້ປະກາດໃຫ້ສະມາຄົມ ສະຖາບັນ ຫລືອົງກອນທີ່ໄດ້ຂຶ້ນທະບຽນໄວ້ສະເຫນີຊື່ຜູ້ສົມຄວນໄດ້ຮັບເລືອກເປັນກຳມະການ

***ສ່ວນທີ3***

***ການໄດ້ມາຊຶ່ງລາຍຊື່ຜູ້ສົມຄວນ ໄດ້ຮັບເລືອກເປັນກຳມະການ***

***ໂດຍວິທີການສັນຫາ***

---------------------

ມາດຕາ 14 ເມື່ອມີເຫດທີ່ຕ້ອງມີການເລືອກແລະແຕ່ງຕັ້ງກຳມະການ ໃຫ້ມີຄະນະກຳມະການສັນຫາກຳມະການຄະນະຫນຶ່ງມີຈຳນວນສິບຫ້າຄົນ ເຮັດຫນ້າທີ່ຄັດເລືອກຜູ້ສົມຄວນໄດ້ຮັບເລືອກເປັນກຳມະການ ປະກອບດ້ວຍ

(1) ປະທານກຳມະການສິດທິມະນຸດຊະຍະຊົນແຫ່ງຊາດ

(2) ປະທານສະພາທີ່ປຶກສາເສດຖະກິດແລະສັງຄົມແຫ່ງຊາດ

(3) ປະຫລັດສຳນັກນາຍຍົກລັດຖະມົນຕີ

(4) ປະຫລັດກະຊວງກະລາໂຫມ

(5) ປະຫລັດກະຊວງເທັກໂນໂລຊີສາລະສົນເທດແລະການສື່ສານ

(6) ຜູ້ອຳນວຍການສູນເທັກໂນໂລຊີອີເລັກໂທນິກແລະຄອມພິວເຕີ້ແຫ່ງຊາດ

(7) ນາຍຍົກສະພາວິສາວະກອນ

(8) ປະທານສະພາຄົນພິການທຸກປະເພດແຫ່ງປະເທດໄທ

(9) ນາຍຍົກສະມາຄົມວິຊາການນິເທດສາດແລະການສື່ສານມວນຊົນແຫ່ງປະເທດໄທ

(10) ນາຍຍົກສະມາພັນສະມາຄົມວິຊາຊີບວິທະຍຸກະຈາຍສຽງແລະວິທະຍຸໂທລະທັດ

(11) ປະທານຄະນະກຳມະການປະສານງານອົງກອນພັດທະນາເອກະຊົນ

(12) ປະທານກຳມະການສະມາຄົມສົ່ງເສີມສະຖາບັນກຳມະການບໍລິສັດໄທ

(13) ປະທານສະພາວິຊາຊີບຂ່າວວິທະຍຸແລະໂທລະທັດໄທ

(14) ປະທານສະຫະພັນວິທະຍຸຊຸມຊົນແຫ່ງຊາດ

(15) ປະທານສະຫະພັນອົງກອນຜູ້ບໍລິໂພກ

ປະທານແລະກຳມະການສັນຫາບໍ່ມີສິດສະຫມັກເປັນກຳມະການ ແລະອົງກອນຕາມວັກຫນຶ່ງ ບໍ່ມີສິດຂຶ້ນທະບຽນເພື່ອສະເຫນີຊື່ຜູ້ສົມຄວນໄດ້ຮັບເລືອກເປັນກຳມະການຕາມສ່ວນທີ2

ໃຫ້ຄະນະກຳມະການສັນຫາຄັດເລືອກກຳມະການສັນຫາຄົນຫນຶ່ງ ເປັນປະທານກຳມະການສັນຫາແລະຄັດເລືອກກຳມະການສັນຫາອີກຄົນຫນຶ່ງ ເປັນເລຂານຸການຄະນະກຳມະການສັນຫາ

ໃນກໍລະນີທີ່ບໍ່ມີກຳມະການສັນຫາໃນຕຳແຫນ່ງໃດ ຫລືມີແຕ່ບໍ່ສາມາດປະຕິບັດຫນ້າທີ່ໄດ້ ຖ້າກຳມະການສັນຫາທີ່ເຫລືອຢູ່ນັ້ນມີຈຳນວນບໍ່ຫນ້ອຍກວ່າເຄິ່ງຫນຶ່ງ ໃຫ້ຄະນະກຳມະການສັນຫາປະກອບດ້ວຍກຳມະການສັນຫາທີ່ເຫລືອຢູ່

ໃຫ້ສຳນັກງານເລຂາທິການວຸດທິສະພາເຮັດຫນ້າທີ່ເປັນຫນ່ວຍທຸລາການໃນການດຳເນີນການສັນຫາແລະຄັດເລືອກກຳມະການ

ມາດຕາ 15 ໃນການດຳເນີນການຄັດເລືອກກຳມະການຕາມສ່ວນນີ້ ໃຫ້ສຳນັກງານເລຂາທິການວຸດທິສະພາປະກາດການເປີດຮັບສະຫມັກບຸກຄົນຜູ້ມີຄຸນສົມບັດຕາມມາດຕາ6 ໃຫ້ຮູ້ເປັນການທົ່ວໄປຜ່ານທາງວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ສື່ສິ່ງພິມ ແລະສື່ອີເລັກໂທນິກຢ່າງຫນ້ອຍສາມສິບມື້ຕິດຕໍ່ກັນ

ຜູ້ມີສິດສະຫມັກຮັບຄັດເລືອກເປັນກຳມະການຈະຕ້ອງບໍ່ເປັນຜູ້ທີ່ໄດ້ຮັບການສະເຫນີຊື່ຈາກສະມາຄົມ ສະຖາບັນ ຫລືອົງກອນຕາມມາດຕາ10

ເມື່ອພົ້ນກຳຫນົດໄລຍະເວລາຕາມວັກຫນຶ່ງແລ້ວ ໃຫ້ຄະນະກຳມະການສັນຫາພິຈາລະນາຄັດເລືອກຜູ້ສະຫມກທີ່ມີຄຸນສົມບັດທີ່ຈະເປັນກຳມະການໃຫ້ໄດ້ຈຳນວນສອງທ່ານຂອງຈຳນວນກຳມະການຕາມມາດຕາ6 (1) (2) (3) (4) ແລະ(5)

ຫລັກເກນແລະວິທີການຄັດເລືອກໃຫ້ເປັນໄປຕາມທີ່ເລຂາທິການວຸດທິສະພາກຳຫນົດ ໂດຍໃຫ້ຜູ້ໄດ້ຮັບຄະແນນສູງສຸດຮຽງຕາມລຳດັບເປັນຜູ້ໄດ້ຮັບການຄັດເລືອກ

ໃຫ້ນຳຄວາມໃນມາດຕາ 13 ວັກສາມ ມາໃຊ້ບັງຄັບການຄັດເລືອກຜູ້ສົມຄວນໄດ້ຮັບເລືອກເປັນກຳມະການຂອງຄະນະກຳມະການສັນຫາໂດຍອານຸໂລມ

ຜູ້ທີ່ໄດ້ຮັບຄວາມເສຍຫາຍຈາກການຄັດເລືອກ ອາດຍື່ນຄຳຟ້ອງຕໍ່ສານປົກຄອງໄດ້ ແຕ່ບໍ່ເປັນເຫດໃຫ້ຕ້ອງລະງັບຫລືຊະລໍການດຳເນີນການໃດໆທີ່ໄດ້ດຳເນີນໄປແລ້ວ ເວັ້ນແຕ່ສານປົກຄອງຈະມີຄຳພິພາກສາຫລືຄຳສັ່ງເປັນຢ່າງອື່ນ ທັງນີ້ ຫາກສານປົກຄອງມີຄຳພິພາກສາຫລືຄຳສັ່ງໃດໆອັນເປັນຜົນໃຫ້ບຸກຄົນທີ່ໄດ້ຮັບການຄັດເລືອກຂາດຄຸນສົມບັດຫລືມີລັກສະນະຕ້ອງຫ້າມ ຫລືໄດ້ຮັບການຄັດເລືອກໂດຍບໍ່ຊອບທຳດ້ວຍກົດຫມາຍ ໃຫ້ຜູ້ທີ່ໄດ້ຮັບການຄັດເລືອກນັ້ນພົ້ນຈາກຕຳແຫນ່ງນັບແຕ່ມື້ທີ່ສານປົກຄອງມີຄຳພິພາກສາຫລືຄຳສັ່ງ

## *ສ່ວນທີ 4*
## *ການເລືອກແລະການແຕ່ງຕັ້ງກຳມະການ*

----------------

ມາດຕາ 16 ເມື່ອໄດ້ລາຍຊື່ຜູ້ສົມຄວນໄດ້ຮັບເລືອກເປັນກຳມະການຈາກການຄັດເລືອກກັນເອງຕາມສ່ວນທີ2

ແລະຈາກການສັນຫາຕາມສ່ວນທີ3ແລ້ວ ໃຫ້ເລຂາທິການວຸດທິສະພານຳລາຍຊື່ດັ່ງກ່າວທັງຫມົດມາລວມເປັນບັນຊີດຽວ

ກັນ ຫາກມີຜູ້ສົມຄວນໄດ້ຮັບເລືອກເປັນກໍາມະການບໍ່ໜ້ອຍກວ່າສອງເທົ່າຂອງຈໍານວນກໍາມະການຕາມທີ່ກໍາໜົດໄວ້ໃນມາດຕາ 6 (1) (2) (3) (4) ແລະ (5) ໃຫ້ສະເໜີບັນຊາລາຍຊື່ ພ້ອມທັງປະຫວັດແລະຜົນງານຂອງບຸກຄົນດັ່ງກ່າວ ຊຶ່ງຕ້ອງລະບຸໃຫ້ຊັດເຈນຫລືມີເຫລັກຖານສະແດງໃຫ້ເຫັນວ່າເປັນບຸກຄົນທີ່ມີຄວາມເໝາະສົມຕາມມາດຕາ6ຕໍ່ປະທານວຸດທິສະພາພາຍໃນສາມສິບມື້ນັບແຕ່ມື້ທີ່ໄດ້ຮັບລາຍຊື່ຕາມມາດຕາ13ແລະມາດຕາ15ເພື່ອນໍາສະເໜີໃຫ້ວຸດທິສະພາພິຈາລະນາແລະມີມະຕິເລືອກຕໍ່ໄປ

ໃນກໍລະນີທີ່ການດໍາເນີນການໂດຍວິທີການຄັດເລືອກກັນເອງຕາມສ່ວນທີ2ຫລືວິທີການສັນຫາຕາມສ່ວນທີ 3

ວິທີການໃດວິທີການໜຶ່ງດໍາເນີນການບໍ່ສໍາເລັດພາຍໃນກໍາໜົດເວລາຕາມມາດຕາ13ວັກສາມ ໃຫ້ເລຂາທິການວຸດທິສະພານໍາລາຍຊື່ຜູ້ສົມຄວນໄດ້ຮັບເລືອກເປັນກໍາມະການ ໂດຍວິທີການທີ່ດໍາເນີນການແລ້ວພາຍໃນກໍາໜົດເວລາພ້ອມທັງປະຫວັດແລະຜົນງານຂອງບຸກຄົນດັ່ງກ່າວ ຊຶ່ງຕ້ອງລະບຸໃຫ້ຊັດເຈນຫລືມີຫລັກຖານສະແດງໃຫ້ເຫັນວ່າເປັນບຸກຄົນທີ່ມີຄວາມເໝາະສົມຕາມມາດຕາ6ສະເໜີຕໍ່ປະທານວຸດທິສະພາພາຍໃນສາມສິບມື້ນັບແຕ່ເພື່ອພົ້ນກໍາໜົດໄລຍະເວລາຕາມມາດຕາ13ແລະມາດຕາ15ເພື່ອນໍາສະເໜີໃຫ້ວຸດທິສະພາພິຈາລະນາແລະມີມະຕິເລືອກຕໍ່ໄປ

ມາດຕາ 17ໃຫ້ວຸດທິສະພາມີມະຕິເລືອກບຸກຄົນຈາກບັນຊີລາຍຊື່ທີ່ເລຂາທິການວຸດທິສະພາໃຫ້ແລ້ວພາຍໃນຫົກສິບມື້ນັບແຕ່ມື້ທີ່ໄດ້ຮັບບັນຊີລາຍຊື່ ເພື່ອໃຫ້ໄດ້ກໍາມະການຕາມມາດຕາ6ໂດຍໃຫ້ຜູ້ຊຶ່ງໄດ້ຮັບຄະແນນສູງສຸດຮຽງຕາມລໍາດັບເປັນຜູ້ໄດ້ຮັບເລືອກເປັນກໍາມະການ ຊຶ່ງຕ້ອງກະທໍາໂດຍວິທີລົງຄະແນນລັບແລ້ວແຈ້ງໃຫ້ຜູ້ໄດ້ຮັບການເລືອກຮູ້

ເມື່ອລ່ວງພົ້ນກໍາໜົດເວລາຕາມວັກໜຶ່ງ ຖ້າຍັງມີຜູ້ໄດ້ຮັບເລືອກເປັນກໍາມະການບໍ່ຄົບຕາມຈໍານວນທີ່ກໍາໜົດໃນມາດຕາ 6ໃຫ້ປະທານວຸດທິສະພາແຈ້ງໃຫ້ນາຍຍົກລັດຖະມົນຕີຮູ້ແລະໃຫ້ນາຍຍົກລັດຖະມົນຕີນໍາບັນຊີລາຍຊື່ສະເໜີຄະນະລັດຖະມົນຕີເພື່ອພິຈາລະນາແລະດໍາເນີນການເພື່ອໃຫ້ໄດ້ກໍາມະການຕາມມາດຕາ6ໃຫ້ຄົບຈໍານວນໂດຍຕ້ອງດໍາເນີນການໃຫ້ແລ້ວພາຍໃນສາມສິບມື້ນັບແຕ່ມື້ທີ່ນາຍຍົກລັດຖະມົນຕີໄດ້ຮັບແຈ້ງ

ໃຫ້ຜູ້ໄດ້ຮັບການເລືອກເປັນກໍາມະການກວດວັກໜຶ່ງ ຫລືວັກສອງ ແລ້ວແຕ່ກໍລະນີ ປະຊຸມຮ່ວມກັນພາຍໃນສິບຫ້າມື້ນັບແຕ່ມື້ທີ່ຜູ້ໄດ້ຮັບເລືອກເປັນກໍາມະການຄົບຈໍານວນແລ້ວເພື່ອຄັດເລືອກຜູ້ສົມຄວນເປັນປະທານກໍາມະການຄົນໜຶ່ງແລະຮອງປະທານກໍາມະການສອງຄົນ ແລ້ວແຈ້ງຜົນໃຫ້ນາຍຍົກລັດຖະມົນຕີຮູ້ ແລະໃຫ້ນາຍຍົກລັດຖະມົນຕີນໍາຄວາມຂື້ນກາບບັງຄົມທູນເພື່ອຊົງພະກະລຸນາໂປດເກົ້າແຕ່ງຕັ້ງຕໍ່ໄປ

ມາດຕາ 18 ໃນກໍລະນີທີ່ຜູ້ໄດ້ຮັບເລືອກຕາມມາດຕາ17ມີລັກສະນະຕ້ອງຫ້າມຕາມມາດຕາ8(1)(2)ຫລື(3)ນາຍຍົກລັດຖະມົນຕີຈະນໍາຄວາມຂື້ນກາບບັງຄົມທູນເພື່ອຊົງພະກະລຸນາໂປດເກົ້າແຕ່ງຕັ້ງໄດ້ຕໍ່ເມື່ອຜູ້ນັ້ນໄດ້ລາອອກຈາກການເປັນບຸກຄົນຕາມມາດຕາ8(1)ຫລື(2)ຫລືສະແດງຫລັກຖານໃຫ້ເປັນທີ່ເຊື່ອຖືໄດ້ວ່າຕົນໄດ້ເລີກປະກອບອາຊີບຫລືວິຊາຊີບຕາມມາດຕາ 8(3)ແລ້ວ ຊຶ່ງຕ້ອງກະທໍາພາຍໃນສິບຫ້າມື້ນັບແຕ່ມື້ທີ່ໄດ້ຮັບເລືອກ ແຕ່ຖ້າຜູ້ນັ້ນບໍ່ໄດ້ລາອອກ ຫລືບໍ່ໄດ້ເລີກປະກອບອາຊີບຫລືວິຊາຊີບອິສະຫລະພາຍໃນເວລາທີ່ກໍາໜົດໃຫ້ຖືວ່າຜູ້ນັ້ນບໍ່ເຄີຍໄດ້ຮັບເລືອກໃຫ້ເປັນກໍາມະການ ແລະໃຫ້ວຸດທິສະພາເລືອກກໍາມະການໃໝ່ຈາກບັນຊີລາຍຊື່ທີ່ເລຂາທິການວຸດທິສະພາສະເໜີຕາມມາດຕາ16

## ***ສ່ວນທີ 5***

## ***ວາລະການດໍາລົງຕໍາແໜ່ງແລະການພົ້ນຈາກຕໍາແໜ່ງຂອງກໍາມະການ***

--------------------------

ມາດຕາ 19 ກຳມະການມີວາລະການດຳລົງຕຳແໜ່ງຫົກປີນັບແຕ່ມື້ທີ່ພະມະຫາກະສັດຊົງແຕ່ງຕັ້ງແລະໃຫ້ດຳລົງຕຳແໜ່ງໄດ້ພຽງວາລະດຽວ

ໃຫ້ກຳມະການຊຶ່ງພົ້ນຈາກຕຳແໜ່ງຕາມວາລະ ຢູ່ໃນຕຳແໜ່ງເພື່ອປະຕິບັດໜ້າທີ່ຕໍ່ໄປຈົນກວ່າຈະມີພະບະລົມມະລາດຊະອົງການໂປດເກົ້າແຕ່ງຕັ້ງກຳມະການຂຶ້ນໃໝ່

ກ່ອນຄົບກຳໜົດຕາມວາລະເປັນເວລາບໍ່ໜ້ອຍກວ່າເກົ້າສິບມື້ໃຫ້ສຳນັກງານເລຂາທິການວຸດທິສະພາດຳເນີນການຈັດໃຫ້ມີການສະເໜີຊື່ແລະແຕ່ງຕັ້ງກຳມະການຂຶ້ນໃໝ່ໃຫ້ແລ້ວເສັດໂດຍໄວ

ມາດຕາ 20 ນອກຈາກການພົ້ນຈາກຕຳແໜ່ງຕາມວາລະ ກຳມະການພົ້ນຈາກຕຳແໜ່ງເມື່ອ

(1) ຕາຍ

(2) ມີອາຍຸຄົບເຈັດສິບປີບໍລິບູນ

(3) ລາອອກ

(4) ຂາດຄຸນສົມບັດຫລືມີລັກສະນະຕ້ອງຫ້າມຕາມມາດຕາ7

(5) ກະທຳການອັນເປັນການຝ່າຝືນມາດຕາ8

(6) ວຸດທິສະພາມີມະຕິໃຫ້ພົ້ນຈາກຕຳແໜ່ງຕາມມາດຕາ21

(7) ວຸດທິສະພາມີມະຕິໃຫ້ຖອດຖອນຈາກຕຳແໜ່ງຕາມກົດໝາຍປະກອບລັດຖະທຳມະນູນວ່າດ້ວຍການປ້ອງກັນແລະປາບປາມການທຸດຈະຫລິດ

ການພົ້ນຈາກຕຳແໜ່ງກຳມະການຕາມ(1)(2)ຫລື(3)ໃຫ້ນຳຄວາມກາບບັງຄົມທູນເພື່ອຊົງຊາບຖ້າເປັນການພົ້ນຈາກຕຳແໜ່ງຕາມ(4)(5) (6)ຫລື(7)ໃຫ້ນຳຄວາມກາບບັງຄົມທູນເພື່ອມີພະບາລົມມະລາດຊະອົງການໃຫ້ພົ້ນຈາກຕຳແໜ່ງ ພະບາລົມມະລາດຊະອົງການດັ່ງກ່າວໃຫ້ມີຜົນຕັ້ງແຕ່ມື້ທີ່ຂາດຄຸນສົມບັດຫລືມີລັກສະນະຕ້ອງຫ້າມຫລືມື້ທີ່ກະທຳການອັນເປັນການຝ່າຝືນ ຫລືມື້ທີ່ວຸດທິສະພາມີມະຕິໃຫ້ພົ້ນຈາກຕຳແໜ່ງ ຫລືມື້ທີ່ຖືກຖອດຖອນຈາກຕຳແໜ່ງແລ້ວແຕ່ກໍລະນີ

ເມື່ອມີກໍລະນີຕາມວັກໜຶ່ງ ໃຫ້ກຳມະການເທົ່າທີ່ເຫລືອຢູ່ປະຕິບັດໜ້າທີ່ຕໍ່ໄປໄດ້ແລະໃຫ້ຖືວ່າ ກສທຊ.ປະກອບດ້ວຍກຳມະການເທົ່າທີ່ເຫລືອຢູ່ ແຕ່ທັງນີ້ຈະຕ້ອງມີຈຳນວນບໍ່ໜ້ອຍກວ່າຫົກຄົນ

ໃນກໍລະນີທີ່ກຳມະການພົ້ນຈາກຕຳແໜ່ງກ່ອນວາລະ ໃຫ້ຜູ້ໄດ້ຮັບແຕ່ງຕັ້ງໃຫ້ດຳລົງຕຳແໜ່ງແທນ ຢູ່ໃນຕຳແໜ່ງເທົ່າກັບວາລະທີ່ເຫລືອຢູ່ຂອງກຳມະການຊຶ່ງຕົນແທນ ແລະໃນກໍລະນີທີ່ວາລະທີ່ເຫລືອຢູ່ບໍ່ຮອດສາມປີໃຫ້ຜູ້ນັ້ນມີສິດໄດ້ຮັບການແຕ່ງຕັ້ງອີກວາລະໜຶ່ງໄດ້

ໃນກໍລະນີທີ່ປະທານກຳມະການຫລືຮອງປະທານກຳມະການພົ້ນຈາກຕຳແໜ່ງຕາມວັກໜຶ່ງ ໃຫ້ ກສທຊ.ປະຊຸມກັນເພື່ອເລືອກກຳມະການຄົນໜຶ່ງເປັນປະທານກຳມະການຫລືຮອງປະທານກຳມະການ ແລ້ວແຈ້ງໃຫ້ນາຍົກລັດຖະມົນຕີຮູ້ ແລະ

ໃຫ້ນາຍົກລັດຖະມົນຕີນໍາຄວາມຂຶ້ນກາບບັງຄົມທູນເພື່ອຊົງພະກະລຸນາໂປດເກົ້າແຕ່ງຕັ້ງເປັນປະທານກໍາມະການຫລືຮອງປະທານກໍາມະການແລ້ວແຕ່ກໍລະນີ

ມາດຕາ 21 ສະມາຊິກສະພາຜູ້ແທນລາດຊະດອນຫລືສະມາຊິກວຸດທິສະພາບໍ່ຫນ້ອຍກວ່າຫນຶ່ງໃນສີ່ຂອງຈໍານວນສະມາຊິກທັງຫມົດເທົ່າທີ່ມີຢູ່ຂອງແຕ່ລະສະພາ ມີສິດຮ້ອງຂໍຕໍ່ປະທານວຸດທິສະພາເພື່ອໃຫ້ວຸດທິສະພາມີມະຕິໃຫ້ກໍາມະການພົ້ນຈາກຕໍາແຫນ່ງເພາະເຫດທີ່ກໍາມະການນັ້ນມີຄວາມປະພຶດເສື່ອມເສຍຢ່າງຮ້າຍແຮງຫລືບົກພ່ອງຕໍ່ຫນ້າທີ່ຢ່າງຮ້າຍແຮງ

ມະຕິຂອງວຸດທິສະພາວັກຫນຶ່ງຕ້ອງໄດ້ຄະແນນສຽງບໍ່ຫນ້ອຍກວ່າສາມໃນຫ້າຂອງຈໍານວນສະມາຊິກທັງຫມົດເທົ່າທີ່ມີຢູ່

ມາດຕາ 22 ເມື່ອປາກົດວ່າ ກສທຊ.ບໍ່ປະຕິບັດຫນ້າທີ່ຕາມທີ່ກົດຫມາຍກໍາຫນົດຢ່າງມີປະສິດທິພາບໃຫ້ບຸກຄົນຕໍ່ໄປນີ້ມີສິດຮ້ອງຂໍຕໍ່ປະທານວຸດທິສະພາເພື່ອໃຫ້ວຸດທິສະພາມີມະຕິໃຫ້ ກສທຊ.ພົ້ນຈາກຕໍາແຫນ່ງທັງຄະນະ

(1) ສະມາຊິກສະພາຜູ້ແທນລາດຊະດອນຈໍານວນບໍ່ຫນ້ອຍກວ່າຫນຶ່ງໃນສີ່ຂອງຈໍານວນສະມາຊິກທັງຫມົດເທົ່າທີ່ມີຢູ່ຂອງສະພາຜູ້ແທນລາດຊະດອນ

(2) ສະມາຊິວຸດທິສະພາຈໍານວນບໍ່ຫນ້ອຍກວ່າຫນຶ່ງໃນສີ່ຂອງຈໍານວນສະມາຊິກທັງຫມົດເທົ່າທີ່ມີຢູ່ຂອງວຸດທິສະພາ

(3) ປະຊາຊົນຜູ້ໃຊ້ບໍລິການຊຶ່ງໄດ້ຮັບຜົນກະທົບຈາກການກະທໍາຕາມວັກຫນຶ່ງຈໍານວນບໍ່ຫນ້ອຍກວ່າຊາວພັນຄົນ ທັງນີ້ ໂດຍເຮັດເປັນຄໍາຮ້ອງຍື່ນຕໍ່ປະທານວຸດທິສະພາຕາມຫລັກເກນທີ່ປະທານວຸດທິສະພາກໍາຫນົດ

ມະຕິຂອງວຸດທິສະພາຕາມວັກຫນຶ່ງຕ້ອງໄດ້ຄະແນນສຽງບໍ່ຫນ້ອຍກວ່າສອງໃນສາມຂອງຈໍານວນສະມາຊິກທັງຫມົດເທົ່າທີ່ມີຢູ່ ໂດຍໃນການລົງມະຕິນັ້ນຕ້ອງນໍາລາຍງານຂອງຄະນະກໍາມະການຕິດຕາມແລະປະເມີນຜົນການປະຕິບັດທີ່ໄດ້ສົ່ງມາຍັງວຸດທິສະພາຕາມມາດຕາ72ມາພິຈາລະນາປະກອບດ້ວຍ

ໃນກໍລະນີທີ່ກໍາມະການພົ້ນຈາກຕໍາແຫນ່ງທັງຄະນະຕາມວັກຫນຶ່ງ ໃຫ້ຄະນະກໍາມະການທີ່ພົ້ນຈາກຕໍາແຫນ່ງຍັງຄົງຮັກສາການໃນຕໍາແຫນ່ງນັ້ນຕໍ່ໄປພຽງເທົ່າທີ່ຈໍາເປັນຈົນກວ່າຄະນະກໍາມະການຊຸດໃຫມ່ຈະເຂົ້າຮັບຫນ້າທີ່

## *ສ່ວນທີ6*

## *ການປະຊຸມແລະອໍານາດຫນ້າທີ່ຂອງຄະນະກໍາມະການ*

-------------

ມາດຕາ 23 ການປະຊຸມ ການລົງມະຕິ ແລະການປະຕິບັດວຽກຂອງ ກສທຊ.ໃຫ້ເປັນໄປຕາມລະບຽບທີ່ ກສທຊ. ກໍາຫນົດ

ໃນການປະຊຸມ ຖ້າມີການພິຈາລະນາເລື່ອງທີ່ກໍາມະການຜູ້ໃດມີສ່ວນໄດ້ເສຍ ກໍາມະການຜູ້ນັ້ນບໍ່ມີສິດເຂົ້າປະຊຸມ

ໃນການປະຕິບັດຫນ້າທີ່ ກສທຊ.ອາດມອບຫມາຍໃຫ້ກໍາມະການຄົນຫນຶ່ງຫລືຫລາຍຄົນປະຕິບັດວຽກແທນ ກສທຊ.ໄດ້ ແຕ່ ກສທຊ.ຈະປະຕິເສດຄວາມຮັບຜິດເພາະເຫດທີ່ໄດ້ມອບຫມາຍໃຫ້ກໍາມະການໄປເຮັດແທນແລ້ວບໍ່ໄດ້

ມາດຕາ 24ການປະຕິບັດຫນ້າທີ່ ກສທຊ.ແລະ ກທຄ.ໃນເລື່ອງທີ່ກ່ຽວຂ້ອງຫລືມີຜົນກະທົບຕໍ່ປະໂຫຍດສາທາລະນະຕ້ອງກະທໍາໂດຍມະຕິຂອງທີ່ປະຊຸມ ແລະຕ້ອງເປີດເຜີຍລາຍງານການປະຊຸມພ້ອມທັງຜົນການລົງມະຕິຂອງທີ່ປະຊຸມທັງລາຍ

ບຸກຄົນແລະທັງຄະນະໃຫ້ສາທາລະນະຊົນຮູ້ຜ່ານທາງສື່ອີເລັກໂທນິກຂອງສຳນັກງານ ກສທຊ.ແລະໂດຍວິທີການອື່ນທີ່ເຫມາະສົມຕາມທີ່ ກສທຊ.ປະກາດກຳຫນົດ

ຂໍ້ມູນທີ່ປາກົດຢູ່ໃນລາຍງານການປະຊຸມເລື່ອງໃດມີລັກສະນະຕາມທີ່ກົດຫມາຍວ່າດ້ວຍຂໍ້ມູນຂ່າວສານຂອງລາດຊະການກຳຫນົດບໍ່ໃຫ້ຕ້ອງເປີດເຜີຍກໍ່ໄດ້ ກສທຊ.ອາດມີມະຕິໃຫ້ເປີດເຜີຍຂໍ້ມູນສະເພາະໃນສ່ວນນັ້ນໄດ້

ການເປີດເຜີຍລາຍງານການປະຊຸມພ້ອມທັງຜົນການລົງມະຕິຕາມວັກຫນຶ່ງ ຕ້ອງດຳເນີນການພາຍໃນໄລຍະເວລາບໍ່ເກີນສາມສິບມື້ນັບແຕ່ມື້ທີ່ໄດ້ມີການລົງມະຕິ ເວັ້ນແຕ່ມີເຫດຈຳເປັນໃຫ້ຂະຫຍາຍເວລາອອກໄປໄດ້ອີກບໍ່ເກີນສິບຫ້າມື້ ແຕ່ຕ້ອງສະແດງເຫດຜົນແລະຄວາມຈຳເປັນທີ່ຕ້ອງຂະຫຍາຍເວລາດ້ວຍ

ມາດຕາ 25 ໃຫ້ກຳມະການເປັນຜູ້ດຳລົງຕຳແຫນ່ງລະດັບສູງຕາມກົດປະກອບລັດຖະທຳມະນູນວ່າດ້ວຍການປ້ອງກັນແລະປາບປາມການທຸດລະຫິດແລະເປັນເຈົ້າພະນັກງານຕາມປະມວນກົດຫມາຍອາຍາ

ມາດຕາ 26 ໃຫ້ປະທານກຳມະການ ຮອງປະທານກຳມະການ ແລະກຳມະການປະຕິບັດຫນ້າທີ່ເຕັມເວລາ ປະທານກຳມະການ ຮອງປະທານກຳມະການ ແລະກຳມະການ ໄດ້ຮັບຄ່າຕອບແທນເຫມົາຈ່າຍເປັນລາຍເດືອນຕາມທີ່ກຳຫນົດໃນພະລາດຊະດີກາ

ປະທານກຳມະການ ຮອງປະທານກຳມະການ ແລະກຳມະການ ອາດໄດ້ຮັບຄ່າໃຊ້ຈ່າຍອັນກ່ຽວກັບການເດີນທາງໄປປະຕິບັດຫນ້າທີ່ຕ່າງທ້ອງທີ່ໄດ້ບໍ່ເກີນອັດຕາທີ່ກຳຫນົດໃນພະລາດຊະດີກາ

ມາດຕາ 27 ໃຫ້ ກສທຊ.ມີອຳນາດຫນ້າທີ່ດັ່ງຕໍ່ໄປນີ້

(1) ຈັດເຮັດແຜນແມ່ບົດການບໍລິຫານຄື່ນຄວາມຖີ່ ຕາຕະລາງກຳຫນົດຄື່ນຄວາມຖີ່ແຫ່ງຊາດ ແຜນແມ່ບົດກິດຈະການກະຈາຍສຽງແລະກິດຈະການໂທລະທັດ ແຜນແມ່ບົດກິດຈະການໂທລະຄົມມະນາຄົມ ແຜນຄວາມຖີ່ວິທະຍຸ ແລະແຜນເລກຫມາຍໂທລະຄົມມະນາຄົມ

(2) ກຳຫນົດລັກສະນະແລະປະເພດຂອງກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມ

(3) ກຳຫນົດລັກສະນະແລະປະເພດຂອງກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(4) ພິຈາລະນາອານຸຍາດແລະກຳກັບເບິ່ງແຍງການໃຊ້ຄື່ນຄວາມຖີ່ແລະເຄື່ອງວິທະຍຸຄົມມະນາຄົມໃນການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມ ຫລືໃນກິດຈະການວິທະຍຸ ຄົມມະນາຄົມແລະກຳຫນົດຫລັກເກນແລະວິທີການກ່ຽວກັບການອານຸຍາດ ເງື່ອນໄຂ ຫລືຄ່າທຳນຽມການອານຸ ຍາດດັ່ງກ່າວ

(5) ກຳຫນົດຫລັກເກນ ການໃຊ້ຄື່ນຄວາມຖີ່ໃຫ້ເປັນໄປຢ່າງມີປະສິດທິພາບແລະປາດສະຈາກການລົບກວນຊຶ່ງກັນແລະກັນທັງໃນກິດຈະການປະເພດດຽວກັນແລະລະຫວ່າງກິດຈະການແຕ່ລະປະເພດ

(6) ພິຈາລະນາອານຸຍາດແລະກຳກັບເບິ່ງແຍງການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ເພື່ອໃຫ້ຜູ້ໃຊ້ບໍລິການໄດ້ຮັບບໍລິການທີ່ມີຄຸນນະພາບ ປະສິດທິພາບ ວ່ອງໄວ ຖືກຕ້ອງແລະເປັນທຳແລະກຳຫນົດຫລັກເກນແລະວິທີການກ່ຽວກັບການອານຸຍາດ ເງື່ອນໄຂ ຫລືຄ່າທຳນຽມການ ອານຸຍາດດັ່ງກ່າວ

(7) ພິຈາລະນາອານຸຍາດແລະກຳກັບເບິ່ງແຍງການໃຊ້ເລກໝາຍໂທລະຄົມມະນາຄົມ ແລະກຳໜົດຫລັກເກນແລະວິທີການກ່ຽວກັບການອານຸຍາດ ເງື່ອນໄຂ ຫລືຄ່າທຳນຽມການອານຸຍາດດັ່ງກ່າວ

(8) ພິຈາລະນາອານຸຍາດແລະກຳກັບເບິ່ງແຍງການໃຊ້ເລກໝາຍໂທລະຄົມມະນາຄົມ ແລະກຳໜົດຫລັກເກນແລະວິທີການກ່ຽວກັບການອານຸຍາດ ເງື່ອນໄຂ ຫລືຄ່າທຳນຽມການອານຸຍາດດັ່ງກ່າວ

(8)ກຳໜົດຫລັກເກນແລະວິທີການໃນການໃຊ້ຫລືເຊື່ອມຕໍ່ ແລະຫລັກເກນແລະວິທີການໃນການກຳໜົດອັດຕາຄ່າໃຊ້ຈ່າຍຫລືຄ່າເຊື່ອມຕໍ່ໂຄງຂ່າຍໃນການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ທັງໃນກິດຈະການປະເພດດຽວກັນແລະລະຫວ່າງກິດຈະການແຕ່ລະປະເພດໃຫ້ເປັນທຳຕໍ່ຜູ້ໃຊ້ບໍລິການ ຜູ້ໃຫ້ບໍລິການແລະຜູ້ລົງທຶນ ຫລືລະຫວ່າງຜູ້ໃຫ້ບໍລິການໂຄທລະຄົມມະນາຄົມ ໂດຍຄຳນຶງຖືງປະໂຫຍດສາທາລະນະເປັນສຳຄັນ

(9) ກຳໜົດໂຄງສ້າງອັດຕາຄ່າທຳນຽມແລະໂຄງສ້າງອັດຕາຄ່າບໍລິການໃນກິດຈະການກະຈາຍສຽງ ກິດຈະການ ໂທລະທັດແລະກິດຈະການໂທລະຄົມມະນາຄົມໃຫ້ເປັນທຳຕໍ່ຜູ້ໃຊ້ບໍລິການແລະຜູ້ໃຫ້ບໍລິການໂດຍຄຳຖືງຖືງ ປະໂຫຍດສາທາລະນະເປັນສຳຄັນ

(10) ກຳໜົດມາດຕະຖານແລະລັກສະນະພືງປະສົງທາງດ້ານເທັກນິກໃນການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມແລະໃນກິດຈະການວິທະຍຸຄົມມະນາຄົ

(11) ກຳໜົດມາດຕະການເພື່ອປ້ອງກັນບໍ່ໃຫ້ມີການກະທຳອັນເປັນການຜູກຂາດຫລືກໍ່ໃຫ້ເກີດຄວາມບໍ່ເປັນທຳໃນກ າ ນແຂ່ງຂັນໃນກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(12) ກຳໜົດມາດຕະການໃຫ້ມີການກະຈາຍບໍລິການດ້ານໂທລະຄົມມະນາຄົມໃຫ້ທົ່ວຖືງແລະເທົ່າທຽມກັນຕາມ ມາດຕາ 50

(13) ຄຸ້ມຄອງສິດແລະເສລີພາບຂອງປະຊາຊົນບໍ່ໃຫ້ຖືເອົາປຽບຈາກຜູ້ປະກອບກິດຈະການແລະຄຸ້ມຄອງສິດໃນຄວາມເປັນສ່ວນໂຕແລະເສລີພາບຂອງບຸກຄົນໃນການສື່ສານຖືງກັນໂດຍທາງໂທລະຄົມມະນາຄົມແລະສົ່ງເສີມສິດ ເສລີພາບແລະຄວາມສະເໝີພາກຂອງປະຊາຊົນໃນການເຂົ້າຖືງແລະໃຊ້ປະໂຫຍດຄື້ນຄວາມຖີ່ທີ່ໃຊ້ໃນ ກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(14) ປະສານງານກ່ຽວກັບການບໍລິຫານຄື້ນຄວາມຖີ່ທັງໃນປະເທດແລະລະຫວ່າງປະເທດ

(15) ວິນິໄສແລະແກ້ບັນຫາການໃຊ້ຄື້ນຄວາມຖີ່ທີ່ມີການລົບກວນຊຶ່ງກັນແລະກັນ

(16) ຕິດຕາມກວດສອບແລະໃຫ້ຄຳປຶກສາແນະນຳການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(17) ກຳໜົດລັກສະນະການຄວບລວມ ການຄອງສິດຂ້າມສື່ ຫລລືການຄອບງຳກິດຈະການກະຈາຍສຽງແລະກິດຈະການໂທລະທັດທີ່ໃຊ້ຄື້ນຄວາມຖີ່ລະຫວ່າງສື່ມວນຊົນດ້ວຍກັນເອງຫລືໂດຍບຸກຄົນອື່ນໃດຊຶ່ງຈະມີຜົນເປັນ

ການຂັດຂວາງເສລີພາບໃນການຮັບຮູ້ຂໍ້ມູນຂ່າວສານຫລືປິດກັ້ນການໄດ້ຮັບຂໍ້ມູນຂ່າວສານທີ່ຫລາກຫລາຍຂອງປະຊາຊົນ

(18) ສົ່ງເສີມການຮວມກຸ່ມຂອງຜູ້ຮັບໃບອານຸຍາດ ຜູ້ຜະລິດລາຍການ ແລະຜູ້ປະກອບວິຊາຊີບສື່ສານມວນຊົນທີ່ກ່ຽວກັບກິດຈະການກະຈາຍສຽງແລະກິດຈະການໂທລະທັດເປັນອົງກອນໃນຮູບແບບຕ່າງໆເພື່ອເຮັດຫນ້າທີ່ຈັດເຮັດມາດຕະຖານທາງຈາລິຍະທໍາຂອງການປະກອບອາຊີບຫລືວິຊາຊີບແລະການຄວບຄຸມການປະກອບອາຊີບຫລື ວິຊາຊີບກັນເອງພາຍໃຕ້ມາດຕະຖານທາງຈາລິຍະທໍາ

(19) ອອກລະບຽບທີ່ປະກາດຕາມມາດຕາ58

(20) ອານຸມັດງົບປະມານລາຍຈ່າຍຂອງສໍານັກງານ ກສທຊ.ລວມທັງເງິນທີ່ຈະຈັດສັນເຂົ້າກອງທຶນຕາມມາດຕາ 52

(21) ໃຫ້ພິຈາລະນາແລະໃຫ້ຄວາມເຫັນຊອບກ່ຽວກັບການຈັດສັນເງິນກອງທຶນຕາມທີ່ຄະນະກໍາມະການການບໍລິຫານກອງທຶນສະເຫນີຕາມມາດຕາ 55

(22) ໃຫ້ຂໍ້ມູນແລະຮ່ວມດໍາເນີນການໃນການເຈລະຈາຫລືເຮັດຄວາມຕົກລົງລະຫວ່າງລັດຖະບານແຫ່ງລາດຊະ ອານາຈັກໄທກັບລັດຖະບານຕ່າງປະເທດຫລືອົງກອນລະຫວ່າງປະເທດໃນເລື່ອງທີ່ກ່ຽວກັບການບໍລິຫານຄື່ນ ຄວາມຖີ່ ກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມຫລືກິດຈະການອື່ນທີ່ກ່ຽວຂ້ອງ

(23) ສະເຫນີແນະຕໍ່ຄະນະລັດຖະມົນຕີເພື່ອໃຫ້ມີກົດຫມາຍຫລືແກ້ໄຂປັບປຸງຫລືຍົກເລີກກົດຫມາຍທີ່ກ່ຽວຂ້ອງກັບການຈັດສັນຄື່ນຄວາມຖີ່ແລະການດໍາເນີນການອື່ນໆທີ່ກ່ຽວຂ້ອງກັບຄື່ນຄວາມຖີ່ກິດຈະການກະຈາຍສຽງກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(24) ອອກລະບຽບ ປະກາດ ຫລືຄໍາສັ່ງອັນກ່ຽວກັບອໍານາດຫນ້າທີ່ຂອງ ກສທຊ.

(25) ປະຕິບັດການອື່ນໃດຕາມທີ່ກໍາຫນົດໄວ້ໃນພະລາດຊະບັນຍັດນີ້ຫລືກົດຫມາຍອື່ນ

ການກໍາຫນົດລັກສະນະການຄວບລວມ ການຄອງສິດຂ້າມສື່ຫລືການຄອບງໍາຕາມ (17)ໃຫ້ ກສທຊ.ຮັບຟັງຄວາມຄິດເຫັນຈາກປະຊາຊົນແລະຜູ້ກ່ຽວຂ້ອງປະກອບດ້ວຍ

ການໃຊ້ອໍານາດຫນ້າທີ່ຕາມວັກຫນຶ່ງ ຕ້ອງບໍ່ຂັດຫລືແຍ້ງກັບກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ ກົດຫມາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມ ແລະກົດຫມາຍວ່າດ້ວຍວິທະຍຸຄົມມະນາຄົມ

ບັນດາລະບຽບ ປະກາດ ຫລືຄໍາສັ່ງໃດໆ ທີ່ໃຊ້ບັງຄັບເປັນການທົ່ວໄປເມື່ອໄດ້ປະກາດໃນລາດຊະກິດຈະນານຸເບກສາແລ້ວໃຫ້ໃຊ້ບັງຄັບໄດ້

ມາດຕາ 28 ໃຫ້ ກສທຊ.ຈັດໃຫ້ມີການຮັບຟັງຄວາມຄິດເຫັນຂອງຜູ້ມີສ່ວນໄດ້ເສຍແລະປະຊາຊົນທົ່ວໄປເພື່ອນໍາຄວາມຄິດເຫັນທີ່ໄດ້ມາປະກອບການພິຈາລະນາກ່ອນອອກລະບຽບ ປະກາດ ຫລືຄໍາສັ່ງ ກ່ຽວກັບການກໍາກັບເບິ່ງແຍງແລະການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມທີ່ມີຜົນໃຊ້ບັງຄັບເປັນການທົ່ວໄປແລະກ່ຽວຂ້ອງກັບການແຂ່ງຂັນໃນການປະກອບກິດຈະການທີ່ມີຜົນກະທົບຕໍ່ປະຊາຊົນຢ່າງມີໄນສໍາຄັນ ໂດຍຕ້ອງໃຫ້ຂໍ້ມູນກ່ຽວກັບຄວາມເປັນມາ ເຫດຜົນ ຄວາມຈໍາເປັນ ແລະສະຫລຸບສາລະສໍາຄັນກ່ຽວກັບເລື່ອງທີ່ຈະຮັບຟັງຄວາມຄິດເຫັນ ຕະຫລອດຈົນ

ປະເດັນທີ່ຕ້ອງການຮັບຟັງຄວາມຄິດເຫັັນ ທັງນີ້ ໄລຍະເວລາໃນການຮັບຟັງຄວາມຄິດເຫັນຕ້ອງບໍ່ຫນ້ອຍກວ່າສາມສິບມື້ ເວັ້ນແຕ່ໃນກໍລະນີມີເຫດສຸກເສີນຫລືມີຄວາມຈໍາເປັນເລັ່ງດ່ວນ ກສທຊ.ອາດກໍາຫນົດໄລຍະເວລາໃນການຮັບຟັງຄວາມຄິດເຫັນໃຫ້ຫນ້ອຍກວ່າໄລຍະເວລາທີ່ກໍາຫນົດໄດ້

ໃຫ້ສໍານັກງານ ກສທຊ.ຈັດເຮັດບັນທຶກສະຫລຸບຜົນການຮັບຟັງຄວາມຄິດເຫັນທີ່ປະກອບດ້ວຍຄວາມຄິດເຫັນທີ່ໄດ້ຮັບມະຕິຫລືຜົນການພິຈາລະນາຂອງ ກສທຊ.ທີ່ມີຕໍ່ຄວາມຄິດເຫັນດັ່ງກ່າວ ພ້ອມທັງເຫດຜົນແລະແນວທາງໃນການດໍາເນີນການຕໍ່ໄປ ແລະເຜີຍແຜ່ບັນທຶກດັ່ງກ່າວໃນລະບົບເຄືອຂ່າຍສາລະສົນເທດຂອງສໍານັກງານ ກສທຊ.

ມາດຕາ 29 ການກໍາຫນົດອັດຕາຄ່າໃຊ້ຫລືຄ່າເຊື່ອມຕໍ່ໂຄງຂ່າຍ ຄ່າທໍານຽມໃດໆ ຫລືຄ່າບໍລິການໃນການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມຕາມພະລາດຊະບັນຫຍັດນີ້ແລະຕາມກົດຫມາຍວ່າດ້າຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ ຫລືຕາມກົດຫມາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມ ໃຫ້ ກສທຊ.ຄໍານຶງຖືງປະໂຫຍດສາທາລະນະແລະພາລະຂອງຜູ້ບໍລິໂພກຄວາມສອດຄ່ອງກັບຕົ້ນທຶນການໃຫ້ບໍລິການ ຄວາມຄຸ້ມຄ່າ ແລະການຈັດສັນຊັບພະຍາກອນທີ່ມີປະສິດທິພາບດ້ວຍ

ມາດຕາ 30 ໃນການປະຕິບັດຫນ້າທີ່ຂອງ ກສທຊ. ກສທ.ກທຄ.ຄະນະກໍາມະການອື່ນ ແລະຄະນະອານຸກໍາມະການທີ່ຈັດຕັ້ງຂື້ນຕາມພະລາດຊະບັນຍັດນີ້ ຕະຫລອດຈົນເລຂາທິການ ກສທຊ.ແລະພະນັກງານຂອງສໍານັກງານ ກສທຊ. ກ່ຽວກັບການພິຈາລະນາຄໍາຂໍຫລືຄໍາຮ້ອງຮຽນທີ່ປະຊາຊົນຢື່ນຕາມກົດຫມຍ ລະບຽບ ຂໍ້ບັງຄັບ ປະກາດ ຫລືສັນຍາທີ່ ກສທຊ. ຫລືສໍານັກງານ ກສທຊ.ກໍາກັບເອກະສານ ຫາກກົດຫມາຍລະບຽບ ຂໍ້ບັງຄັບ ປະກາດ ຫລືສັນຍາດັ່ງກ່າວບໍ່ໄດ້ກໍາຫນົດໄລຍະເວລາໃນການດໍາເນີນການໄວ້ໂດຍສະເພາະໃຫ້ ກສທຊ.ກໍາຫນົດໄລຍະເວລາການດໍາເນີນການແລ້ວແລະປະກາດໃຫ້ປະຊາຊົນຮູ້ໂດຍທົ່ວໄປ ເລື່ອງໃດທີ່ບໍ່ໄດ້ກໍາຫນົດໄລຍະເວລາໄວ້ ຈະຕ້ອງດໍາເນີນການໃຫ້ແລ້ວພາຍໃນເວລາບໍ່ເກີນສິບຫ້າມື້ນັບແຕ່ມື້ທີ່ໄດ້ຮັບເລື່ອງ

ໃນກໍລະນີທີ່ ກສທຊ.ກສທ.ກທຄ.ຄະນະກໍາມະການອື່ນແລະຄະນະອານຸກໍາມະການທີ່ຈັດຕັ້ງຂື້ນຕາມພະລາດຊະບັນຍັດນີ້ ເລຂາທິການ ກສທຊ.ຫລືພະນັກງານຂອງສໍານັກງານ ກສທຊ.ປະຕິບັດຫນ້າທີ່ຊ້າກວ່າທີ່ກໍາຫນົດຕາມວັກຫນື່ງໂດຍບໍ່ມີເຫດອັນສົມຄວນ ຫາກກໍ່ໃຫ້ເກີດຄວາມເສຍຫາຍແກ່ບຸກຄົນໃດ ໃຫ້ສໍານັກງານ ກສທຊ.ຮັບຜິດຊິດໃຊ້ຄວາມເສຍຫາຍໃຫ້ແກ່ບຸກຄົນນັ້ນແລະໃຫ້ຮຽກຮ້ອງເງິນຊົດໃຊ້ຄືນຈາກ ກສທຊ. ກສທ.ກທຄ.ຄະນະກໍາມະການແລະຄະນະອານຸກໍາມການທີ່ຈັດຕັ້ງຂື້ນຕາມພະລາດຊະບັນຍັດນີ້ ເລຂາທິການ ກສທຊ.ຫລືພະນັກງານຂອງສໍານັກງານ ກສທຊ.ຜູ້ເປັນຕົ້ນເຫດແຫ່ງຄວາມຊ້ານັ້ນ ແລ້ວແຕ່ກໍລະນີ ຫາກຄວາມເສຍຫາຍນັ້ນເກີດຈາກການກະທໍາຫລືງົດເວັ້ນການກະທໍາດ້ວຍຄວາມຈິງໃຈຫລືປະຫມາດຢ່າງຮ້າຍແຮງ

ມາດຕາ 31 ເພື່ອປະໂຫຍດໃນການຄຸ້ມຄອງຜູ້ບໍລິໂພກບໍ່ໃຫ້ຖືກເອົາປຽບຈາກຜູ້ປະກອບກິດຈະການກະຈາຍສຽງກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ໃຫ້ ກສທຊ. ມີຫນ້າທີ່ກວດສອບການດໍາເນີນການຂອງຜູ້ປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມ ບໍ່ໃຫ້ມີການດໍາເນີນການໃດໆໃນປະການທີ່ຫນ້າຈະເປັນການເອົາປຽບຜູ້ບໍລິໂພກ ທັງນີ້ ໂດຍໃຫ້ ກສທຊ.ແຕ່ງຕັ້ງຄະນະອານຸກໍາມະການຂື້ນສອງຄະນະປະກອບດ້ວຍຜູ້ທີ່ມີຄວາມຮູ້ ຄວາມຊ່ຽວຊານ ແລະປະສົບການອັນເປັນປະໂຫຍດຕໍ່ການປະຕິບັດຫນ້າທີ່ຂອງ ກສທຊ.ໃນການຄຸ້ມຄອງຜູ້ບໍລິໂພກດ້ານກິດຈະການກະຈາຍສຽງແລະກິດຈະການໂທລະທັດ ແລະໃນການຄຸ້ມຄອງຜູ້ບໍລິໂພກດ້ານກິດຈະການໂທລະຄົມມະນາຄົມໂດຍ

ໃຫ້ມີອຳນາດຫນ້າທີ່ໃນການພິຈາລະນາແລະສະເຫນີຄວາມເຫັນກ່ຽວກັບເລື່ອງຮ້ອງຮຽນແລະປະຕິບັດຫນ້າທີ່ອື່ນ ທັງນີ້ ຕາມທີ່ ກສທຊ.ກຳຫນົດ

ໃນກໍລະນີທີ່ຜູ້ປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດ ຫລືກິດຈະການໂທລະຄົມມະນາຄົມ ດຳເນີນການໃດໆໃນປະກາດທີ່ຫນ້າຈະເປັນການເອົາປຽບຜູ້ບໍລິໂພກ ໂດຍອາໄສການໃຊ້ເຄືອຂ່າຍຫລືການໂຄສະນາອັນມີລັກສະນະເປັນການຄ້າກຳໄລເກີນຄວນ ຫລືກໍ່ໃຫ້ເກີດຄວາມເດືອດຮ້ອນລຳຄານ ບໍ່ວ່າດ້ວຍວິທີການໃດຕາມຫລັກເກນທີ່ ກສທຊ.ກຳຫນົດໃຫ້ ກສທຊ.ມີອຳນາດສັ່ງລະງັບການດຳເນີນການດັ່ງກ່າວໄດ້

ມາດຕາ 32 ເພື່ອປະໂຫຍດໃນການຄຸ້ມຄອງສິດໃນຄວາເປັນສ່ວນຕົວແລະເສລີພາບຂອງບຸກຄົນໃນການສື່ສານຖືງກັນໂດຍທາງໂທລະຄົມມະນາຄົມ ໃຫ້ ກສທຊ.ມີອຳນາດກຳຫນົດມາດຕະການຄຸ້ມຄອງສິດຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມກ່ຽວກັບຂໍ້ມູນສ່ວນບຸກຄົນ ສິດໃນຄວາມເປັນສ່ວນໂຕ ແລະເສລີພາບໃນການສື່ສານຖືງກັນໂດຍທາງໂທລະຄົມມະນາຄົມ

ໃນກໍລະນີທີ່ມີການກະທຳຄວາມຜິດໂດຍການດັກຮັບໄວ້ ໃຊ້ປະໂຫຍດ ຫລືເປີດເຜີຍຂໍ້ຄວາມຂ່າວສານຫລືຂໍ້ມູນອື່ນໃດທີ່ມີການສື່ສານທາງໂທລະຄົມມະນາຄົມບໍ່ຊອບດ້ວຍກົດຫມາຍ ໃຫ້ຖືວ່າ ກສທຊ.ເປັນຜູ້ເສຍຫາຍຕາມປະມວນກົດຫມາຍວິທີພິຈາລະນາຄວາມອາຍາ

ໃນກໍລະນີທີ່ຜູ້ໄດ້ຮັບໃບອານຸຍາດປະກອບກິດຈະການໂທລະຄົມມະນາຄົມເປັນຜູ້ກະທຳຄວາມຜິດຕາມວັກສອງຫລືຮູ້ວ່າມີການກະທຳຄວາມຜິດຕາມວັກສອງ ແຕ່ເພີກເສີຍຫລືບໍ່ດຳເນີນການຕາມກົດຫມາຍພາຍໃນເວລາອັນສົມຄວນ ໃຫ້ ກສທຊ.ມີອຳນາດສັ່ງພັກໃຊ້ຫລືເພີກຖອນໃບອານຸຍາດປະກອບກິດຈະການໂທລະຄົມມະນາຄົມໄດ້

ມາດຕາ 33 ໃຫ້ ກສທຊ.ມີອຳນາດແຕ່ງຕັ້ງຄະນະອານຸກຳມະການ ຄະນະເຮັດວຽກ ຫລືມອບວຽກໃຫ້ພະນັັກງານເຈົ້າຫນ້າທີ່ປະຕິບັດຫນ້າທີ່ຕາມພະລາດຊະບັນຍັດນີ້ ຫລືຕາມທີ່ໄດ້ຮັບມອບຫມາຍໄດ້

ອານຸກຳມະການ ແລະຄະນະເຮັດວຽກຕ້ອງບໍ່ມີລັກສະນະຕ້ອງຫ້າມຕາມມາດຕາ 7.ຂ.(1)(2) (3)(4) (5)(6) (7)(8) (9)(10)ແລະ(11)

ມາດຕາ 34ໃນການປະຕິບັດຫນ້າທີ່ຕາມພະລາດຊະບັນຍັດນີ້ ໃຫ້ ກສທຊ.ກສທ.ກທຄ.ແລະຄະນະກຳມະການຕິດຕາມແລະປະເມີນຜົນການປະຕິບັດວຽກມີອຳນາດສັ່ງຫນ່ວຍງານຂອງລັດຫລືບຸກຄົນໃດໃຫ້ຊີ້ແຈ້ງຂໍ້ເທັດຈິງ ມາໃຫ້ຖ້ອຍຄຳຫລືສົ່ງເອກະສານຫລັກຖານທີ່ກ່ຽວຂ້ອງເພື່ອປະກອບການພິຈາລະນາໄດ້

## *ຫມວດທີ2*

## *ການກຳກັບເບິ່ງແຍງການປະກອບກິດຈະການ*

--------------

### *ສ່ວນທີ 1*

### *ຄະນະກຳມະການກິດຈະການກະຈາຍສຽງແລະກິດຈະການໂທລະທັດ*

----------------

ມາດຕາ 35 ໃຫ້ມີຄະນະກຳມະການກິດຈະການກະຈາຍສຽງແລະກິດຈະການໂທລະທັດຄະນະໜຶ່ງ ເອີ້ນໂດຍຫຍໍ້ວ່າ “ກສທ”ປະກອບດ້ວຍ

(1) ປະທານກຳມະການຫລື ກສທຊ.ແຕ່ງຕັ້ງຈາກຮອງປະທານ ກສທຊ.

(2) ກຳມະການຊຶ່ງ ກສທຊ.ແຕ່ງຕັ້ງຈາກກຳມະການ ກສທຊ.ທີ່ບໍ່ໄດ້ເປັນປະທານຫລືຮອງປະທານ ກສທຊ.ຈຳນວນສີ່ຄົນ ຊຶ່ງຕ້ອງມີກຳມະການຕາມມາດຕາ6(3)ຈຳນວນສອງຄົນ ແລະກຳມະການຕາມມາດຕາ6(4)ຈຳນວນໜຶ່ງຄົນ

ກຳມະການຕາມວັກໜຶ່ງຈະເປັນ ກທຄ ໃນຂະນະກຍວກັນບໍ່ໄດ້

ໃຫ້ເລຂາທິການ ກສທຊ.ແຕ່ງຕັ້ງພະນັກງານເຈົ້າໜ້າທີ່ຂອງສຳນັກງານ ກສທຊ.ເປັນເລຂານຸການແລະຜູ້ຊ່ວຍເລຂານຸການຕາມຄວາມຈຳເປັນ

ມາດຕາ 36 ໃຫ້ນຳຄວາມໃນມາດຕາ 23ມາໃຊ້ບັງຄັບການປະຊຸມຂອງ ກສທ.ໂດຍອາ◌ຸໂລມເວັ້ນແຕ່ໃນສ່ວນທີ່ກ່ຽວກັບອົງປະຊຸມ ຕ້ອງມີກຳມະການ ກສທ.ມາປະຊຸມບໍ່ໜ້ອຍກວ່າເຄິ່ງໜຶ່ງຂອງຈຳນວນກຳມະການ ກສທ.ທັງໝົດຈຶ່ງຈະເປັນອົງປະຊຸມ

ໃນກໍລະນີທີ່ກຳມະການ ກສທ.ພົ້ນຈາກຕຳແໜ່ງກອ່ນວາລະ ຖ້າຍັງມີກຳມະການ ກສທ.ຢູ່ບໍ່ໜ້ອຍກວ່າສາມຄົນ ໃຫ້ກຳມະການ ກສທ.ເທົ່າທີ່ເຫລືອຢູ່ປະຕິບັດໜ້າທີ່ຕໍ່ໄປໄດ້

ມາດຕາ 37 ໃຫ້ ກສທ.ມີອຳນາດໜ້າທີ່ປະຕິບັດການໃດໆແທນ ກສທຊ.ຕາມມາດຕາ 27(4)(6)(8)(9) (10)(11) (13)(16)ແລະ(18)ໃນສ່ວນທີ່ກ່ຽວກັບກິດຈະການກະຈາຍສຽງແລະກິດຈະການໂທລະທັດແລະປະຕິບັດໜ້າທີ່ອື່ນຕາມທີ່ ກສທຊ.ມອບໝາຍ

***ສ່ວນທີ2***

***ຄະນະກຳມະການກິດຈະການໂທລະຄົມມະນາຄົມ***

***-----------------------***

ມາດຕາ 38 ໃຫ້ມີຄະນະກຳມະການກິດຈະການໂທລະຄົມມະນາຄົມຄະນະໜຶ່ງ ເອີ້ນໂດຍຫຍໍ້ວ່າ”ກທຄ”ປະກອບດ້ວຍ

(1) ປະທານກຳມະການ ຊຶ່ງ ກສທຊ.ແຕ່ງຕັ້ງຈາກຮອງປະທານ ກສທຊ.

(2) ກຳມະການ ຊຶ່ງ ກສທຊ.ແຕ່ງຕັ້ງຈາກກຳມະການ ກສທຊ.ທີ່ບໍ່ໄດ້ເປັນປະທານຫລືຮອງປະທານ ກສທຊ.ຈຳນວນສີ່ຄົນ ຊຶ່ງຕ້ອງມີກຳມະການຕາມມາດຕາ6(3)ຈຳນວນສອງຄົນ ແລະກຳມະການຕາມມາດຕາ6(4)ຈຳນວນໜຶ່ງຄົນ

ກຳມະການຕາມວັກໜຶ່ງຈະເປັນ ກສທ.ໃນຂະນະດຽວກັນບໍ່ໄດ້

ໃຫ້ເລຂາທິການ ກສທຊ.ແຕ່ງຕັ້ງພະນັກງານເຈົ້າໜ້າທີ່ຂອງສຳນັກງານ ກສທຊ.ເປັນເລຂານຸການແລະຜູ້ຊ່ວຍເລຂານູການຕາມຄວາມຈຳເປັນ

ມາດຕາ 39 ໃຫ້ນໍາຄວາມໃນມາດຕາ 36 ມາໃຊ້ບັງຄັບກັບການປະຊຸມແລະການປະຕິບັດໜ້າທີ່ຂອງ ກທຄ. ໂດຍອານຸໂລມ

ມາດຕາ 40 ໃຫ້ ກທຄ.ມີອໍານາດໜ້າທີ່ປະຕິບັດການໃດໆ ແທນ ກສທຊ. ຕາມມາດຕາ 27 (4)(6)(7)(8)(9)(10)(11)(12)(13)ແລະ(16) ໃນສ່ວນທີ່ກ່ຽ%ກັບກິດຈະການໂທລະຄົມມະນາຄົມແລະກິດຈະການວິທະຍຸຄົມມະນາຄົມ ແລະປະຕິບັດໜ້າທີ່ອື່ນຕາມທີ່ ກສທຊ.ມອບໝາຍ

***ສ່ວນທີ3***

***ການກໍາກັບກິດຈະການກະຈາຍສຽງແລະກິດຈະການໂທລະທັດ***

-----------------------

ມາດຕາ 41 ຜູ້ໃດປະສົງຈະໃຊ້ຄື່ນຄວາມຖີ່ເພື່ອກິດຈະການກະຈາຍສຽງຫລືກິດຈະການໂທລະທັດຕ້ອງໄດ້ຮັບໃບອານຸຍາດຕາມພະລາດຊະບັນຍັດນີ້

ການຍື່ນຄໍາຂໍອານຸຍາດ ແລະການອານຸຍາດ ໃຫ້ເປັນໄປຕາມຫລັກເກນ ວິທີການ ແລະເງື່ອນໄຂທີ່ ກສທຊ.ປະກາດກໍາໜົດ ເວັ້ນແຕ່ການປະກອບກິດຈະການທາງທຸລະກິດໃຫ້ເປັນໄປຕາມທີ່ກໍາໜົດໃນວັກຫົກ

ໃຫ້ຖືວ່າການຍື່ນຄໍາຂໍຮັບໃບອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ຕາມວັກໜຶ່ງ ເປັນການຍື່ນຄໍາຂໍອານຸຍາດປະກອບກິດຈະການກະຈາຍສຽງຫລືກິດຈະການໂທລະທັດຕາມກົດໝາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດດ້ວຍແລະເມື່ອ ກສທຊ.ອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ແລ້ວໃຫ້ຖືວ່າອານຸຍາດໃຫ້ປະກອບກິດຈະການກະຈາຍສຽງຫລືກິດຈະການໂທລະທັດຕາມກົດໝາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ ແລະໃຫ້ຖືວ່າໄດ້ຮັບອານຸຍາດໃຫ້ມີແລະໃຊ້ເຄື່ອງວິທະຍຸຄົມມະນາຄົມແລະຕັ້ງສະຖານນີວິທະຍຸຄົມມະນາຄົມຕາມກົດໝາຍວ່າດ້ວຍວິທະຍຸຄົມມະນາຄົມດ້ວຍທັງນີ້ ສະເພາະໃນສ່ວນທີ່ກ່ຽວກັບເຄື່ອງວິທະຍຸຄົມມະນາຄົມທີ່ລະບຸໄວ້ໃນຄໍາຂໍອານຸຍາດ

ການອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອກິດຈະການກະຈາຍສຽງແລະກິດຈະການໂທລະທັດຕ້ອງຄໍານຶງຖືງປະໂຫຍດສູງສຸດຂອງປະຊາຊົນໃນລະດັບຊາດ ລະດັບພູມມິພາກ ແລະລະດັບທ້ອງຖິ່ນໃນດ້ານການສຶກສາ ວັດທະນະທໍາ ຄວາມໝັ້ນຄົງຂອງລັດ ແລະປະໂຫຍດສາທາລະນະອື່ນ ລວມທັງການແຂ່ງຂັນໂດຍເສລີຢ່າງເປັນທໍາແລະຕ້ອງດໍາເນີນການໃນລັກສະນະທີ່ມີການກະຈາຍການໃຊ້ປະໂຫຍດໂດຍທົ່ວຖືງໃນກິດຈະການດ້ານຕ່າງໆໃຫ້ເໝາະສົມແກ່ການເປັນຊັບພະຍາກອນສື່ສານຂອງຊາດເພື່ອປະໂຫຍດສາທາລະນະ

ເພື່ອປະໂຫຍດໃນການສົ່ງເສີມລາຍການວິທະຍຸແລະລາຍການໂທລະທັດທີ່ມີເນື້ອໃນສ້າງສັນສັງຄົມຫລືລາຍການສໍາຫລັບເດັກນ້ອຍແລະເຍົາວະຊົນ ໃຫ້ ກສທຊ.ກໍາໜົດເງື່ອນໄຂໃນການອານຸຍາດໃຫ້ຜູ້ຮັບໃບອານຸຍາດຕ້ອງຈັດເວລາໃຫ້ລາຍການດັ່ງກ່າວໄດ້ອອກອາກາດໃນຊ່ວງເວລາທີ່ເໝາະສົມສໍາຫລັບກຸ່ມເປົ້າໝາຍ

ໃນກໍລະນີທີ່ເປັນການອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອກິດຈະການກະຈາຍສຽງຫລືກິດຈະການໂທລະທັດຊຶ່ງເປັນການປະກອບກິດຈະການທາງທຸລະກິດຕາມທີ່ກໍາໜົດໄວ້ໃນກົດໝາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ ໃຫ້ໃຊ້ວິທີຄັດເລືອກໂດຍວິທີການປະມູນຄື່ນຄວາມຖີ່ ທັງໃນລະດັບຊາດ ລະດັບພູມມິພາກແລະລະດັບ

ທ້ອງຖິ່ນ ໂດຍໃຫ້ແຍກກັນປະມູນໃນແຕ່ລະ ລະດັບ ທັງນີ້ ຕາມຫລັກເກນ ວິທີການ ໄລຍະເວລາແລະເງື່ອນໄຂທີ່ ກສທຊ.ປະກາດກຳຫນົດ

ການກຳຫນົດຄຸນສົມບັດຂອງຜູ້ມີສິດເຂົ້າຮ່ວມປະມູນຄື່ນຄວາມຖີ່ຕາມວັກທຳອິດ ໃຫ້ຄຳນຶງຖືງປະໂຫຍດໃນການຈັດສັນຊັບພະຍາກອນຄື່ນຄວາມຖີ່ຢ່າງມີປະສິດທິພາບແລະເກີດຄວາມຄຸ້ມຄ່າ ການປ້ອງກັນການຜູກຂາດ ການສົ່ງເສີມການແຂ່ງຂັນໂດຍເສລີຢ່າງເປັນທຳ ການໃຫ້ບໍລິການຢ່າງມີປະສິດທິພາບ ພາລະຂອງຜູ້ບໍລິໂພກແລະການຄຸ້ມຄອງສິດຂອງຜູ້ຂໍຮັບໃບອານຸຍາດປະກອບກິດຈະການທາງທຸລະກິດລະດັບພູມມິພາກແລະລະດັບທ້ອງຖິ່ນ

ການອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອກິດຈະການກະຈາຍສຽງແລະກິດຈະການໂທລະທັດທີ່ກໍ່ໃຫ້ເກີດຫລືອາດເກີດການລົບກວນຫລືທັບຊ້ອນກັບຄື່ນຄວາມຖີ່ທີ່ໄດ້ຮັບອານຸຍາດຢູ່ກ່ອນແລ້ວຈະກະທຳບໍ່ໄດ້

ມາດຕາ 42 ໃຫ້ ກສທຊ.ມີອຳນາດກຳຫນົດອັດຕາຄ່າທຳນຽມໃບອານຸຍາດຕາມມາດຕາ41ໂດຍແຍກເປັນຄ່າທຳນຽມໃບອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ ແລະຄ່າທຳນຽມໃບອານຸຍາດປະກອບກິດຈະການຊຶ່ງຕ້ອງຊຳລະເມື່ອໄດ້ຮັບໃບອານຸຍາດແລະຕ້ອງຊຳລະເປັນລາຍປີໃນອັດຕາທີ່ເຫມາະສົມກັບປະເພດຂອງໃບອານຸຍາດຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ ເວັ້ນແຕ່ຄ່າທຳນຽມໃບອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອປະກອບກິດຈະການທາງທຸລະກິດໃຫ້ຖືວ່າເງິນທີ່ໄດ້ຈາກການປະມູນຕາມມາດຕາ41ວັກຫົກເປັນຄ່າທຳນຽມໃບອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ຊຶ່ງຕ້ອງຊຳລະເມື່ອໄດ້ຮັບໃບອານຸຍາດແລະໃຫ້ນຳສົ່ງເຂົ້າກອງທຶນຕາມມາດຕາ52

ຄ່າທຳນຽມໃບອານຸຍາດຕາມວັກຫນຶ່ງຊຶ່ງຕ້ອງຊຳລະເປັນລາຍປີ ໃຫ້ ກສທຊ.ກຳຫນົດໂດຍຄຳນຶງຖືງລາຍຈ່າຍໃນການກຳກັບເບິ່ງແຍງການໃຊ້ຄື່ນຄວາມຖີ່ແລະການກຳກັບເບິ່ງແຍງການປະກອບກິດຈະການຢ່າງມີປະສິດທິພາບໃນອັດຕາລວມທັງຫມົດບໍ່ເກີນຮ້ອຍລະສອງຂອງລາຍໄດ້ກ່ອນຫັກຄ່າໃຊ້ຈ່າຍຂອງຜູ້ຮັບໃບອານຸຍາດແລະໃຫ້ນຳສົ່ງເປັນລາຍໄດ້ຂອງສຳນັກງານ ກສທຊ.

ບັນດາຫນ່ວຍງານທີ່ໄດ້ຮັບການຍົກເວັ້ນບໍ່ຕ້ອງປະຕິບັດຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດບໍ່ວ່າທັງຫມົດຫລືບາງສ່ວນ ຕ້ອງເສຍຄ່າທຳນຽມຕາມວັກຫນຶ່ງດ້ວຍແຕ່ ກສທຊ.ຈະລົດຫຍ່ອນໃຫ້ຕາມທີ່ເຫັນສົມຄວນກໍ່ໄດ້ ໂດຍຄຳຖຶງຖືງວັດຖຸປະສົງຂອງກິດຈະການຂອງຫນ່ວຍງານນັ້ນ

ມາດຕາ 43 ໃບອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອກິດຈະການກະຈາຍສຽງແລະກິດຈະການໂທລະທັດເປັນສິດສະເພາະຕົວຂອງຜູ້ໄດ້ຮັບອານຸຍາດ ຈະໂອນແກ່ກັນບໍ່ໄດ້

ຜູ້ໄດ້ຮັບໃບອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອກິດຈະການກະຈາຍສຽງແລະກິດຈະການໂທລະທັດຕ້ອງປະກອບກິດຈະການດ້ວຍຕົນເອງ ຈະມອບການບໍລິຫານຈັດການທັງຫມົດຫລືບາງສ່ວນຫລືຍິນຍອມໃຫ້ບຸກຄົນອື່ນເປັນຜູ້ມີອຳນາດປະກອບກິດຈະການແທນບໍ່ໄດ້ ແຕ່ການໃຫ້ບຸກຄົນອື່ນເຊົ່າເວລາດຳເນີນການບາງຊ່ວງເວລາອາດກະທຳໄດ້ຕາມຫລັກເກນ ວິທີການ ແລະເງື່ອນໄຂທີ່ ກສທຊ.ກຳຫນົດ

ມາດຕາດ44 ຜູ້ໄດ້ຮັບໃບອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອກິດຈະການກະຈາຍສຽງແລະກິດຈະການໂທລະທັດຜູ້ໃດບໍ່ໄດ້ປະກອບກິດຈະການທີ່ໃຊ້ຄື່ນຄວາມຖີ່ນັ້ນພາຍໃນໄລຍະເວລາທີ່ ກສທຊ.ກຳຫນົດຫລືນຳຄື່ນຄວາມຖີ່ໄປໃຊ້ໃນກິດຈະການນອກວັດຖຸປະສົງ ຫລືບໍ່ປະຕິບັດຕາມເງື່ອນໄຂການປະກອບກິດຈະການຄື່ນຄວາມຖີ່ ຫລືກະທຳການອັນມີລັກສະນະຕ້ອງຫ້າມຕາມທີ່

ກຳໜົດໃນມາດຕາ27 (11)ແລະ(17)ຫລືບໍ່ປະຕິບັດຕາມມາດຕາ43ໃຫ້ ກສທຊ.ດຳເນີນການເພື່ອໃຫ້ມີການແກ້ໄຂໃຫ້ຖືກຕ້ອງຫລືມີຄຳສັ່ງເພີກຖອນໃບອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ນັ້ນທັງໝົດຫລືບາງສ່ວນ

***ສ່ວນທີ4***

***ການກຳກັບກິດຈະການໂທລະຄົມມະນາຄົມ***

-----------------------

ມາດຕາ 45 ຜູ້ໃດປະສົງຈະໃຊ້ຄື້ນຄວາມຖີ່ເພື່ອກິດຈະການໂທລະຄົມມະນາຄົມຕ້ອງໄດ້ຮັບໃບອານຸຍາດຕາມພະລາດຊະບັນຍັດນີ້ ຊຶ່ງຕ້ອງດຳເນີນການໂດຍວິທີການປະມູນຄື້ນຄວາມຖີ່ ທັງນີ້ ຕາມຫລັກເກນ ວິທີການໄລຍະເວລາແລະເງື່ອນໄຂທີ່ ກສທຊ.ປະກາດກຳໜົດ ໂດຍໃຫ້ນຳຄວາມໃນມາດຕາ41ວັກສີ່ ແລະວັກເຈັດມາໃຊ້ບັງຄັບໂດຍອານຸໂລມແລະເງິນທີ່ໄດ້ຈາກການປະມູນເມື່ອຫັກຄ່າໃຊ້ຈ່າຍແລ້ວໃຫ້ສົ່ງເຂົ້າເປັນລາຍໄດ້ແຜ່ນດິນ

ໃຫ້ຖືວ່າ ການຍື່ນຄຳຂໍຮັບໃບອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ຕາມວັກໜຶ່ງ ເປັນການຍື່ນຄຳຂໍອານຸຍາດປະກອບກິດຈະການໂທລະຄົມມະນາຄົມຕາມກົດໝາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມດ້ວຍແລະເມື່ອ ກສທຊ.ອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ແລ້ວໃຫ້ຖືວ່າອານຸຍາດໃຫ້ປະກອບກິດຈະການໂທລະຄົມມະນາຄົມຕາມກົດໝາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມແລະໃຫ້ຖືວ່າໄດ້ຮັບອານຸຍາດໃຫ້ມີແລະໃຊ້ເຄື່ອງວິທະຍຸຄົມມະນາຄົມແລະຕັ້ງສະຖານນີວິທະຍຸຄົມມະນາຄົມຕາມກົດໝາຍວ່າດ້ວຍວິທະຍຸຄົມມະນາຄົມດ້ວຍ ທັງນີ້ສະເພາະໃນສ່ວນທີ່ກ່ຽວກັບເຄື່ອງວິທະຍຸຄົມມະນາຄົມທີ່ລະບຸໄວ້ໃນຄຳຂໍອານຸຍາດ

ໃຫ້ ກສທຊ.ມີອຳນາດກຳໜົດອັດຕາຄ່າທຳນຽມໃບອານຸຍາດປະກອບກິດຈະການຕາມກົດໝາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມແລະຄ່າທຳນຽມຊຶ່ງຕ້ອງຊຳລະເປັນລາຍປີໂດຍຄຳນຶງຖຶງລາຍຈ່າຍໃນການກຳກັບເບິ່ງແຍງການໃຊ້ຄື້ນຄວາມຖີ່ແລະການກຳກັບເບິ່ງແຍງການປະກອບກິດຈະການຢ່າງມີປະສິດທິພາບໃນອັດຕາລວມທັງໝົດບໍ່ເກີນຮ້ອຍລະສອງຂອງລາຍໄດ້ກ່ອນຫັກຄ່າໃຊ້ຈ່າຍຂອງຜູ້ຮັບໃບອານຸຍາດແລະໃຫ້ນຳສົ່ງຄ່າທຳນຽມດັ່ງກ່າວເປັນລາຍໄດ້ຂອງສຳນັກງານ ກສທຊ.

ມາດຕາ 46 ໃບອານຸຍາດ ໃຫ້ໃຊ້ຄື້ນຄວາມຖີ່ເພື່ອກິດຈະການໂທລະຄົມມະນາຄົມເປັນສິດສະເພາະຕົວຂອງຜູ້ໄດ້ຮັບໃບອານຸຍາດ ຈະໂອນແກ່ກັນບໍ່ໄດ້

ຜູ້ໄດ້ຮັບໃບອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ເພື່ອກິດຈະການໂທລະຄົມມະນາຄົມ ຕ້ອງປະກອບກິດຈະການດ້ວຍຕົນເອງ ຈະມອບການບໍລິຫານຈັດການທັງໝົດຫລືບາງສ່ວນຫລືຍິນຍອມໃຫ້ບຸກຄົນອື່ນເປັນຜູ້ມີອຳນາດປະກອບກິດຈະການແທນບໍ່ໄດ້

ມາດຕາ 47 ຜູ້ໄດ້ຮັບໃບອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ເພື່ອກິດຈະການໂທລະຄົມມະນາຄົມຜູ້ໃດບໍ່ໄດ້ປະກອບກິດຈະການທີ່ໃຊ້ຄື້ນຄວາມຖີ່ນັ້ນພາຍໃນໄລຍະເວລາທີ່ ກສທຊ.ກຳໜົດ ຫລືນຳຄື້ນຄວາມຖີ່ໄປໃຊ້ໃນກິດຈະການນອກວັດຖຸປະສົງ ຫລືບໍ່ປະຕິບັດຕາມເງື່ອນໄຂການປະກອບກິດຈະການທີ່ໃຊ້ຄື້ນຄວາມຖີ່ຫລືກະທຳການອັນມີລັກສະນະຕ້ອງຫ້າມຕາມທີ່ກຳໜົດໃນມາດຕາ27 (11) ຫລືບໍ່ປະຕິບັດຕາມມາດຕາ46ໃຫ້ ກສທຊ.ດຳເນີນການເພື່ອໃຫ້ມີການແກ້ໄຂໃຫ້ຖືກຕ້ອງ ຫລືມີຄຳສັ່ງເພີກຖອນໃບອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ນັ້ນທັງໝົດຫລືບາງສ່ວນ

***ໝວດ3***

***ແນວທາງການຈັດເຮັດແຜນ***

-------------------------------------

ມາດຕາ 48 ໃຫ້ມີແຜນແມ່ບົດການບໍລິຫານຄື້ນຄວາມຖີ່ຊຶ່ງຢ່າງໜ້ອຍຕ້ອງມີລາຍການ ດັ່ງຕໍ່ໄປນີ້

(1) ລາຍລະອຽດກ່ຽວກັບຕາຕະລາງກໍາໜົດຄື້ນຄວາມຖີ່ທັງໝົດທີ່ປະເທດໄທສາມາດນໍາມາໃຊ້ປະໂຫຍດໄດ້

(2)ແນວທາງການດໍາເນີນການກ່ຽວກັບຄື້ນຄວາມຖີ່ລະຫວ່າງປະເທດ

(3)ລາຍລະອຽດກ່ຽວກັບຄື້ນຄວາມຖີ່ທີ່ກໍາໜົດໃຫ້ໃຊ້ໃນກິດຈະການກະຈາຍສຽງແລະກິດຈະການໂທລະທັດ ກິດຈະການໂທລະຄົມມະນາຄົມແລະກິດຈະການອື່ນ

(4)ແນວທາງໃນການຄືນຄື້ນຄວາມຖີ່ເພື່ອນໍາໄປຈັດສັນໃຫມ່ຫລືການປັບປຸງການໃຊ້ຄື້ນຄວາມຖີ່

ແຜ່ນແມ່ບຟດການບໍລິຫານຄື້ນຄວາມຖີ່ ເມື່ອປະກາດໃນລາດຊະກິດຈານຸເບກສາແລ້ວໃຫ້ໃຊ້ບັງຄັບໄດ້ແລະໃຫ້ໃຊ້ເປັນຫລັກເກນແລະເງື່ອນໄຂເບື້ອງຕົ້ນໃນການອານຸຍາດແລະການດໍາເນີນກິດຈະການທັງປວງທີ່ກ່ຽວຂ້ອງກັບການໃຊ້ຄື້ນຄວາມຖີ່

ໃຫ້ ກສທຊ.ຕິດຕາມປະເມີນຜົນການດໍາເນີນວຽກຕາມແຜນແມ່ບົດການບໍລິຫານຈັດການຄື້ນຄວາມຖີ່ ແລະຕ້ອງປັບປຸງແຜນແມ່ບົດດັ່ງກ່າວ ເພື່ອປະໂຫຍດໃນການບໍລິຫານຄື້ນຄວາມຖີ່ໃຫ້ມີປະສິດທິພາບແລະສອດຄ່ອງກັບຄວາມກ້າວໜ້າຂອງເທັກໂນໂລຊີທີ່ປ່ຽນແປງໄປ

ໃນການຈັດແຜນແມ່ບົດການບໍລິຫານຄື້ນຄວາມຖີ່ ໃຫ້ ກສທຊ.ຮັບຟັງຄວາມຄິດເຫັນຂອງປະຊາຊົນຜູ້ປະກອບກິດຈະການທີ່ໃຊ້ປະໂຫຍດຄື້ນຄວາມຖີ່ ແລະໜ່ວຍງານຂອງລັດທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນປະກອບການພິຈາລະນາດ້ວຍ ທັງນີ້ໄລຍະເວລາໃນການຮັບຟັງຄວາມຄິດເຫັນຕ້ອງບໍ່ຫນ້ອຍກວ່າສາມສິບມື້ ແລະການຈັດເຮັດແຜນແມ່ບົດການບໍລິຫານຄື້ນຄວາມຖີ່ໃຫ້ຄໍານຶງການໃຊ້ວຽກດ້ານຄວາມຫມັ້ນຄົງຂອງລັດຕາມຄວາມຈໍາເປັນ

ມາດຕາ 49 ໃນການກໍາກັບເບິ່ງແຍງການປະກອບກິດຈະການ ໃຫ້ ກສທຊ.ຈັດໃຫ້ມີແຜນແມ່ບົດກິດຈະການກະຈາຍສຽງແລະກິດຈະການໂທລະທັດ ແລະແຜນແມ່ບົດກິດຈະການໂທລະຄົມມະນາຄົມ ເພື່ອໃຊ້ເປັນແນວທາງໃນການດໍາເນີນການໄລຍະຫ້າປີ ໂດຍໃນແຜນດັ່ງກ່າວຕ້ອງສອດຄ່ອງກັບແຜນແມ່ບົດການບໍລິຫານຄື້ນຄວາມຖີ່ແລະຢ່າງໜ້ອຍຕ້ອງມີແນວທາງການພັດທະນາແລະການສົ່ງເສີມແຂ່ງຂັນໂດຍເສລີຢ່າງເປັນທໍາລະຫວ່າງຜູ້ປະກອບກິດຈະການແນວທາງການອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ແລະການອານຸຍາດໃຫ້ປະກອບກິດຈະການ ໂດຍໃນສ່ວນກິດຈະການກະຈາຍສຽງແລະກິດຈະການໂທລະທັດ ຕ້ອງຈັດໃຫ້ພາກປະຊາຊົນໄດ້ໃຊ້ຄື້ນຄວາມຖີ່ເພື່ອປະໂຫຍດສາທາລະນະ ແລະບໍ່ສະແຫວງກາກໍາໄລໃນທາງທຸລະກິດໃນການປະກອບກິດຈະການບໍລິການຊຸມຊົນບໍ່ຫນ້ອຍກວ່າຮ້ອຍລະສາວຂອງຄື້ນຄວາມຖີ່ໃນແຕ່ລະພື້ນທີ່ຂອງການອານຸຍາດປະກອບກິດຈະການ

ໃນການຈັດເຮັດແຜນແມ່ບົດໃນວັກຫນຶ່ງ ໃຫ້ ກສທຊ.ຮັບຟັງຄວາມຄິດເຫັນຂອງປະຊາຊົນຜູ້ປະກອບກິດຈະການ ແລະຫນ່ວຍງານຂອງລັດທີ່ກ່ຽວຂ້ອງ ເພື່ອເປັນແນວທາງໃນການພິຈາລະນາດ້ວຍ ທັງນີ້ ໄລຍະເວລາໃນການຮັບຟັງຄວາມຄິດເຫັນຕ້ອງບໍ່ຫນ້ອຍກວ່າສາມສິບມື້

ໃນກໍລະນີທີ່ ກສທຊ.ວິນິໄສເລື່ອງໃດບໍ່ສອດຄ່ອງກັບຄວາມຄິດເຫັນຂອງປະຊາຊົນ ຜູ້ປະກອບກິດຈະການຫລືຫນ່ວຍງານຂອງລັດຕາມທີ່ປາກົດໃນການຮັບຟັງຄວາມຄິດເຫັນຕາມວັກສອງ ກສທຊ.ຕ້ອງອຊີ້ແຈງແລະສະແດງເຫດຜົນໃຫ້ປະຊາຊົນ ຜູ້

ປະກອບກິດຈະການ ຫລືຫນ່ວຍງານຂອງລັດຮູ້ປະຊາຊົນ ຜູ້ປະກອບກິດຈະການ ຫລືຫນ່ວຍງານຂອງລັດຕາມວັກສາມ ຜູ້ໃດເຫັນວ່າແຜນແມ່ບົດທີ່ ກສທຊ.ກຳຫນົດຂັດຕໍ່ບົດບັນຍັດຂອງລັດຖະທຳມະນູນແຫ່ງລາດຊະອານາຈັກໄທ ໃຫ້ມີສິດຟ້ອງຄະດີຕໍ່ສານປົກຄອງໄດ້ໂດຍໃຫ້ຖືວ່າແຜນແມ່ບົດດັ່ງກ່າວເປັນກົດຫມາຍວ່າດ້ວຍການຈັດຕັ້ງສານປົກຄອງແລະວິທີພິຈາລະຂາຄະດີປົກຄອງ

ແຜນແມ່ບົດຕາມວັກຫນຶ່ງ ເມື່ອໄດ້ປະກາດໃນລາດຊະກິດຈານານຸເບກສາແລ້ວໃຫ້ຜູກພັນ ກສທຊແລະຫນ່ວຍງານຂອງລັດທີ່ກ່ຽວຂ້ອງ

ມາດຕາ 50 ເພື່ອປະໂຫຍດໃນການຈັດໃຫ້ມີບໍລິການໂທະຄົມມະນາຄົມພື້ນຖານໂດຍທົ່ວຖືງແລະບໍລິການເພື່ອສັງຄົມຕາມກົດຫມາຍວ່າດາຍການປະກອບກິດຈະການໂທລະຄົມມະນາຄົມ ໃຫ້ ກສທຊ.ກຳຫນົດແຜນການຈັດໃຫ້ມີບໍລິການໂທລະຄົມມະນາຄົມພື້ນຖານໂດຍທົ່ວຖືງແລະບໍລິການເພື່ອສັງຄົມ ໂດຍໃນແຜນຢ່າງຫນ້ອຍຈະຕ້ອງກຳຫນົດພື້ນທີ່ແລະກຸ່ມເປົ້າຫມາຍ ໄລຍະເວລາໃນການດຳເນີນການ ພ້ອມທັງປະມານການຄ່າໃຊ້ຈ່າຍທີ່ຈະເກີດຂື້ນຈາກການດຳເນີນການດັ່ງກ່າວ

ການຈັດເຮັດແຜນຕາມວັກຫນຶ່ງ ໃຫ້ ກສທຊ.ຫາລືກັບຫນ່ວຍງານຂອງລັດອື່ນທີ່ກ່ຽວຂ້ອງໂດຍຕ້ອງສອດຄ່ອງກັບນະໂຍບາຍທີ່ຄະນະລັດຖະມົນຕີຖະແຫລງໄວ້ຕໍ່ລັດຖະສະພາ

ໃຫ້ ກສທຊ.ປະກາດກຳຫນົດຈຳນວນຄ່າໃຊ້ຈ່າຍທີ່ຈະເອີ້ນເກັບຈາກຜູ້ໄດ້ຮັບໃບອານຸຍາດປະກອບກິດຈະການໂທລະຄົມມະນາຄົມເພື່ອນຳໄປໃຊ້ດຳເນີນການສະຫນັບສະຫນຸນການຈັດໃຫ້ມີບໍລິການໂທລະຄົມມະນາຄົມຕາມວັກຫນຶ່ງທັງນີ້ ໂດຍຄຳຫນຶ່ງຖືງລາຍໄດ້ທີ່ຜູ້ໄດ້ຮັບໃບອານຸຍາດໄດ້ຮັບຈາກການໃຫ້ບໍລິການໂທລະຄົມມະນາຄົມ

ໃຫ້ ກສທຊ.ປະກາດກຳຫນົດຈຳນວນເງີນຈາກກົງທຶນຕາມມາດຕາ 53(4)ທີ່ຈະນຳມາສະຫນັບສະຫນຸນຜູ້ໄດ້ຮັບໃບອານຸຍາດເພື່ອໃຫ້ສາມາດດຳເນີນການຈັດໃຫ້ມີບໍລິການດັ່ງກ່າວໄດ້

ມາດຕາ 51 ເພື່ອສົ່ງເສີມໃຫ້ພາກປະຊາຊົນໄດ້ໃຊ້ຄືນຄວາມຖີ່ຕາມສັດສ່ວນທີ່ກຳຫນົດໄວ້ໃນມາດຕາ49ວັກຫນຶ່ງ ໃຫ້ ກສທຊ.ກຳຫນົດຫລັກເກນແລະວິທີການໃນການສົ່ງເສີມຊຸມຊົນທີ່ມີຄວາມພ້ອມໃຫ້ເປັນຜູ້ທີ່ມີຄຸນສົມບັດໃນການຂໍຮັບໃບອານຸຍາດປະກອບກິດຈະການກະຈາຍສຽງຫລືກິດຈະການໂທລະທັດປະເພດບໍລິການຊຸມຊົນ ການຫາລາຍໄດ້ ແລະການສະຫນັບສະຫນຸນຜູ້ປະກອບກິດຈະການບໍລິການຊຸມຊົນທີ່ມີຄຸນນະພາບ ທັງນີ້ ໂດຍໃຫ້ຮັບຟັງຄວາມຄິດເຫັນຈາກປະຊາຊົນແລະຫນ່ວຍງານຂອງລັດທີ່ກ່ຽວຂ້ອງ ປະກອບດ້ວຍ

ລາຍໄດ້ຂອງຜູ້ປະກອບກິດຈະການບໍລິການຊຸມຊົນຕ້ອງເປັນລາຍໄດ້ຈາກການບໍລິຈາກ ການອຸດຫນູນສະຖານນີຫລືລາຍໄດ້ທາງອື່ນຊື່ງບໍ່ແມ່ນການໂຄສະຫນາຫລືການປະກອບກິດຈະການກະຈາຍສຽງຫລືກິດຈະການໂທລະທັດ

ການສະຫນັບສະຫນຸນຜູ້ປະກອບກິດຈະການບໍລິການຊຸມຊົນທີ່ມີຄຸນນະພາບຕ້ອງເປັນການອຸດຫນູນການດຳເນີນການຂອງສະຖານນີບໍ່ແມ່ນເປັນການສະຫນັບສະຫນູນລາຍການໃດໂດຍສະເພາະ ແລະມີສັດສ່ວນບໍ່ເກີນຄື່ງຫນຶ່ງຂອງລາຍໄດ້ທັງຫມົດຂອງຜູ້ປະກອບກິດຈະການບໍລິການຊຸມຊົນ ລວມທັງຕ້ອງຈັດໃຫ້ມີການປະເມີນຜົນຄຸນນະພາບການໃຫ້ບໍລິການແລະປະສິດທິພາບໃນການໃຊ້ຈ່າຍເງີນທີ່ໄດ້ຮັບການອຸດຫນູນເພື່ອໃຊ້ປະກອບການພິຈາລະນາຈັດສັນເງີນອຸດຫນູນໃນແຕ່ລະຄາວ

***ຫມວດທີ4***

***ກອງທຶນວິທະຍຸແລະພັດທະນາກິດຈະການກະຈາຍສຽງ ກິດຈະການໂທລະທັດ***

***ແລະກິດຈະການໂທລະຄົມມະນາຄົມ ເພື່ອປະໂຫຍດສາທາລະນະ***

-----------------------------

ມາດຕາ 52 ໃຫ້ຈັດຕັ້ງກອງທຶນຂື້ນໃນສຳນັກງານ ກສທຊ. ເອີ້ນວ່າ”ກອງທຶນວິໄຈແລະພັດທະນາກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມ ເພື່ອປະໂຫຍດສາທາລະນະ”ໂດຍມີວັດຖຸປະສົງດັ່ງຕໍ່ໄປນີ້

(1) ດຳເນີນການໃຫ້ປະຊາຊົນໄດ້ຮັບບໍລິການດ້ານກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ຢ່າງຖົ່ວຖືງ ຕະຫລອດຈົນສົ່ງເສີມຊຸມຊົນແລະສະຫນັບສະຫນູນຜູ້ປະກອບກິດຈະການການບໍລິການຊຸມຊົນຕາມາດຕາ51

(2) ສົ່ງເສີມແລະສະຫນັບສະຫນູນການພັດທະນາຊັບພະຍາກອນສື່ສານ ການວິໄຈແລະການພັດທະນາດ້ານກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ລວມທັງຄວາມສາມາດໃນການຮູ້ເທົ່າທັນສື່ເທັກໂນໂລຊີດ້ານການໃຊ້ຄື້ນຄວາມຖີ່ ເທັກໂນໂລຊີສາລະສົນເທດ ເທັກໂນໂລຊີສິ່ງອຳນວຍຄວາມສະດວກສຳຫລັບຜູ້ພິການ ຜູ້ສູງອາຍຸ ຫລືຜູ້ດ້ອຍໂອກາດ ຕະຫລອດຈົນອຸດສາຫະກຳໂທລະຄົມມະນາຄົມ ແລະອຸດສາຫະກຳຕໍ່ເນື່ອງ

(3) ສົ່ງເສີມແລະສະຫນັບສະຫນູນການພັດທະນາຊັບພະຍາກອນດ້ານກິດຈະການກະຈາຍສຽງ ກິດຈະການໂທລະທັດ ກິດຈະການໂທລະຄົມມະນາຄົມ ແລະເທັກໂນໂລຊີສາລະສົນເທດ ຕະຫລອດຈົນການດຳເນີນການຂອງອົງກອນຊຶ່ງເຮັດຫນ້າທີ່ຈັດເຮັດມາດຕະຖານທາງຈາລິຍະທຳຂອງການປະກອບອາຊີບຫລືວິຊາຊີບຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ

(4) ສະຫນັບສະຫນູນ ສົ່ງເສີມ ແລະຄຸ້ມຄອງຜູ້ບໍລິໂພກດ້ານກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(5) ສະຫນັບສະຫນູນການດຳເນີນການຕາມກົດຫມາຍວ່າດ້ວຍກອງທຶນພັດທະນາສື່ປອດໄພແລະສ້າງສັນໂດຍຈັດສັນເງິນໃຫ້ແກ່ກອງທຶນພັດທະນາສື່ປອດໄພແລະສ້າງສັນ

ມາດຕາ 53 ກອງທຶນຕາມມາດຕາ52 ປະກອບດ້ວຍ

(1) ທຶນປະເດີມທີ່ລັດຖະບານຈັດສັນໃຫ້

(2) ເງິນທີ່ໄດ້ຈາກການປະເມີນຄື້ນຄວາມຖີ່ ຕາມມາດຕາ41ວັກຫົກ

(3) ເງິນທີ່ໄດ້ຮັບການຈັດສັນຕາມມາດຕາ65ວັກສອງ

(4) ເງິນທີ່ສົ່ງເຂົ້າກອງທຶນຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດແລະກົດຫມາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມ

(5) ເງິນຄ່າປັບໄຫມທາງປົກຄອງທີ່ປັບໄຫມຕາມພະລາດຊະບັນຍັດນີ້ ແລະຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ ແລະຕາມກົດຫມາຍວ່າດ້ວຍການປະກອບກິດຈະການ ໂ ທ ລ ະ ຄົມມະນາຄົມ

(6) ເງິນຫລືຊັບສິນທີ່ມີຜູ້ມອບໃຫ້ເພື່ອສົມທົບກອງທຶນ

(7) ເງິນແລະຊັບສິນທີ່ໄດ້ຮັບໂອນມາຕາມມາດຕາ91

(8) ດອກຜົນແລະລາຍໄດ້ຂອງກອງທຶນ ລວມທັງຜົນປະໂຫຍດຈາກຄ່າຕອບແທນການໃຊ້ປະໂຫຍດຈາກການວິໄຈແລະພັດທະນາດ້ານກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(9) ເງິນແລະຊັບສິນອື່ນທີ່ຕົກເປັນຂອງກອງທຶນ

ເງິນກອງທຶນຕາມ(4)ແລະ(7)ໃຫ້ໃຊ້ໄດ້ສະເພາະເພື່ອວັດຖຸປະສົງຕາມມາດຕາ52(1)

ເງິນກອງທຶນຕາມ(4)ທີ່ໄດ້ຮັບຈາກກິດຈະການໃດໃຫ້ໃຊ້ສະເພາະເພື່ອກິດຈະການນັ້ນ ເວັ້ນແຕ່ເງິນທີ່ໄດ້ຮັບຈາກກິດຈະການກະຈາຍສຽງແລະກິດຈະການໂທລະທັດ ໃຫ້ໃຊ້ເພື່ອກິດຈະການກະຈາຍສຽງຫລືກິດຈະການ ໂທລະທັດກໍ່ໄດ້

ມາດຕາ 54 ໃຫ້ມີຄະນະກຳມະການບໍລິຫານກອງທຶນຄະນະຫນຶ່ງ ປະກອບດ້ວຍ

(1) ປະຊາຊົນ ກສທຊ.ເປັນປະທານກຳມະການ

(2) ປະຫລັດສຳນັກງານນາຍົກລັດຖະມົນຕີ ເລຂາທິການຄະນະກຳມະການພັດທະນາການເສດຖະກິດແລະສັງຄົມແຫ່ງຊາດ ອະທິບໍດີກົມບັນຊີກາງ ແລະຜູ້ອຳນວຍການສູນເທັກໂນໂລຊີອີເລັກໂທນິກແລະຄອມພິວເຕີ້ແຫ່ງຊາດ ເປັນກຳມະການໂດຍຕຳແຫນ່ງ

(3) ຜູ້ຊົງຄຸນນະວຸດທີ່ມີຄວາມຮູ້ແລະປະສົບການດ້ານການພັດທະນາບຸກຄະລາກອນແລະວິຊາຊີບສື່ກະຈາຍສຽງຈຳນວນຫນຶ່ງຄົນ ແລະສື່ໂທລະທັດຈຳນວນຫນຶ່ງຄົນ ຊຶ່ງກຳມະການຕາມ(1)ແລະ(2) ເປັນຜູ້ຄັດເລືອກ

(4) ຜູ້ຊົງຄຸນນະວຸດທີ່ມີຄວາມຮູ້ແລະປະສົບການດ້ານການໃຫ້ບໍລິການໂທລະຄົມມະນາຄົມພື້ນຖານຢ່າງທົ່ວຖືງຫລືໃນພື້ນທີ່ຫ່າງໄກ ລວມທັງການໃຫ້ບໍລິການໃນດ້ານໂທລະຄົມມະນາຄົມແກ່ຜູ້ດ້ອຍໂອກາດຊຶ່ງກຳມະການຕາມ(1)ແລະ(2)ເປັນຜູ້ຄັດເລືອກຈຳນວນຫນຶ່ງຄົນ

(5) ຜູ້ຊົງຄຸນນະວຸດທີ່ມີຄວາມຮູ້ແລະປະສົບການດ້ານການຄຸ້ມຄອງສິດຂອງຜູ້ບໍລິໂພກຫລືການສົ່ງເສີມສິດແລະ ເສລີພາບຂອງປະຊາຊົນ ຊຶ່ງກຳມະການຕາມ (1)ແລະ(2)ເປັນຜູ້ຄັດເລືອກຈຳນວນຫນຶ່ງຄົນ

(6) ຜູ້ຊົງຄຸນນະວຸດທີ່ມີຄວາມຮູ້ແລະປະສົບການດ້ານການສົ່ງເສີມແລະຄຸ້ມຄອງສິດຂອງຜູ້ພິການແລະຜູ້ດ້ອຍ ໂອກາດຊຶ່ງກຳມະການຕາມ(1)ແລະ(2)ເປັນຜູ້ຄັດເລືອກຈຳນວນຫນຶ່ງຄົນ

ໃຫ້ເລຂາທິການ ກສທຊ.ເປັນກຳມະການ ແລະເລຂານຸການ ແລະໃຫ້ເລຂາທິການ ກສທຊ.ແຕ່ງຕັ້ງພະນັກງານຂອງສຳນັກງານ ກສທຊ.ເປັນຜູ້ຊ່ວຍເລຂານຸການ

ກຳມະການຕາມວັກຫນຶ່ງແລະ(3)(4)(5)ແລະ(6)ຕ້ອງບໍ່ມີລັກສະນະຕ້ອງຫ້າມຕາມມາດຕາ 7 1 (1) (2) (3) (4) (5) (6) (7) (8) (9) (10)ແລະ(11)ແລະມີວາລະການດຳລົງຕຳແຫນ່ງຄາວລະສາມປີແລະອາດໄດ້ຮັບການແຕ່ງຕັ້ງອີກໄດ້ ແຕ່ຈະດຳລົງຕຳແຫນ່ງຕິດຕໍ່ກັນເກີນສອງວາລະບໍ່ໄດ້

ໃຫ້ນຳມາດຕາ23 ມາໃຊ້ບັງຄັບກັບການປະຊຸມຂອງຄະນະກຳມະການບໍລິຫານກອງທຶນໂດຍອານຸໂລມ

ມາດຕາ 55ຄະນະກຳມະການບໍລິຫານກອງທຶນມີອຳນາດຫນ້າທີ່ໃນການບໍລິຫານກອງທຶນແລະສະເຫນີຄວາມເຫັນກ່ຽວກັບການຈັດສັນເງິນກອງທຶນເພື່ອໃຊ້ຈ່າຍຕາມວັດຖຸປະສົງຕາມມາດຕາ52ຕໍ່ ກສທຊ.ເພື່ອພິຈາລະນາໃຫ້ຄວາມເຫັນຊອບ ໃນກໍລະນີ

ກສທຊ.ມີຄວາມເຫັນແຕກຕ່າງຈາກຄະນະກຳມະການບໍລິຫານກອງທຶນ ກສທຊ.ຕ້ອງໃຫ້ເຫດຜົນປະກອບການພິຈາລະນາໄວ້ດ້ວຍ

ໃຫ້ຄະນະກຳມະການບໍລິຫານກອງທຶນເປີດເຜີຍລາຍລະອຽດກ່ຽວກັບການຈັດສັນເງິນກອງທຶນ ແລະການດຳເນີນການຕາມວັກຫນຶ່ງໃຫ້ປະຊາຊົນຮູ້ຜ່ານທາງສື່ອີເລັກໂທນິກຂອງສຳນັກງານ ກສທຊ. ໂດຍຕ້ອງສະແດງຂໍ້ມູນກ່ຽວກັບຜູ້ທີ່ຂໍແລະຜູ້ທີ່ໄດ້ຮັບການຈັດສັນເງິນຈາກກອງທຶນແລະຈຳນວນເງິນທີ່ໄດ້ຮັບຈາກການຈັດສັນທັງຫມົດດ້ວຍ

ການເກັບຮັກສາ ການໃຊ້ຈ່າຍ ການຈັດເຮັດບັນຊີແລະລະບົບບັນຊີ ໃຫ້ເປັນໄປຕາມລະບຽບທີ່ຄະນະກຳມະການບໍລິຫານກອງທຶນກຳຫນົດ

## *ຫມວດທີ5*

## *ສຳນັກງານຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ*

---------------------

ມາດຕາ 56 ໃຫ້ມີສຳນັກງານຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເອີ້ນໂດຍຫຍໍ້ວ່າ”ສຳນັກງານ ກສທຊ”ມີຖານະເປັນຫນ່ວຍງານຂອງລັດທີ່ບໍ່ເປັນສ່ວນລາດຊະການຕາມກົດຫມາຍວ່າດ້ວຍລະບຽບບໍລິຫານລາດຊະການແຜ່ນດິນແລະບໍ່ເປັນລັດວິສາຫະກິດຕາມກົດຫມາຍວ່າດ້ວຍວິທີການງົບປະມານຫລືກົດຫມາຍອື່ນ ແລະຢູ່ພາຍໃຕ້ການກຳກັບເບິ່ງແຍງຂອງປະທານກຳມະການ

ກິດຈະການຂອງສຳນັກງານ ກສທຊ.ບໍ່ຢູ່ພາຍໃຕ້ບັງຄັບແຫ່ງກົດຫມາຍວ່າດ້ວຍການຄຸ້ມຄອງແຮງງານ ກົດຫມາຍວ່າດ້ວຍແຮງງານສຳພັນ ກົດຫມາຍວ່າດ້ວຍການປະກັນສັງຄົມແລະກົດຫມາຍວ່າດ້ວຍເງິນທົດແທນ

ມາດຕາ 57 ໃຫ້ສຳນັກງານ ກສທຊ.ມີອຳນາດຫນ້າທີ່ດັ່ງຕໍ່ໄປນີ້

(1) ຮັບຜິດຊອບໃນການຮັບແລະຈ່າຍເງິນລາຍໄດ້ຂອງສຳນັກງານ ກສທຊ.

(2) ຈັດເຮັດງົບປະມານລາຍຈ່າຍປະຈຳປີຂອງສຳນັກງານ ກສທຊ.ເພື່ອສະເຫນີ ກສທຊ.ອານຸມັດໂດຍລາຍຈ່າຍ ປະຈຳປີຂອງສຳນັກງານ ກສທຊ.ໃຫ້ຫມາຍຄວາມລວມເຖິງລາຍຈ່າຍໃດໆອັນກ່ຽວກັບການດຳເນີນການຕາມອຳນາດຫນ້າທີ່ຂອງ ກສທຊ. ກສທ.ກທຄ.ແລະສຳນັກງານ ກສທຊ.

(3) ກວດສອບແລະຕິດຕາມການໃຊ້ຄື້ນຄວາມຖີ່

(4) ຮັບແລະພິຈາລະນາເລື່ອງຮ້ອງຮຽນກ່ຽວກັບການໃຊ້ຄື້ນຄວາມຖີ່ ການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ເພື່ອກວດສອບແລະແກ້ໄຂບັນຫາຫລືສະເຫນີ ຄວາມເຫັນຕໍ່ ກສທຊ.ເພື່ອພິຈາລະນາຕາມຫລັກການທີ່ ກສທຊ.ກຳຫນົດ

(5) ສຶກສາລວບລວມແລະວິເຄາະຂໍ້ມູນກ່ຽວກັບຄື້ນຄວາມຖີ່ ການໃຊ້ຄື້ນຄວາມຖີ່ ການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ

(6) ຮັບຜິດຊອບວຽກທຸລະການຂອງ ກສທຊ.ກສທ.ກທຄ.ແລະຄະນະກຳມະການບໍລິຫານກອງທຶນ

(7) ປະຕິບັດການອື່ນຕາມທີ່ ກສຫຊ.ກສທ.ແລະ ກທຄ.ມອບຫມາຍ

ມາດຕາ 58 ໃຫ້ ກສຫຊ.ມີອຳນາດອອກລະບຽບຫລືປະກາດກ່ຽວກັບການບໍລິຫານວຽກທົ່ວໄປ ການບໍລິຫານວຽກບຸກຄົນ ການງົບປະມານ ການເງິນແລະຊັບສິນ ແລະການດຳເນີນການອື່ນຂອງສຳນັກງານ ກສຫຊ.ໂດຍໃຫ້ລວມເຖິງເລື່ອງດັ່ງຕໍ່ໄປນີ້ດ້ວຍ

(1) ການແບ່ງສ່ວນວຽກພາຍໃນຂອງສຳນັກງານ ກສຫຊ. ແລະຂອບເຂດຫນ້າທີ່ຂອງສ່ວນວຽກດັ່ງກ່າວ

(2) ການກຳຫນົດຕຳແຫນ່ງ ອັດຕາເງິນເດືອນ ແລະຄ່າຕອບແທນອື່ນຂອງເລຂາທິການ ກສຫຊ.ພະນັກງານແລະລູກຈ້າງຂອງສຳນັກງານ ກສຫຊ.ຕະຫລອດຈົນຄ່າຕອບແທນແລະຄ່າໃຊ້ຈ່າຍຂອງກຳມະການອື່ນແລະອານຸກຳມະການຕາມພະລາດຊະບັນຍັດນີ້

(3) ການຄັດເລືອກຫລືການປະເມີນຄວາມຮູ້ຄວາມສາມາດເພື່ອປະໂຫຍດໃນການບັນຈຸແລະແຕ່ງຕັ້ງໃຫ້ດຳລົງຕຳແຫນ່ງ ຫລືການເລື່ອນຂັ້ນເງິນເດືອນ ຫລັກເກນການຕໍ່ສັນຍາຈ້າງ ແລະການຈ່າຍເງິນຊົດເຊີຍກໍລະນີເລີກຈ້າງເນື່ອງຈາກບໍ່ຜ່ານການປະເມີນ

(4) ການບໍລິຫານວຽກບຸກຄົນ ລວມຕະຫລອດທັງການດຳເນີນການທາງວິໄນ ການອຸທອນ ແລະຮ້ອງທຸກ

(5) ການຮັກສາການແທນແລະການປະຕິບັດການແທນ

(6) ການກຳຫນົດເຄື່ອງແບບແລະການແຕ່ງກາຍຂອງພະນັກງານແລະລູກຈ້າງຂອງສຳນັກງານ ກສຫຊ.

(7) ການຈ້າງແລະການແຕ່ງຕັ້ງບຸກຄົນເພື່ອເປັນຜູ້ຊ່ຽວຊານຫລືເປັນຜູ້ຊຳນານການສະເພາະດ້ານອັນຈະເປັນ ປະໂຫຍດຕໍ່ການປະຕິບັດຫນ້າທີ່ຂອງ ກສຫຊ.ລວມທັງອັດຕາຄ່າຕອບແທນການຈ້າງ

(8) ການບໍລິຫານຈັດການແລະງົບປະມານ ຊັບສິນ ແລະການພັດສະດຸຂອງສຳນັກງານ ກສຫຊ.

(9) ການຈັດສະຫວັດດີການຫລືການສົງເຄາະອື່ນ

ລະບຽບຫລືປະກາດຕາມວັກຫນຶ່ງ ໃຫ້ປະທານກຳມະການເປັນຜູ້ລົງນາມ ແລະເມື່ອໄດ້ປະກາດໃນລາດຊະກິດຈານຸເບກສາແລ້ວໃຫ້ໃຊ້ບັງຄັບໄດ້

ມາດຕາ 59 ໃຫ້ສຳນັກງານ ກສຫຊ. ເປີດເຜີຍຂໍ້ມູນກ່ຽວກັບການດຳເນີນວຽກຂອງ ກສຫຊ.ແລະສຳນັກງານ ກສຫຊ.ໃຫ້ປະຊາຊົນຮູ້ທາງລະບົບເຄືອຂ່າຍສາລະສົນເທດ ຫລືວິທີການອື່ນທີ່ເຫັນສົົມຄວນໂດຍຢ່າງຫນ້ອຍຕ້ອງເປີດເຜີຍຂໍ້ມູນດັ່ງຕໍ່ໄປນີ້

(1) ໃບອານຸຍາດກິດຈະການຂອງຜູ້ໄດ້ຮັບໃບອານຸຍາດທຸກຄົນ ພ້ອມທັງເງື່ອນໄຂທີ່ກຳຫນົດ

(2) ລາຍໄດ້ຂອງສຳນັກງານ ກສຫຊ.ຕາມມາດຕາ 65ເປັນລາຍເດືອນໂດຍສະຫລຸບ

(3) ລາຍຈ່າຍສຳຫລັບການດຳເນີນວຽກຂອງ ກສຫຊ.ແລະສຳນັກງານ ກສຫຊ.ເປັນລາຍເດືອນໂດຍສະຫລຸບ

(4) ລາຍລະອຽດຂອງອັດຕາຄ່າຕອບແທນກຳມະການ ກສທ.ກທຄ.ອານຸກຳມະການແລະທີ່ປຶກສາຕ່າງໆເປັນລາຍບຸກຄົນ

(5) ຜົນການສຶກສາວິໄຈແລະຜົນງານອື່ນໆທີ່ວ່າຈ້າງໃຫ້ຫນ່ວຍງານພາຍນອກດຳເນີນການ

(6) ລາຍການເລື່ອງຮ້ອງຮຽນ ຄວາມຄືບຫນ້າແລະຜົນການພິຈາລະນາເລື່ອງຮ້ອງຮຽນຂອງຜູ້ບໍລິິໂພກແລະຜູ້ຮັບໃບອານຸຍາດແລະຈຳນວນເລື່ອງທີ່ຍັງຄ້າງພິຈາລະນາ

(7) ລາຍລະອຽດຂອງຜົນການຈັດຊື້ຈັດຈ້າງຂອງສໍານັກງານ ກສທຊ.ແລະສັນຍາຕ່າງໆ ທີ່ກ່ຽວຂ້ອງ

ມາດຕາ 60 ໃຫ້ສໍານັກງານ ກສທຊ.ມີເລຂາທິການ ກສທຊ.ຄົນໜຶ່ງຮັບຜິດຊອບການປະຕິບັດວຽກຂອງສໍານັກງານ ກສທຊ.ຂື້ນຕົງຕໍ່ປະທານກໍາມະການ ແລະເປັນຜູ້ບັງຄັບບັນຊາພະນັກງານແລະລູກຈ້າງຂອງສໍານັກງານ ກສທຊ.

ໃນກິດຈະການຂອງສໍານັກງານ ກສທຊ.ທີ່ກ່ຽວກັບບຸກຄົນພາຍນອກ ໃຫ້ເລຂາທິການ ກສທຊ.ເປັນຜູ້ແທນຂອງສໍານັກງານ ກສທຊ.ເພື່ອການນີ້ເລຂາທິການ ກສທຊ.ຈະມອບອໍານາດໃຫ້ບຸກຄົນໃດປະຕິບັດວຽກສະເພາະຢ່າງແທນກໍ່ໄດ້ ທັງນີ້ຕາມລະບຽບທີ່ ກສທຊ.ກໍາຫນົດ ໂດຍປະກາດໃນລາດຊະກິດຈານຸເບກສາ ລະບຽບດັ່ງກ່າວຈະກໍາຫນົດໃນລັກສະນະບັງຄັບໃຫ້ເລຂາທິການ ກສທຊ.ຕ້ອງມອບອໍານາດໃຫ້ບຸກຄົນໃດບໍ່ໄດ້

ມາດຕາ 61 ໃຫ້ປະທານກໍາມະການ ໂດຍຄວາມເຫັນຊອບຂອງ ກສທຊ.ເປັນຜູ້ແຕ່ງຕັ້ງແລະຖອດຖອນເລຂາທິການ ກສທຊ.

ເລຂາທິການ ກສທຊ.ຕ້ອງມີອາຍຸບໍ່ຕ່ໍາກວ່າສາມສິບຫ້າປີບໍລິບູນໃນມື້ແຕ່ງຕັ້ງແລະຕ້ອງມີຄຸນສົມບັດແລະບໍ່ມີລັກສະນະຕ້ອງຫ້າມຕາມມາດຕາ7ລວມທັງຄຸນສົມບັດອື່ນຕາມທີ່ ກສທຊ.ກໍາຫນົດ

ມາດຕາ62 ເລຂາທິການ ກສທຊ.ມີວາລະການດໍາລົງຕໍາແຫນ່ງຄາວລະຫ້າປີນັບແຕ່ມື້ທີ່ໄດ້ຮັບແຕ່ງຕັ້ງແລະອາດໄດ້ຮັບແຕ່ງຕັ້ງອີກໄດ້ ແຕ່ຈະດໍາລົງຕໍາແຫນ່ງຕິດຕໍ່ກັນເກີນສອງວາລະບໍ່ໄດ້

ມາດຕາ 63 ນອກຈາກການພົ້ນຈາກຕໍາແຫນ່ງຕາມວາລະຕາມມາດຕາ62ເລຂາທິການ ກສທຊ.ພົ້ນຈາກຕໍາແຫນ່ງເມື່ອ

(1) ຕາຍ

(2) ມີອາຍຸຄົບຫົກສິບປີບໍລິບູນ

(3) ລາອອກ

(4) ເປັນບຸກຄົນລົ້ມລະລາຍ

(5) ໄດ້ຮັບໂທດຕິດຄຸກໂດຍຄໍາພິພາກສາຖືງທີ່ສຸດໃຫ້ຕິດຄຸກ

(6) ຂາດຄຸນສົມບັດຫລືມີລັກສະນະຕ້ອງຫ້າມຕາມມາດຕາ61ວັກສອງ

(7) ກສທຊ.ມີມະຕິດ້ວຍຄະແນນສຽງບໍ່ຫນ້ອກວ່າສອງໃນສາມຂອງຈໍານວນກໍາມະການທັງຫມົດໃຫ້ອອກຈາກຕໍາແຫນ່ງເພາະບົກພ່ອງຕໍ່ຫນ້າທີ່ ມີຄວາມປະພຶດເສື່ອມເສຍ ຫຍ່ອນຄວາມສາມາດ ຫລືບໍ່ສາມາດປະຕິບັດ ຫນ້າທີ່ໄດ້

ມາດຕາ 64 ໃຫ້ເລຂທິການ ກສທຊ.ແລະພະນັກງານຂອງສໍານັກງານ ກສທຊ.ເປັນເຈົ້າຫນ້າທີ່ຂອງລັດຕາມກົດຫມາຍປະກອບລັດຖະທໍາມະນູນວ່າດ້ວຍການປ້ອງກັນແລະປາບປາມການທຸດຈະຫລິດ

ພະນັກງານຂອງສໍານັກງານ ກສທຊ.ຕ້ອງມີຄຸນສົມບັດແລະບໍ່ມີລັກສະນະຕ້ອງຫ້າມຕາມລະບຽບທີ່ ກສທຊ.ກໍາຫນົດແລະຕ້ອງບໍ່ເປັນກໍາມະການ ຜູ້ຈັດການ ຜູ້ບໍລິຫານ ທີ່ປຶກສາ ພະນັກງານ ຜູ້ຖືຫຸ້ນ ຫລືຫຸ້ນສ່ວນໃນບໍລິສັດຫລືຫ້າງຫຸ້ນສ່ວນຫລືນິຕິບຸກຄົນອື່ນໃດບັນດາທີ່ປະກອບທຸລະກິດດ້ານກິດຈະການກະຈາຍສຽງກິດຈະການໂທລະທັດຫລືກິດຈະການໂທລະຄົມມະນາຄົມ

ໃຫ້ເລຂາທິການ ກສທຊ.ເປັນຜູ້ດຳລົງຕຳແຫນ່ງລະດັບສູງຕາມກົດຫມາຍປະກອບລັດຖະທຳມະນູນວ່າດ້ວຍການປ້ອງກັນແລະປາບປາມການທຸດຈະຫລິດ

ໃນການປະຕິບັດຫນ້າທີ່ຕາມພະລາດຊະບັນຍັດນີ້ ໃຫ້ເລຂາທິການ ກສທຊ.ແລະພະນັກງານເຈົ້າຫນ້າທີ່ເປັນເຈົ້າພະນັກງານຕາມປະມວນກົດຫມາຍອາຍາ

ມາດຕາ 65 ລາຍໄດ້ຂອງສຳນັກງານ ກສທຊ.ມີດັ່ງຕໍ່ໄປນີ້

(1) ຄ່າທຳນຽມໃບອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ແລະຄ່າທຳນຽມໃບອານຸຍາດປະກອບກິດຈະການຕາມາດຕາ42 ວັກສອງ ແລະມາດຕາ45ວັກສາມ

(2) ລາຍໄດ້ຫລືຜົນປະໂຫຍດອັນໄດ້ມາຈາກການດຳເນີນວຽກງານຕາມອຳນາດຫນ້າທີ່ຂອງ ກສທຊ.ແລະສຳນັກງານກສທຊ.

(3) ລາຍໄດ້ຈາກຊັບສິນຂອງສຳນັກງານ ກສທຊ.

(4) ເງິນແລະຊັບສິນທີ່ມີຜູ້ບໍລິຈາກໃຫ້ແກ່ສຳນັກງານ ກສທຊ.ຕາມລະບຽບທີ່ ກສທຊ.ກຳຫນົດເພື່ອໃຊ້ໃນການດຳເນີນວຽກຂອງສຳນັກງານ ກສທຊ.

(5) ເງິນອຸດຫນູນທົ່ວໄປທີ່ລັດຖະບານຈັດສັນໃຫ້

ລາຍໄດ້ຂອງສຳນັກງານ ກສທຊ.ຕາມ(1)ແລະ(2)ເມື່ອໄດ້ຫັກລາຍຈ່າຍສຳຫລັບການດຳເນີນວຽກຢ່າງມີປະສິດທິພາບຂອງສຳນັກງານ ກສທຊ.ຄ່າພາລະຕ່າງໆທີ່ຈຳເປັນ ເງິນທີ່ຈັດສັນເພື່ອສົມທົບກອງທຶນມາດຕາ 52ແລະກອງທຶນພັດທະນາເທັກໂນໂລຊີເພື່ອການສຶກສາຕາມກົດຫມາຍວ່າດ້ວຍການສຶກສາແຫ່ງຊາດຫລືເທົ່າໃດໃຫ້ນຳສົ່ງເປັນລາຍໄດ້ແຜ່ນດິນ

ໃນກໍລະນີລາຍໄດ້ຂອງສຳນັກງານ ກສທຊ.ມີຈຳນວນບໍ່ພໍສຳຫລັບຄ່າໃຊ້ຈ່າຍໃນການດຳເນີນວຽກຢ່າງມີປະສິດທິພາບຂອງສຳນັກງານ ກສທຊ.ລວມທັງຄ່າພາລະຕ່າງໆທີ່ຈຳເປັນແລະບໍ່ສາມາດຫາເງິນຈາກແຫລ່ງອື່ນໄດ້ລັດຈະຈັດສັນເງິນງົບປະມານແຜ່ນດິນໃຫ້ແກ່ສຳນັກງານ ກສທຊ.ເທົ່າຈຳນວນທີ່ຈຳເປັນ

ມາດຕາ 66 ເພື່ອປະໂຫຍດໃນການຈັດສັນເງິນງົບປະມານແຜ່ນດິນໃຫ້ແກ່ສຳນັກງານ ກສທຊ.ຕາມມາດຕາ65 ວັກສາມ ໃຫ້ສຳນັກງານ ກສທຊ.ສະເຫນີງົບປະມານລາຍຈ່າຍຂອງປີງົບປະມານທີ່ຂໍຄວາມສະຫນັບສະຫນູນຕໍ່ຄະນະລັດຖະມົນຕີ ເພື່ອຈັດສັນເງິນອຸດຫນູນທົ່ວໄປຂອງສຳນັກງານ ກສທຊ.ໄວ້ໃນຮ່າງພະລາດຊະບັນຍັດງົບປະມານລາຍຈ່າຍປະຈຳປີຫລືຮ່າງພະລາດຊະບັນຍັດງົບປະມານລາຍຈ່າຍເພີ່ມເຕີມ ແລ້ວແຕ່ກໍລະນີ ໃນການນີ້ຄະນະລັດຖະມົນຕີອາດເຮັດຄວາມເຫັນກ່ຽວກັບການຈັດສັນງົບປະມານຂອງສຳນັກງານ ກສທຊ.ໄວ້ໃນລາຍງານການສະເຫນີຮ່າງພະລາດຊະບັນຍັດງົບປະມານລາຍຈ່າຍປະຈຳປີຫລືຮ່າງພະລາດຊະບັນຍັດງົບປະມານລາຍຈ່າຍເພີ່ມເຕີມດ້ວຍກໍ່ໄດ້ແລະໃນການພິຈາລະນາຮ່າງພະລາດຊະບັນຍັດງົບປະມານລາຍຈ່າຍປະຈຳປີຫລືພະລາດຊະບັນຍັດງົບປະມານລາຍຈ່າຍເພີ່ມເຕີມ ສະພາຜູ້ແທນລາດຊະດອນຫລືວຸດທິສະພາອາດຂໍໃຫ້ເລຂາທິການ ກສທຊ.ເຂົ້າຊີ້ແຈງເພື່ອປະກອບການພິຈາລະນາໄດ້

ມາດຕາ 67 ບັນດາອາສັງຫາລິມມະຊັບທີ່ສຳນັກງານ ກສທຊ.ໄດ້ມາໂດຍການຊື້ຫລືແລກປ່ຽນຈາກລາຍໄດ້ຂອງສຳນັກງານ ກສທຊ.ຕາມມາດຕາ65 (1)(2)ຫລື(3)ຫລື ທີ່ມີຜູ້ບໍລິຈາກໃຫ້ຕາມ(4)
ໃຫ້ເປັນກຳມະສິດຂອງສຳນັກງານ ກສທຊ.

ອາສັງຫາລິມມະຊັບທີ່ເປັນລາດພັດສະດຸຕາມກົດໝາຍວ່າດ້ວຍລາດພັດສະດຸທີ່ຢູ່ໃນຄວາມຄອບຄອງຂອງສໍານັກງານ ກສທຊ. ໃຫ້ສໍານັກງານ ກສທຊ.ມີອໍານາດໃນການປົກຄອງ ເບິ່ງແຍງ ບໍາລຸງຮັກສາ ໃຊ້ ແລະຈັດຫາຜົນປະໂຫຍດໄດ້ ຕາມລະບຽບທີ່ ກສທຊ.ກໍາໜົດ

ຊັບສິນຂອງສໍານັກງານ ກສທຊ.ບໍ່ຢູ່ໃນຄວາມຮັບຜິດຊອບແຫ່ງການບັງຄັບຄະດີ

ມາດຕາ 68 ການບັນຊີຂອງສໍານັກງານ ກສທຊ.ໃຫ້ຈັດເຮັດຕາມຫລັກສາກົນຕາມມາດຕະຖານຂອງສະພາຜູ້ສອບບັນຊີ ແລະຕ້ອງຈັດໃຫ້ມີການກວດສອບພາຍໃນກ່ຽວກັບການເງິນ ການບັນຊີ ແລະການພັດສະດຸຂອງສໍານັກງານ ກສທຊ.ຕາມລະບຽບທີ່ ກສທຊ.ກໍາໜົດ

ໃນການກວດສອບພາຍໃນຕາມວັກໜຶ່ງ ໃຫ້ມີຄະນະກໍາມະການກວດສອບພາຍໃນຈໍານວນບໍ່ໜ້ອຍກວ່າສາມຄົນແລະບໍ່ເກີນຫ້າຄົນ ຊຶ່ງ ກສທຊ.ແຕ່ງຕັ້ງຈາກຜູ້ຊົງຄຸນນະວຸດຊຶ່ງມີຄວາມຮູ້ຄວາມສາມາດໃນການກວດສອບພາຍໃນແລະມີຄຸນສົມບັດແລະບໍ່ມີລັກສະນະຕ້ອງຫ້າມຕາມມາດຕາ7ແລະມາດຕາ8ແລະໃຫ້ສໍານັກງານ ກສທຊ.ຈັດໃຫ້ມີເຈົ້າໜ້າທີ່ຜູ້ກວດສອບພາຍໃນມີຈໍານວນຕາມສົມຄວນຂຶ້ນກວດຕໍ່ຄະນະກໍາມະການກວດສອບພາຍໃນ ເພື່ອເຮັດໜ້າທີ່ຊ່ວຍຄະນະກໍາມະການກວດສອບພາຍໃນການດໍາເນີນການຕາມອໍານາດໜ້າທີ່

ໃຫ້ຄະນະກໍາມະການກວດສອບພາຍໃນມີອິສະຫລະໃນການປະຕິບັດໜ້າທີ່ ແລະໃຫ້ ກສທຊ.ເລຂາທິການ ກສທຊ.ແລະພະນັກງານຂອງສໍານັກງານ ກສທຊ.ອໍານວຍຄວາມສະດວກແກ່ຄະນະກໍາມະການກວດສອບພາຍໃນແລະເຈົ້າໜ້າທີ່ຜູ້ກວດສອບພາຍໃນຕາມທີ່ຮ້ອງຂໍ

ໃຫ້ຄະນະກໍາມະການກວດສອບພາຍໃນແຈ້ງຜົນການກວດສອບຕໍ່ ກສທຊ.ທຸກໜຶ່ງຮ້ອຍແປດສິບມື້

ວາລະການດໍາລົງຕໍາແໜ່ງ ການພົ້ນຈາກຕໍາແໜ່ງ ແລະການປະຊຸມຂອງຄະນະກໍາມະການກວດສອບພາຍໃນໃຫ້ເປັນໄປຕາມລະບຽບທີ່ ກສທຊ.ກໍາໜົດ

ມາດຕາ 69 ໃຫ້ສໍານັກງານ ກສທຊ.ຈັດເຮັດງົບດຸນ ງົບການເງິນ ແລະບັນຊີເຮັດການສົ່ງຜູ້ສອບບັນຊີພາຍໃນຫົກສິບມື້ນັບແຕ່ມື້ສິ້ນປີບັນຊີ

ໃນທຸກຮອບປີ ໃຫ້ສໍານັກງານການກວດສອບເງິນແຜ່ນດິນເປັນຜູ້ກວດສອບບັນຊີແລະປະເມີນຜົນການໃຊ້ຈ່າຍເງິນແລະຊັບສິນຂອງສໍານັກງານ ກສທຊ.ໂດຍໃຫ້ວິເຄາະປະສິດທິຜົນຂອງການໃຊ້ຈ່າຍເງິນພ້ອມທັງສະແດງຄວາມຄິດເຫັນວ່າການໃຊ້ຈ່າຍດັ່ງກ່າວເປັນໄປຕາມວັດຖຸປະສົງແລະໄດ້ຜົນຕາມເປົ້າໝາຍພຽງໃດດ້ວຍ ແລ້ວເຮັດບັນທຶກລາຍງານຜົນສະເໜີຕໍ່ ກສທຊ. ຄະນະລັດຖະມົນຕີ ແລະລັດຖະສະພາ

ໃຫ້ສໍານັກງານ ກສທຊ.ເປັນໜ່ວຍຮັບກວດສອບກົດໝາຍປະກອບລັດຖະທໍາມະນູນວ່າດ້ວຍການກວດເງິນແຜ່ນດິນ

***ໝວດທີ6***

***ການຕິດຕາມ ກວດສອບ ແລະປະເມີນຜົນການດໍາເນີນການແລະການບໍລິຫານວຽກ***

-------------------------------

ມາດຕາ 70 ໃຫ້ມີຄະນະກໍາມະການຕິດຕາມແລະປະເມີນຜົນການປະຕິບັດວຽກຄະນະໜຶ່ງ ປະກອບດ້ວຍປະທານກໍາມະການຄົນໜຶ່ງແລະກໍາມະການອື່ນອີກຈໍານວນສີ່ຄົນ ຊຶ່ງມີຄຸນສົມບັດດັ່ງຕໍ່ໄປນີ້

(1) ເປັນຜູ ູ້ທີ່ມີພືນງານຫລືມີຄວາມຮູ້ ແລະມີຄວາມຊ່ຽວຊານຫລືປະສົບການດ້ານກິດຈະການກະຈາຍສຽງຈຳນວນຫນຶ່ງຄົນ ແລະດ້ານກິດຈະການໂທລະທັດຈຳນວນຫນຶ່ງຄົນ

(2) ເປັນຜູ້ທີ່ມີພືນງານຫລືມີຄວາມຮູ້ແລະມີຄວາມຊ່ຽວຊານຫລືປະສົບການດ້ານກິດຈະການໂທລະຄົມມະນາຄົມຈຳນວນຫນຶ່ງຄົນ

(3) ເປັນຜູ້ທີ່ມີພືນງານແລະປະສົບການດ້ານການຄຸ້ມຄອງຜູ້ບໍລິໂພກ ຈຳນວນຫນຶ່ງຄົນ

(4) ເປັນຜູ້ທີ່ມີພືນງານແລະປະສົບການດ້ານການສົ່ງເສີມສິດແລະເສລີພາບຂອງປະຊາຊົນຈຳນວນຫນຶ່ງຄົນ

ໃຫ້ປະທານວຸດທິສະພາຈັດໃຫ້ມີການດຳເນີນການຄັດເລືອກບຸກຄົນຜູ້ສົມຄວນໄດ້ຮັບການສະເຫນີຊື່ເປັນກຳມະການຈຳນວນສອງເທົ່າຂອງຈຳນວນກຳມະການຕາມວັກຫນຶ່ງ ເພື່ອນຳສະເຫນີໃຫ້ວຸດທິສະພາພິຈາລະນາຄັດເລືອກຕໍ່ໄປທັງນີ້ ຕາມຫລັກເກນແລະວິທີການທີ່ປະທານວຸດທິສະພາກຳຫນົດ

ໃຫ້ຜູ້ໄດ້ຮັບການຄັດເລືອກເປັນກຳມະການປະຊຸມຮ່ວມກັນເພື່ອຄັດເລືອກຜູ້ສົມຄວນເປັນປະທານກຳມະການ

ມາດຕາ 71 ກຳມະການຕິດຕາມແລະປະເມີນຜົນການປະຕິບັດວຽກມີວາລະການດຳລົງຕຳແຫນ່ງຄາວລະສາມປີແລະຈະແຕ່ງຕັ້ງໃຫ້ດຳລົງຕຳແຫນ່ງສອງວາລະຕິດຕໍ່ກັນບໍ່ໄດ້

ກຳມະການຕາມວັກຫນຶ່ງ ຕ້ອງບໍ່ເປັນກຳມະການ ກສທຊ.ກສທ.ກທຄ.ອານຸກຳມະການ ເລຂາທິການ ກສທຊ. ພະນັກງານຫລືລູກຈ້າງຂອງສຳນັກງານ ກສທຊ.ແລະໃຫ້ນຳຄວາມໃນມາດຕາ7ມາດຕາ8ແລະມາດຕາ20(1)(3)(4)ແລະ(5)ມາໃຊ້ບັງຄັບໂດຍອານຸໂລມ

ໃນກໍລະນີທີ່ກຳມະການຕິດຕາມແລະປະເມີນຜົນການປະຕິບັດວຽກພົ້ນຈາກຕຳແຫນ່ງດ້ວຍເຫດອື່ນນອກຈາກການພົ້ນຈາກຕຳແຫນ່ງຕາມວາລະ ໃຫ້ກຳມະການເທົ່າທີ່ເຫລືອຢູ່ປະຕິບັດຫນ້າທີ່ຕໍ່ໄປໄດ້ ແລະໃຫ້ຖືວ່າຄະນະກຳມະການຕິດຕາມແລະປະເມີນຜົນການປະຕິບັດວຽກປະກອບດ້ວຍກຳມະການເທົ່າທີ່ເຫລືອຢູ່ເວັ້ນແຕ່ມີກຳມະການເຫລືອຢູ່ບໍ່ຮອດສາມຄົນ

ວິທີການປະຊຸມແລະການລົງມະຕິໃຫ້ເປັນໄປຕາມລະບຽບທີ່ຄະນະກຳມະການຕິດຕາມແລະປະເມີນຜົ ົນການປະຕິບັດວຽກກຳຫນົດຄ່າຕອບແທນແລະຄ່າໃຊ້ຈ່າຍອື່ນໃນການສັນຫາແລະການປະຕິບັດວຽກຂອງກຳມະການຕິດຕາມແລະປະເມີນຜົນການປະຕິບັດວຽກໃຫ້ເປັນໄປຕາມລະບຽບທີ່ ກສທຊ.ກຳຫນົດ

ມາດຕາ 72 ໃຫ້ຄະນະກຳມະການຕິດຕາມແລະປະເມີນຜົນການປະຕິບັດວຽກ ມີອຳນາດຫນ້າທີ່ຕິດຕາມກວດສອບ ແລະປະເມີນຜົນການດຳເນີນການແລະການບໍລິຫານວຽກຂອງ ກສທຊ.ກສທ.ກທຄ.ສຳນັກງານ ກສທຊ.ແລະເລຂາທິການ ກສທຊ.ແລ້ວແຈ້ງຜົນໃຫ້ ກສທຊ.ຮູ້ພາຍໃນເກົ້າສິບມື້ນັບແຕ່ມື້ສິ້ນປີບັນຊີ ແລະໃຫ້ ກສທຊ.ນຳລາຍງານດັ່ງກ່າວສະເຫນີຕໍ່ລັດຖະສະພາພ້ອມລາຍງານຜົນການປະຕິບັດວຽກປະຈຳປີຂອງ ກສທຊ.ຕາມມາດຕາ76ແລະເປີດເຜີຍລາຍງານດັ່ງກ່າວໃຫ້ປະຊາຊົນຮູ້ທາງລະບົບເຄືອຂ່າຍສາລະສົນເທດຂອງສຳນັກງານ ກສທຊ.ຫລືວິທີການອື່ນທີ່ເຫັນສົມຄວນ

ການປະເມີນຕາມວັກຫນຶ່ງຕ້ອງຢູ່ໃນພື້ນຖານຂໍ້ເທັດຈິງແລະຂໍ້ມູນຕ່າງໆແລະຕ້ອງມີການຮັບຟັງຄວາມຄິດເຫັນຂອງຜູ້ມີສ່ວນໄດ້ເສຍປະກອບດ້ວຍ

ຄະນະກຳມະການອາດມອບຫມາຍໃຫ້ຫນ່ວຍງານຫລືອົງກອນທີ່ມີຄວາມຊ່ຽວຊານເປັນຜູ້ລວບລວມຂໍ້ມູນວິເຄາະແລະປະເມີນຜົນເພື່ອປະໂຫຍດໃນການຈັດເຮັດລາຍງານ

ມາດຕາ 73 ລາຍງານຕາມມາດຕາ72ຢ່າງໜ້ອຍຈະຕ້ອງມີເນື້ອໃນດັ່ງຕໍ່ໄປນີ້

(1) ຜົນການປະຕິບັດວຽກຂອງ ກສທຊ. ກສທ.ກທຄ.ສໍານັກງານ ກສທຊ.ແລະເລຂາທິການ ກສທຊ.

(2) ລາຍງານຂໍ້ເທັດຈິງຫລືຂໍ້ສັງເກດຈາກການປະຕິບັດຕາມອໍານາດໜ້າທີ່ຂອງ ກສທຊ.ໃນສ່ວນທີ່ກ່ຽວກັບການ ປະຕິບັດໜ້າທີ່ຢ່າງມີປະສິດທິພາບແລະຄວາມສອດຄ່ອງກັບນະໂຍບາຍຂອງລັດຖະບານ ພ້ອມທັງຄວາມເຫັນ ແລະຂໍ້ສະເໜີແນະ

(3) ຄວາມເຫັນກ່ຽວກັບລາຍງານປະຈໍາປີທີ ກສທຊ.ໄດ້ຈັດເຮັດຂື້ນຕາມມາດຕາ

(4) ເລື່ອງອື່ນໆທີ່ເຫັນສົມຄວນລາຍງານໃຫ້ ກສທຊ.ລັດຖະສະພາ ຫລືປະຊາຊົນ ຮູ້ໃຫ້ ກສທຊ. ກສທ.ກທຄ. ສໍານັກງານ ກສທຊ.ແລະເລຂາທິການ ກສທຊ.ໃຫ້ຄວາມຮ່ວມມືແລະອໍານວຍຄວາມສະດວກໃຫ້ແກ່ຄະນະກໍາມະການຕິດຕາມແລະປະເມີນຜົນການປະຕິບັດວຽກຕາມທີ່ຮ້ອງຂໍ

## *ໝວດ7*

## *ຄວາມສໍາພັນກັບລັດຖະບານແລະລັດຖະສະພາ*

---------------------------

ມາດຕາ 74 ໃນການດໍາເນີນການຕາມອໍານາດໜ້າທີ່ ກສທຊ.ຕ້ອງດໍາເນີນການໃຫ້ສອດຄ່ອງກັບນະໂຍບາຍທີ່ຄະນະລັດຖະມົນຕີຖະແຫລງໄວ້ຕໍ່ລັດຖະສະພາ

ມາດຕາ 75 ໃນກໍລະນີທີ່ຈະຕ້ອງມີການເຈລະຈາຫລືເຮັດຄວາມຕົກລົງລະຫວ່າງລັດຖະບານແຫ່ງລາດຊະອານາຈັກໄທກັບລັດຖະບານຕ່າງປະເທດຫລືອົງກອນລະຫວ່າງປະເທດໃນເລື່ອງທີ່ກ່ຽວກັບການບໍລິຫານຄື້ນຄວາມຖີ່ ກິດຈະການກະຈາຍສຽງ ກິດຈະການໂທລະທັດ ກິດຈະການໂທລະຄົມມະນາຄົມ ຫລືການອື່ນທີ່ກ່ຽວຂ້ອງ ກສທຊ.ແລະສໍານັກງານ ກສທຊ. ມີໜ້າທີ່ຕ້ອງໃຫ້ຂໍ້ມູນແລະຮ່ວມດໍາເນີນການຕາມທີ່ລັດຖະບານແຈ້ງໃຫ້ຮູ້

ມາດຕາ 76 ໃຫ້ ກສທຊ.ຈັດເຮັດລາຍງານຜົນການປະຕິບັດວຽກປະຈໍາປີໃນດ້ານການບໍລິຫານຄື້ນຄວາມຖີ່ ກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ແລ້ວແຕ່ກໍລະນີ ຊຶ່ງຕ້ອງສະແດງລາຍລະອຍດແຜນວຽກແລະຜົນການປະຕິບັດວຽກ ລາຍລະອຽດກ່ຽວກັບການບໍລິຫານຄື້ນຄວາມຖີ່ ການຈດສັນຄື້ນຄວາມຖີ່ ການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມ ແລ້ວແຕ່ກໍລະນີແລະແຜນການດໍາເນີນວຽກໃນໄລຍະຕໍ່ໄປສະເໜີຕໍ່ຄະນະລັດຖະມົນຕີແລະລັດຖະສະພາພາຍໃນໜຶ່ງຮ້ອຍຊາວມື້ນັບແຕ່ມື້ສິ້ນປີບັນຊີແລະເປີດເຜີຍໃຫ້ປະຊາຊົນຮູ້

ລາຍງານຜົນການປະຕິບັດວຽກປະຈໍາປີຕາມວັກໜຶ່ງຢ່າງໜ້ອຍຕ້ອງມີເນື້ອໃນດັ່ງຕໍ່ໄປນີ້

(1) ຜົນງານຂອງ ກສທຊ.ໃນປີທີ່ລ່ວງມາແລ້ວເມື່ອປຽບທຽບກັັບແຜນງານຫລືໂຄງການທີ່ກໍາໜົດໄວ້

(2) ແຜນງານ ໂຄງການ ແລະແຜນງົບປະມານສໍາຫລັບປີຖັດໄປ

(3) ງົບການເງິນແລະລາຍງານຂອງຜູ້ສອບບັນຊີ ລາຍງານການກວດສອບພາຍໃນ

(4) ບັນຫາແລະອຸປະສັກໃນການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມຕ່າງໆທີ່ມີຄວາມສຳຄັນຕໍ່ປະຊາຊົນ

(5) ຄຸນນະພາບແລະອັດຕາຄ່າບໍລິການໂທລະຄົມມະນາຄົມປະເພດຕ່າງໆທີ່ມີຄວາມສຳຄັນຕໍ່ປະຊາຊົນ

(6) ປະສິດທິພາບແລະປະສິດທິຜົນໃນການພິຈາລະນາເລື່ອງຮ້ອງຮຽນຂອງຜູ້ບໍລິໂພກ

(7) ປະສິດທິພາບແລະປະສິດທິຜົນຂອງກອງທຶນຕາມມາດຕາ52

(8) ລາຍງານກ່ຽວກັບສະພາບການແຂ່ງຂັນຂອງຕະຫລາດໃນການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມປະເພດຕ່າງໆ ລວມທັງຂໍ້ສັງເກດກ່ຽວກັບການກະທຳອັນມີ ລັກສະນະເປັນການຄອບງຳກິດຈະການທັງທາງຕົງແລະທາງອ້ອມທີ່ມີຜົນກະທົບກັບປະໂຫຍດຂອງລັດແລະປະຊາຊົນ

ນາຍົກລັດຖະມົນຕີ ສະພາຜູ້ແທນລາດຊະດອນ ແລະວຸດທິສະພາ ອາດຂໍໃຫ້ ກສທຊ.ຫລືເລຂາທິການ ກສທຊ. ແລ້ວແຕ່ກໍລະນີ ຊີ້ແຈງການດຳເນີນວຽກໃນເລື່ອງໃດເລື່ອງຫນຶ່ງເປັນຫນັງສືຫລືຂໍໃຫ້ມາຊີ້ແຈ້ງດ້ວຍວາຈາກໍ່ໄດ້

## *ຫມວດ8*

## *ບົດກຳຫນົດໂທດ*

------------------------

ມາດຕາ 77 ຜູ້ປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມຜູ້ໃດໄດ້ຮັບຄຳສັ່ງຕາມມາດຕາ 31 ວັກສອງແລ້ວບໍ່ປະຕິບັດຕາມ ໃຫ້ ກສທຊ.ມີອຳນາດປັບໄຫມທາງປົກຄອງບໍ່ເກີນຫ້າລ້ານບາດແລະປັບໄຫມອີກມື້ລະບໍ່ເກີນຫນຶ່ງແສນບາດຕະຫລອດເວລາທີ່ຍັງບໍ່ໄດ້ປະຕິບັດຕາມຄຳສັ່ງ

ມາດຕາ 78 ຜູ້ໃດໃຊ້ຄື້ນຄວາມຖີ່ເພື່ອກິດຈະການກະຈາຍສຽງ ກິດຈະການໂທລະທັດຫລືກິດຈະການໂທລະຄົມມະນາຄົມໂດຍບໍ່ໄດ້ຮັບໃບອານຸຍາດຕາມມາດຕາ41 ວັກຫນຶ່ງ ຫລືມາດຕາ45 ວັກຫນຶ່ງຜູ້ນັ້ນຕ້ອງຮັບໂທດຕາມທີ່ບັນຍັດໄວ້ສຳຫລັບຄວາມຜິດຕາມມາດຕາ66 ແຫ່ງພະລາດຊະບັນຍັດການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດ ປີ ຄ.ສ 2008 ຫລືຕາມມາດຕາ67 ແຫ່ງພະລາດຊະບັນຍັດປະກອບກິດຈະການໂທລະຄົມມະນາຄົມ ປີ ຄ.ສ2001ແລ້ວແຕ່ກໍລະນີ

ມາດຕາ 79 ພະນັກງານເຈົ້າຫນ້າທີ່ ກສທຊ.ຫລືຜູ້ຊຶ່ງໃຊ້ອຳນາດຂອງ ກສທຊ.ທີ່ຮູ້ຫລືໄດ້ຮັບແຈ້ງຈາກບຸກຄົນໃດວ່າມີການໃຊ້ຄື້ນຄວາມຖີ່ອັນເປັນການຝ່າຝືນຫລືບໍ່ປະຕິບັດຕາມພະລາດຊະບັນຍັດນີ້ ຫາກບໍ່ໄດ້ດຳເນີນການບັງຄັບການໃຫ້ເປັນໄປຕາມພະລາດຊະບັນຍັດນີ້ ແລະການກະທຳຫລືງົດເວັ້ນການກະທຳນັ້ນ ບໍ່ເປັນຄວາມຜິດຕາມມາດຕາ 157 ແ ຫ ່ງ ປະມວນກົດຫມາຍອາຍາ ພະນັກງານເຈົ້າຫນ້າທີ່ ກສທຊ.ຫລືຜູ້ຊຶ່ງໃຊ້ອຳນາດຂອງ ກສທຊ.ທີ່ກະທຳການດັ່ງກ່າວ ຕ້ອງຮັບໂທດຕິດຄຸກບໍ່ເກີນສາມປີຫລືປັບໄຫມບໍ່ເກີນຫົກຫມື່ນບາດຫລືທັງຕິດຄຸກທັງປັບໄຫມ

## *ບົດສະເພາະການ*

-----------------

ມາດຕາ 80 ໃນລະຫວ່າງທີ່ການແຕ່ງຕັ້ງ ກສທຊ.ຕາມພະລາດຊະບັນຍັດນີ້ຍັງບໍ່ສຳເລັດໃຫ້ຄະນະກຳມະການກິດຈະການໂທລະຄົມມະນາຄົມແຫ່ງຊາດທີ່ໄດ້ແຕ່ງຕັ້ງຂຶ້ນຕາມພະລາດຊະບັນຍັດການຈັດສັນຄື້ນຄວາມຖີ່ແລະກຳກັບກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສ 2000 ຍັງຄົງປະຕິບັດໜ້າທີ່ຕໍ່ໄປໃນຖານະ ກສທຊ.ຕາມພະລາດຊະບັນຍັດນີ້ ແຕ່ໃນສ່ວນທີ່ກ່ຽວກັບການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດຕາມກົດໝາຍວ່າດ້ວຍການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດໃຫ້ເປັນໄປຕາມກົດໝາຍດັ່ງກ່າວ

ເມື່ອ ກສທຊ.ໄດ້ຮັບການແຕ່ງຕັ້ງແລ້ວ ໃຫ້ຄະນະກຳມະການກິດຈະການໂທລະຄົມມະນາຄົມແຫ່ງຊາດຕາມວັກໜຶ່ງເປັນອັນພົ້ນຈາກໜ້າທີ່

ມາດຕາ 81 ໃຫ້ຄະນະກຳມະການຕາມພະລາດຊະບັນຍັດການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດປີ ຄ.ສ2008 ຄະນະກຳມະການຕາມພະລາດຊະບັນຍັດການປະກອບກິດຈະການໂທລະຄົມມະນາຄົມ ປີ ຄ.ສ2008 ແລະຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດແຫ່ງຊາດຕາມມາດຕາ61ແຫ່ງພະລາດຊະບັນຍັດອົງການກະຈາຍສຽງແລະເຜີຍແຜ່ພາບສາທາລະນະແຫ່ງປະເທດໄທ ປີ ຄ.ສ 2008

ໝາຍຄວາມເຖິງ ກສທຊ.ຕາມພະລາດຊະບັນຍັດນີ້

ໃຫ້ບັນດາອຳນາດໜ້າທີ່ຂອງລັດຖະມົນຕີ ອະທິບໍດີກົມໄປສະນີໂທລະເລກ ແລະເຈົ້າພະນັກງານຜູ້ອອກໃບອານຸຍາດຕາມກົດໝາຍວ່າດ້ວຍວິທະຍຸຄົມມະນາຄົມເປັນອຳນາດໜ້າທີ່ຂອງ ກສທຊ. ຕາມພະລາດຊະບັນຍັດນີ້

ມາດຕາ 82 ເມື່ອມີການແຕ່ງຕັ້ງ ກສທຊ.ແລ້ວໃຫ້ສ່ວນລາດຊະການ ລັດວິສາຫະກິດ ໜ່ວຍງານຂອງລັດຫລືບຸກຄົນໃດທີ່ໄດ້ຮັບຈັດສັນຄື້ນຄວາມຖີ່ຫລືໃຊ້ຄື້ນຄວາມຖີ່ເພື່ອການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມຢູ່ໃນວັນທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບ ມີໜ້າທີ່ແຈ້ງລາຍລະອຽດການໃຊ້ປະໂຫຍດຄື້ນຄວາມຖີ່ ລວມທັງເຫດແຫ່ງຄວາມຈຳເປັນໃນການຖືຄອງຄື້ນຄວາມຖີ່ຕໍ່ ກສທຊ.ຕາມຫລັກເກນແລະໄລຍະເວລາທີ່ ກສທຊ.ກຳໜົດ

ໃນການດຳເນີນການຕາມວັກໜຶ່ງ ໃຫ້ສ່ວນລາດຊະການ ລັດວິສາຫະກິດ ແລະໜ່ວຍງານຂອງລັດແຈ້ງລາຍລະອຽດກ່ຽວກັບການອານຸຍາດ ສຳປະທານ ຫລືສັນຍາ ລວມເຖິງອາຍຸສັນຍາແລະຄ່າສຳປະທານຫລືຄ່າຕອບແທນຕ່າງໆຕາມການອານຸຍາດ ສຳປະທານ ຫລືສັນຍານັ້ນ ຕໍ່ ກສທຊ.ຕາມຫລັກເກນແລະວິທີການທີ່ ກສທຊ.ກຳໜົດແລະໃຫ້ ກສທຊ.ກວດສອບຄວາມຖືກຕ້ອງດ້ວຍກົດໝາຍຂອງການອານຸຍາດ ສຳປະທານຫລືສັນຍານັ້ນ ພ້ອມທັງເປີດເຜີຍຂໍ້ມູນແລະຜົນການກວດສອບໃຫ້ສາທາລະນະຮູ້

ມາດຕາ 83 ຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ຫລືໃຊ້ຄື້ນຄວາມຖີ່ເພື່ອການປະກອບກິດຈະການກະຈາຍສຽງ ກິດຈະການໂທລະທັດທີ່ຖືກຕ້ອງດ້ວຍກົດໝາຍ ຢູ່ໃນວັນທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບແລະໄດ້ປະຕິບັດຕາມມາດຕາ82ແລ້ວໃຫ້ຖືວ່າໄດ້ຮັບອານຸຍາດຈາ ກສທຊ.ຕາມພະລາດຊະບັນຍັດນີ້ ແລະໃຫ້ ກສທຊ.ກຳກັບເບິ່ງແຍງໃຫ້ຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ຫລືໃຊ້ຄື້ນຄວາມຖີ່ນັ້ນປະຕິບັດຕາມພະລາດຊະບັນຍັດນີ້ ກົດໝາຍອື່ນແລະຕາມຫລັກເກນທີ່ ກສທຊ.ກຳໜົດທັງນີ້ ຈົນກວ່າຈະເຖິງກຳໜົດທີ່ຕ້ອງສົ່ງຄືນຄື້ນຄວາມຖີ່ຕາມວັກສາມ

ຄວາມໃນມາດຕາ43 ບໍ່ໃຫ້ໃຊ້ບັງຄັບກັບສ່ວນລາດຊະການແລະລັດວິສາຫະກິດທີ່ນຳຄື້ນຄວາມຖີ່ທີ່ໄດ້ຮັບຈັດສັນໄປໃຫ້ຜູ້ອື່ນປະກອບກິດຈະການໂດຍການອານຸຍາດ ສຳປະທານ ຫລືຕາມສັນຍາທີ່ຖືກຕ້ອງດ້ວຍກົດໝາຍແລະໃຫ້ຜູ້ໄດ້ຮັບອານຸ

ຍາດ ສຳປະທານ ຫລືສັນຍາປະກອບກິດຈະການຕໍ່ໄປໄດ້ສະເພາະໃນຊ່ວງໄລຍະເວລາທີ່ເຫລືອຢູ່ຕາມການອານຸຍາດ ສຳປະທານ ຫລືຕາມສັນຍານັ້ນ

ໃຫ້ ກສທຊ.ກຳຫນົດໄລຍະເວລາທີ່ແນ່ນອນນການໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຫລືໃຊ້ຄື່ນຄວາມຖີ່ສົ່ງຄືນຄື່ນຄວາມຖີ່ດັ່ງກ່າວເພື່ອນຳໄປຈັດສັນໃຫມ່ຫລືປັບປຸງການໃຊ້ຄື່ນຄວາມຖີ່ຕາມກຳຫນົດໄວ້ໃນແຜນແມ່ບົດການບໍລິຫານຄື່ນຄວາມຖີ່ຕາມມາດຕາ48ໂດຍຄຳນຶງຖືງປະໂຫຍດສາທາລະນະແລະຄວາມຈຳເປັນຂອງການປະກອບກິດຈະການແລະການໃຊ້ຄື່ນຄວາມຖີ່ທັງນີ້ໃຫ້ນຳເຫດແຫ່ງຄວາມຈຳເປັນໃນການຖືຄອງຄື່ນຄວາມຖີ່ຕາມທີ່ໄດ້ຮັບແຈ້ງຕາມມາດຕາ82ມາພິຈາລະນາປະກອບດ້ວຍ

ມາດຕາ 84 ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຫລືໃຊ້ຄື່ນຄວາມຖີ່ເພື່ອກິດຈະການໂທລະຄົມມະນາຄົມທີ່ຖືກຕ້ອງດ້ວຍກົດຫມາຍຢູ່ໃນວັນທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບແລະໄດ້ປະຕິບັດຕາມມາດຕາ82ແລ້ວ ໃຫ້ຖືວ່າໄດ້ຮັບອານຸຍາດຈາກ ກສທຊ. ຕາມພະລາດຊະບັນຍັດນີ້ແລະໃຫ້ ກສທຊ.ກຳກັບເບິ່ງແຍງໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຫືໃຊ້ຄື່ນຄວາມຖີ່ນັ້ນປະຕິບັດຕາມພະລາດຊະບັນຍັດນີ້ ກົດຫມາຍອື່ນ ແລະຕາມຫລັກເກນທີ່ ກສທຊ.ກຳຫນົດທັງນີ້ ຈົນກວ່າຈະຖືງກຳຫນົດທີ່ຕ້ອງສົ່ງຄືນຄື່ນຄວາມຖີ່ຕາມວັກສີ່

ຄວາມໃນມາດຕາ46ບໍ່ໃຫ້ໃຊ້ບັງຄັບກັບລັດວິສາຫະກິດທີ່ນຳຄື່ນຄວາມຖີ່ທີ່ໄດ້ຮັບຈັດສັນໄປໃຫ້ຜູ້ອື່ນປະກອບກິດຈະການໂດຍອານອານຸຍາດ ສຳປະທານ ຫລືຕາມສັນຍາທີ່ຖືກຕ້ອງດ້ວຍກົດຫມາຍແລະໃຫ້ຜູ້ໄດ້ຮັບອານຸຍາດສຳປະທານ ຫລືສັນຍາປະກອບກິດຈະການຕໍ່ໄປໄດ້ສະເພາະໃນຊ່ວງໄລຍະເວລາທີ່ເຫລືອຢູ່ຕາມມການອານຸຍາດສຳປະທານ ຫລືຕາມສັນຍານັ້ນ

ເມື່ອພົ້ນກຳຫນົດໄລຍະເວລາສາມປີແຕ່ມື້ທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບ ໃຫ້ລັດວິສາຫະກິດນຳລາຍໄດ້ຈາກຜົນປະກອບການໃນສ່ວນທີ່ໄດ້ຮັບຈາກການໃຫ້ອານຸຍາດ ສຳປະທານ ຫລືສັນຍາຕາມວັກສອງທີ່ລັດວິສາຫະກິດໄດ້ດຳເນີນການຕາມກົດຫມາຍວ່າດ້ວຍການໃຫ້ເອກະຊົນເຂົ້າຮ່ວມວຽກຫລືດຳເນີນການໃນກິດຈະການຂອງລັດ ທັງນີ້ ບໍ່ວ່າຈະໄດ້ດຳເນີນການທັງຫມົດຫລືບາງສ່ວນ ໂດຍໃຫ້ຫັກຄ່າໃຊ້ຈ່າຍດັ່ງຕໍ່ໄປນີ້ແລ້ວເຫລືອເທົ່າໃດໃຫ້ສົ່ງ ກສທຊ.ແລະໃຫ້ ກສທຊ.ນຳສົ່ງເງິນຈຳນວນດັ່ງກ່າວເປັນລາຍໄດ້ແຜ່ນດິນຕໍ່ໄປ

(1) ຄ່າທຳນຽມໃບອານຸຍາດປະກອບກິດຈະການສະເພາະໃນສ່ວນທີ່ຄິດຈາກຖານລາຍໄດ້ທີ່ເກີດຈາກການອານຸຍາດ ສຳປະທານ ຫລືສັນຍາ

(2) ຄ່າໃຊ້ຈ່າຍເພື່ອສະຫນັບສະຫນຸນການຈັດໃຫ້ມີບໍລິການໂທລະຄົມມະນາຄົມພື້ນຖານໂດຍທົ່ວຖືງແລະບໍລິການເພື່ອສັງຄົມຕາມນະໂຍບາຍຂອງລັດຖະບານ ແລະຕາມມາດຕາ50ສະເພາະໃນສ່ວນທີ່ຄິດຈາກຖານລາຍໄດ້ທີ່ເກີດຈາກການອານຸຍາດສຳປະທານຫລືສັນຍາ

(3) ຄ່າໃຊ້ຈ່າຍທີ່ເກີດຂື້ນຈາກການດຳເນີນການຕາມການອານຸຍາດ ສຳປະທານ ຫລືສັນຍາຕາມທີ່ກະຊວງການຄັງກຳຫນົດ

ໃຫ້ ກສທຊ.ກຳຫນົດໄລຍະເວລາທີ່ແນ່ນອນໃນການໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຫລືໃຊ້ຄື່ນຄວາມຖີ່ສົ່ງຄືນຄື່ນຄວາມຖີ່ດັ່ງກ່າວເພື່ອນຳໄປຈັດສັນໃຫມ່ຫລືປັບປຸງການໃຊ້ຄື່ນຄວາມຖີ່ຕາມທີ່ກຳຫນົດໄວ້ໃນແຜ່ນແມ່ບົດການບໍລິຫານຄື່ນຄວາມຖີ່ຕາມມາດຕາ48ໂດຍໃຫ້ນຳຄວາມໃນມາດຕາ83ວັກສາມມາໃຊ້ບັງຄັບໂດຍອານຸໂລມ

ມາດຕາ 85 ໃນວາລະເລີ່ມທຳອິດບໍ່ໃຫ້ນຳບົດບັນຍັດມາດຕາ49ໃນສ່ວນທີ່ກ່ຽວກັບການຈັດໃຫ້ພາກປະຊາຊົນໄດ້ໃຊ້ຄື້ນຄວາມຖີ່ໃນກິດຈະການໂທລະທັດບໍ່ຫນ້ອຍກວ່າຮ້ອຍລະຊາວມາໃຊ້ບັງຄັບທັງນີ້ ຈົນກວ່າ ກສທຊ.ຈະປະກາດໃຫ້ໃຊ້ລະບົບການຮັບສົ່ງສັນຍານວິທະຍຸໂທລະທັດໃນລະບົບດິຈິຕອນແລ້ວ

ໃຫ້ ກສທຊ.ຈັດໃຫ້ມີແຜນແມ່ບົດການບໍລິຫານຄື້ນຄວາມຖີ່ຕາມມາດຕາ48ພາຍໃນໄລຍະເວລາຫນຶ່ງປີ ນັບແຕ່ເມື່ອມີການແຕ່ງຕັ້ງ ກສທຊ.ແລ້ວໂດຍແຜນດັ່ງກ່າວຕ້ອງກຳຫນົດໃຫ້ມີການກຳຫນົດເວລາໃນການປ່ຽນໄປສູ່ລະບົບການຮັບສົ່ງສັນຍານວິທະຍຸໂທລະທັດໃນລະບົບດິຈິຕອນແລະກຳຫນົດເວລາກ່ຽວກັບການຈັດໃຫ້ພາກປະຊາຊົນໄດ້ໃຊ້ຄື້ນຄວາມຖີ່ໃນກິດຈະການໂທລະທັດດ້ວຍ

ຫລັງຈາກປະກາດໃຊ້ແຜນແມ່ບົດບໍລິຫານຄື້ນຄວາມຖີ່ແລ້ວ ໃນຊ່ວງເວລາທີ່ຍັງບໍ່ໄດ້ປະກາດໃຫ້ໃຊ້ລະບົບການຮັບສົ່ງສັນຍານວິທະຍຸໂທລະທັດໃນລະບົບດິຈິຕອນໃຫ້ ກສທຊ.ຈັດສັນຄື້ນຄວາມຖີ່ໃຫ້ພາກປະຊາຊົນໄດ້ໃຊ້ໃນກິດຈະການໂທລະທັດເປັນການຊົ່ວຄາວສະເພາະໃນພື້ນທີ່ ທີ່ມີຄື້ນຄວາມຖີ່ພຽງພໍທີ່ຈະດຳເນີນການຈັດສັນໄດ້

ມາດຕາ 86 ຜູ້ໄດ້ຮັບໃບອານຸຍາດປະກອບກິດຈະການໂທລະຄົມມະນາຄົມທີ່ຄະນະກຳມະການກິດຈະການໂທລະຄົມມະນາຄົມແຫ່ງຊາດມອບຫມາຍໃຫ້ດຳເນີນການຈັດໃຫ້ມີບໍລິການໂທລະຄົມມະນາຄົມພື້ນຖານໂດຍທົ່ວຖືງແລະບໍລິການເພື່ອສັງຄົມຕາມພະລາດຊະບັນຍັດການປະກອບກິດຈະການໂທລະຄົມມະນາຄົມ ປີ ຄ.ສ2001ກ່ອນວັນທີພະລາດຊະບັນຍັດນີ້ໃຊ້ບັງຄັບ ໃຫ້ໄດ້ຮັບຍົກເວັ້ນບໍ່ຕ້ອງນຳສົ່ງຄ່າໃຊ້ຈ່າຍເຂົ້າກ້ອງທຶນຕາມມາດຕາ 50ຈົນກວ່າຈະສິ້ນສຸດໄລຍະເວລາຕາມທີ່ກຳຫນົດໄວ້ໃນປະກາດຄະນະກຳມະການກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງຫລັກເກນ ວິທີການແລະເງື່ອນໄຂການຈັດໃຫ້ມີບໍລິການໂທລະຄົມມະນາຄົມພື້ນຖານໂດຍທົ່ວຖືງແລະບໍລິການເພື່ອສັງຄົມ

ມາດຕາ 87 ບັນດາໃບອານຸຍາດທີ່ອອກໂດຍຖືກຕ້ອງຕາມກົດຫມາຍພະລາດຊະບັນຍັດວິທະຍຸຄົມມະນາຄົມປີ ຄ.ສ 1955ພະລາດຊະບັນຍັດອົງກອນຈັດສັນຄື້ນຄວາມຖີ່ແລະກຳກັບກິດຈະການວິທະຍຸກະຈາຍສຽງວິທະຍຸໂທລະທັດ ແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສ 2000 ພະລາດຊະບັນຍັດການປະກອບກິດການກະຈາຍສຽງແລະກິດຈະການໂທລະທັດປີ ຄ.ສ2008 ແລະພະລາດຊະບັນຍັດການປະກອບກິດຈະການໂທລະຄົມມະນາຄົມ ປີ ຄ.ສ2001 ກ່ອນມື້ທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບ ໃຫ້ຄົງໃຊ້ໄດ້ຕໍ່ໄປຈົນກວ່າຈະສິ້ນອາຍຸ ແລະໃຫ້ຖືວ່າເປັນໃບອານຸຍາດທີ່ອອກຕາມພະລາດຊະບັນຍັດນີ້ໂດຍໃຫ້ ກສທຊ. ກຳກັບເບິ່ງແຍງໃຫ້ຜູ້ໄດ້ຮັບໃບອານຸຍາດປະຕິບັດຕາມພະລາດຊະບັນຍັດນີ້ກົດຫມາຍອື່ນທີ່ກ່ຽວຂ້ອງແລະຕາມຫລັກເກນທີ່ ກສທຊ.ກຳຫນົດ

ໃບອານຸຍາດໃດຕາມວັກຫນຶ່ງທີ່ໃຫ້ສູດໃນການຖືຄອງຫລືໃຊ້ຄື້ນຄວາມຖີ່ແລະບໍ່ໄດ້ກຳຫນົດມື້ສິ້ນສຸດອາຍຸໃຫ້ຄົງໃຊ້ໄດ້ຕໍ່ໄປຈົນກວ່າຈະຖືງວັນທີ່ ກສທຊ.ກຳຫນົດໃຫ້ໃບອານຸຍາດດັ່ງກ່າວສິ້ນສຸດລົງ ໂດຍໃຫ້ນຳຄວາມໃນມາດຕາ83ວັກສາມມາໃຊ້ບັງຄັບໂດຍອານຸໂລມ

ມາດຕາ 88 ພາຍໃນຫນຶ່ງຮ້ອຍສາວມື້ນັບແຕ່ມື້ທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບ ໃຫ້ ກສທຊ.ອອກໃບອານຸຍາດໃຫ້ໃຊ້ຄື້ນຄວາມຖີ່ແລະໃບອານຸຍາດປະກອບກິດຈະການຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ ໃຫ້ແກ່ອົງການກະຈາຍສຽງແລະແພ່ພາບສາທາລະນະແຫ່ງປະເທດໄທຕາມລັກສະນະແລະປະເພດຂອງການປະກອບກິດຈະການ ລວມທັງຂອບເຂດການໃຫ້ບໍລິການເທົ່າທີ່ມີຢູ່ໃນວັນທີພະລາດຊະບັນຍັດນີ້ໃຊ້ບັງຄັບ

ການໃຊ້ຄື້ນຄວາມຖີ່ເພື່ອປະກອບກິດຈະການເພີ່ມເຕີມຈາກທີ່ໄດ້ຮັບໃບອານຸຍາດຕາມວັກຫນຶ່ງຕ້ອງສອດຄ່ອງກັບແຜນແມ່ບົດການບໍລິຫານຄື້ນຄວາມຖີ່ ແລະຕ້ອງໄດ້ຮັບໃບອານຸຍາດຈາກ ກສທຊ.ໃນການນີ້ ກສທຊ.ຈະກຳຫນົດເງື່ອນໄຂໃດໆ ທີ່ຈຳເປັນເພື່ອປະໂຫຍດສາທາລະນະກໍ່ໄດ້

ການປະກອບກິດຈະການຂອງອົງການກະຈາຍສຽງແລະແພ່ພາບສາທາລະນະແຫ່ງປະເທດໄທໃຫ້ຢູ່ພາຍໃຕ້ພະລາດຊະບັນຍັດນີ້ພຽງເທົ່າທີ່ບໍ່ຂັດຫລືແຍ້ງກັບກົດຫມາຍວ່າດ້ວຍອົງການກະຈາຍສຽງແລະແພ່ພາບສາທາລະນະແຫ່ງປະເທດໄທ

ໃນລະຫວ່າງທີ່ຍັງບໍ່ໄດ້ຮັບໃບອານຸຍາດຕາມວັກຫນຶ່ງ ໃຫ້ອົງການກະຈາຍສຽງແລະແພ່ພາບສາທາລະນະແຫ່ງປະເທດໄທປະກອບກິດຈະການຕໍ່ໄປນີ້

ມາດຕາ 89 ໃຫ້ໂອນບັນດາກິດຈະການ ຊັບສິນ ສິດທິ ຫນ້າທີ່ ຫນີ້ ພະນັກງານແລະລູກຈ້າງແລະເງິນງົບປະມານຂອງສຳນັກງານຄະນະກຳມະການກິດຈະການໂທລະຄົມມະນາຄົມແຫ່ງຊາດທີ່ມີຢູ່ໄປເປັນຂອງສຳນັກງານ ກສທຊ.ຕາມພະລາດຊະບັນຍັດນີ້

ໃຫ້ພະນັກງານແລະລູກຈ້າງທີ່ໂອນໄປຕາມວັກຫນຶ່ງໄດ້ຮັບເງິນເດືອນ ເງິນປະຈຳຕຳແຫນ່ງຫລືຄ່າຈ້າງລວມທັງສິດແລະປະໂຫຍດຕ່າງໆເທົ່າກັບທີ່ເຄີຍໄດ້ຮັບຢູ່ເກົ່າໄປພາງໆກ່ອນ ຈົນກວ່າຈະໄດ້ບັນຈຸແລະແຕ່ງຕັ້ງໃຫ້ດຳລົງຕຳແຫນ່ງໃນສຳນັກງານ ກສທຊ.ແຕ່ຈະແຕ່ງຕັ້ງໃຫ້ໄດ້ຮັບເງິນເດືອນຫລືຄ່າຈ້າງຕ່ໍາກວ່າເງິນເດືອນຫລືຄ່າຈ້າງທີ່ໄດ້ຮັບຢູ່ເກົ່ານັັ້ນບໍ່ໄດ້

ໃນກໍລະນີທີ່ພະນັກງານຫລືລູກຈ້າງຜູ້ໃດຢູ່ພາຍໃຕ້ລະບຽບຫລືສັນຍາຈ້າງທີ່ບໍ່ໄດ້ກຳຫນົດໄລຍະເວລາການຈ້າງ ບໍ່ໃຫ້ຖືວ່າການຈ້າງໂດຍບໍ່ມີກຳຫນົດໄລຍະເວລາດັ່ງກ່າວເປັນສິດແລະປະໂຫຍດຕາມວັກສອງ

ມາດຕາ 90 ໃນວາລະເລີ່ມທຳອິດ ໃຫ້ດຳເນີນການແຕ່ງຕັ້ງເລຂາທິການ ກສທຊ.ຕາມພະລາດຊະບັນຍັດນີ້ພາຍໃນກຳຫນົດເກົ້າສິບມື້ນັບແຕ່ມື້ທີ່ມີການແຕ່ງຕັ້ງ ກສທຊ.ຕາມພະລາດຊະບັນຍັດນີ້

ໃນລະຫວ່າງທີ່ຍັງບໍ່ມີເລຂາທິການ ກສທຊ.ຕາມພະລາດຊະບັນຍັດນີ້ ໃຫ້ເລຂາທິການຄະນະກຳມະການກິດຈະການໂທລະຄົມມະນາຄົມແຫ່ງຊາດຕາມພະລາດຊະບັນຍັດອົງກອນຈັດສັນຄື້ນຄວາມຖີ່ແລະກຳກັບເບິ່ງແຍງກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສ 2000ຊຶ່ງດຳລົງຕຳແຫນ່ງຢູ່ໃນມື້ກ່ອນວັນທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບດຳລົງຕຳແຫນ່ງເລຂາທິການ ກສທຊ.ໄປພາງໆກ່ອນ

ມາດຕາ 91 ໃຫ້ໂອນເງິນແລະຊັບສິນຂອງກອງທືນພັດທະນາກິດຈະການກະຈາຍສຽງແລະກິດຈະການໂທລະທັດເພື່ອປະໂຫຍດສາທາລະນະແລະກອງທືນພັັດທະນາກິດຈະການໂທລະຄົມມະນາຄົມເພື່ອປະໂຫຍດສາທາລະນະຕາມພະລາດຊະບັນຍັດອົງກອນຈັດສັນຄື້ນຄວາມຖີ່ແລະກຳກັບກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສ2000 ທີ່ມີຢູ່ໃນວັນທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບ ໄປເປັນຂອງກອງທືນຕາມພະລາດຊະບັນຍັດນີ້

ມາດຕາ 92 ໃຫ້ໂອນບັນດາກິດຈະການ ຊັບສິນ ສິດທິ ຫນ້າທີ່ ຂອງກົມປະຊາສຳພັນສຳນັກນາຍົກລັດຖະມົນຕີໃນສ່ວນທີ່ກ່ຽວກັບກອງວຽກຄະນະກຳມະການກິດຈະການວິທະຍຸກະຈາຍສຽງແລະວິທະຍຸໂທລະທັດແຫ່ງຊາດ ກົມປະຊາສຳພັນສຳນັກນາຍົກລັດຖະມົນຕີ ທີ່ມີຢູ່ໃນວັນທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບ ໄປເປັນຂອງສຳນັກງານ ກສທຊ.ເວັ້ນແຕ່ເງິນງົບປະມານຫມວດເງິນເດືອນແລະຄ່າຈ້າງປະຈຳຊຶ່ງມີຜູ້ຄອງຢູ່ໃຫ້ໂອນໄປເປັນຂອງກົມປະຊາສຳພັນ ສຳນັກນາຍົກລັດຖະມົນຕີ

ມາດຕາ 93 ຂ້າລາດຊະການແລະລູກຈ້າງຂອງກອງວຽກຄະນະກຳມະການກິດຈະການວິທະຍຸກະຈາຍສຽງແລະວິທະຍຸໂທລະທັດແຫ່ງຊາດ ກົມປະຊາສຳພັນ ສຳນັກນາຍຍົກລັດຖະມົນຕີ ທີ່ດຳລົງຕຳແໜ່ງຢູ່ໃນມື້ກ່ອນວັນທີພະລາດຊະບັນຍັດນີ້ໃຊ້ບັງຄັບ ຖ້າສະໝັກໃຈຈະໂອນໄປເປັນພະນັກງານຫລືລູກຈ້າງຂອງສຳນັກງານ ກສທຊ.ເມື່ອໄດ້ແຈ້ງຄວາມຈຳນົງເປັນໜັງສືຕໍ່ຜູ້ບັງຄັບບັນຊາພາຍໃນເກົ້າສິບມື້ນັບແຕ່ມື້ທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບໃຫ້ສຳນັກງານ ກສທຊ.ບັນຈຸແລະແຕ່ງຕັ້ງຂ້າລາດຊະການຫລືລູກຈ້າງຜູ້ນັ້ນເປັນພະນັກງານຫລືລູກຈ້າງຂອງສຳນັກງານ ກສທຊ.ຕາມຫລັກເກນທີ່ ກສທຊ.ກຳໜົດແຕ່ຈະກຳໜົດໃຫ້ໄດ້ຮັບເງິນເດືອນຫລືຄ່າຈ້າງຕ່ຳກວ່າເງິນເດືອນຫລືຄ່າຈ້າງທີ່ໄດ້ຮັບຢູ່ເກົ່າບໍ່ໄດ້ ສຳຫລັບຜູ້ທີ່ບໍ່ໄດ້ແຈ້ງຄວາມຈຳນົງພາຍໃນໄລຍະເວລາດັ່ງກ່າວໃຫ້ກັບໄປປະຕິບັດໜ້າທີ່ໃນກົມປະຊາສຳພັນ ສຳນັກງານນາຍຍົກລັດຖະມົນຕີ

ໃນລະຫວ່າງທີ່ຍັງບໍ່ມີ ກສທຊ.ຕາມພະລາດຊະບັນຍັດນີ້ໃຫ້ອຳນາດຂອງ ກສທຊ.ຕາມວັກໜຶ່ງເປັນອຳນາດຂອງຄະນະກຳມະການກິດຈະການໂທລະຄົມມະນາຄົມແຫ່ງຊາດທີ່ໄດ້ແຕ່ງຕັ້ງຂື້ນຕາມພະລາດຊະບັນຍັດອົງກອນຈັດສັນຄື່ນຄວາມຖີ່ແລະກຳກັບເບິ່ງແຍງກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສ 2000

ມາດຕາ 94 ການບັນຈຸແລະແຕ່ງຕັ້ງຂ້າລາດຊະການຕາມມາດຕາ93ໃຫ້ຖືວ່າເປັນການໃຫ້ອອກຈາກລາດຊະການເພາະເລີກຈ້າງຫລືຍຸບຕຳແໜ່ງຕາມກົດໝາຍວ່າດ້ວຍບຳເໜັດບຳນານຂ້າລາດຊະການ ຫລືກົດໝາຍວ່າດ້ວຍກອງທຶນບຳເໜັດບຳນານຂ້າລາດຊະການ

ການບັນຈຸແລະແຕ່ງຕັ້ງລູກຈ້າງຕາມມາດຕາ93ໃຫ້ຖືວ່າເປັນການອອກຈາກວຽກເພາະທາງລາດຊະການຍຸບຕຳແໜ່ງຫລືທາງລາດຊະການເລີກຈ້າງໂດຍບໍ່ມີຄວາມຜິດ ແລະໃຫ້ໄດ້ຮັບບຳເໜັດຕາມລະບຽບກະຊວງການຄັງວ່າດ້ວຍບຳເໜັດລູກຈ້າງ

ມາດຕາ 95 ໃຫ້ບັນດາລະບຽບ ຂໍ້ບັງຄັບ ປະກາດ ຫລືຄຳສັ່ງທີ່ອອກຕາມພະລາດຊະບັນຍັດອົງກອນຈັດສັນຄື່ນຄວາມຖີ່ແລະກຳກັບເບິ່ງແຍງກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ແລະກິດຈະການໂທລະຄົມມະນາຄົມປີ ຄ.ສ 2000 ຊຶ່ງຖືກຕ້ອງດ້ວຍກົດໝາຍແລະມີຜົນບັງຄັບໄດ້ຢູ່ໃນວັນທີ່ພະລາດຊະບັນຍັດນີ້ໃຊ້ບັງຄັບ ຍັງຄົງໃຊ້ບັງຄັບໄດ້ຕໍ່ໄປເທົ່າທີ່ບໍ່ຂັດຫລືແຍ້ງກັບພະລາດຊະບັນຍັດນີ້ ທັງນີ້ ຈົນກວ່າຈະມີລະບຽບ ຂໍ້ບັງຄັບ ປະກາດຫລືຄຳສັ່ງທີ່ອອກຕາມພະລາດຊະບັນຍັດນີ້ໃຊ້ບັງຄັບ

ຜູ້ຮັບສະໜອງພະບາຣົມມະລາດຊະອົງການ

ອະພິສິດ ເວດຊາຊີວະ

ນາຍຍົກລັດຖະມົນຕີ

ຫມາຍເຫດ: ເຫດຜົນໃນການປະກາດໃຊ້ພະລາດຊະບັນຍັດສະບັບນີ້ ຄື ໂດຍທີ່ມາດຕາຂອງລັດຖະທຳມະນູນແຫ່ງລາດຊະອານາຈັກໄທ ໄດ້ບັນຍັດໃຫ້ມີອົງກອນຂອງລັດທີ່ເປັນອິສະຫລຸອົງກອນຫນຶ່ງເຮັດຫນ້າທີ່ດຳເນີນການຈັດສັນຄື່ນຄວາມຖີ່ແລະກຳກັບການປະກອບກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ແລະກິດຈະການໂທລະຄົມມະນາຄົມ ທັງນີ້ ຕາມທີ່ກົດຫມາຍບັນຍັດແລະມາດຕາບັນຍັດໃຫ້ກົດຫມາຍຈັດຕັ້ງອົງກອນທີ່ຕາຂື້ນຈະຕ້ອງມີສາລະສຳຄັນໃຫ້ມີຄະນະກຳມະການສະເພາະດ້ານເປັນຫນ່ວຍຍ່ອຍພາຍໃນອົງກອນນັ້ນແຍກຕ່າງຫາກຈາກກັນ ເຮັດຫນ້າທີ່ກຳກັບເບິ່ງແຍງການປະກອບກິດຈະການວິທະຍຸກະຈາຍສຽງແລະວິທະຍຸໂທລະທັດ ແລະກຳກັບການປະກອບກິດຈະການໂທລະຄົມມະນາຄົມ ແລະມີລາຍລະອຽດວ່າດ້ວຍການກຳກັບເບິ່ງແຍງແລະຄຸ້ມຄອງການດຳເນີນກິດຈະການ ການຈັດໃຫ້ມີກອງທຶນພັດທະນາຊັບພະຍາກອນສື່ສານແລະສົ່ງເສີມໃຫ້ພາກປະຊາຊົນມີສ່ວນຮ່ວມໃນການດຳເນີນການສື່ມວນຊົນສາທາລະນະ ປະກອບກັບພະລາດຊະບັນຍັດອົງກອນຈັດສັນຄື່ນຄວາມຖີ່ແລະກຳກັບເບິ່ງແຍງກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ ປີ ຄ.ສໄດ້ໃຊ້ບັງຄັບມາເປັນໄລຍະເວລາດົນນານແລ້ວແຕ່ຍັງບໍ່ເກີດຜົນໃນທາງປະຕິບັດເທົ່າທີ່ຄວນ ເຮັດໃຫ້ເກີດຂໍ້ຕິດຂັດໃນການດຳເນີນການຫລາຍປະການລວມທັງຍັງມີບົບບັນຍັດທີ່ບໍ່ສອດຄ່ອງກັບລັດຖະທຳມະນູນແຫ່ງລາດຊະອານາຈັກໄທສົມຄວນກຳຫນົດໃຫ້ຈັດຕັ້ງອົງກອນຂອງລັດທີ່ເປັນອິສະຫລະອົງກອນຫນຶ່ງເຮັດຫນ້າທີ່ດຳເນີນການຈັດສັນຄື່ນຄວາມຖີ່ແລະກຳກັບເບິ່ງແຍງການປະກອບກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ແລະກິດຈະການໂທລະຄົມມະນາຄົມ ລວມທັງກຳຫນົດຂອບເຂດການດຳເນີນວຽກຂອງອົງກອນແລະການກຳກັບເບິ່ງແຍງການປະກອບກິດຈະການດັ່ງກ່າວ ແລະປັບປຸງກົດຫມາຍວ່າດ້ວຍອົງກອນຈັດສັນຄື່ນຄວາມຖີ່ແລະກຳກັບກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດ ແລະກິດຈະການໂທລະຄົມມະນາຄົມໃຫ້ເຫມາະສົມຍິ່ງຂື້ນ ເພື່ອໃຫ້ເປັນໄປຕາມບົບບັນຍັດຂອງລັດຖະທຳມະນູນແຫ່ງລາດຊະອານາຈັກໄທ ຈຶ່ງຈຳເປັນຕ້ອງຕາພະລາດຊະບັນຍັດນີ້

This translated version is prepared with the sole purpose of facilitating the comprehension of foreign participants in the telecommunication rules and regulations and shall not in any event or by any reason be construed or interpreted as having effect in substitution for supplementary to the Thai version thereof. If its translation to other languages is in contrary to Thai version, the latter shall prevail.
Please note that the translation has not been subjected to an official review by the Office of the National Broadcasting and Telecommunications Commission. The Office of NBTC, accordingly, shall not undertake any responsibility for its accuracy, nor be held liable for any loss or damages arising from or in connection with its use.